CHAMPA 占芭 ຈຳປາ

04/2014 ສະບັບທີ 103



# ເດີນຕາມກະແສຕົ້ນຕໍ ເຕົ້າໂຮມກຳລັງແຮງທາງບວກ

# ທະນາຄານລາວຈີນສ້າງຊີວິດທະນາຄານຂ້າມຊາດ

# ມະຫາວິທະຍາໄລຕີ່ງມານ

ISSN 1673-3266

9 771673 326056 04

Value Related To History
Creation Leading To Future

# 心以致远
# 行于维新




## ນ້ຳໃຈກວ້າງຂວາງສູງສົ່ງ
## ມຸ່ງໝັ້ນການປ່ຽນແປງໃໝ່

富滇銀行
FUDIAN BANK
ທະນາຄານຟູດຽນ

www.fudian-bank.com 网上银行 | www.087196533.com 手机银行 | 0871－96533 24小时服务热线

ທະນາຄານອິນເຕີເນັດ ທະນາຄານໂທລະສັບມືຖື ສາຍດ່ວນບໍລິການ 24 ຊົ່ວໂມງ

# MEKONG HOTEL
## 湄 公 酒 店

服务中国人，万象有湄公；入住湄公，如在家中。

# ໂຮງແຮມ ແມ່ຂອງ




湄公酒店建于1994年，是中国石油辽阳石油化纤公司与老挝政府合资经营的三星级酒店。酒店地理位置优越，地处万象市中心，距商业区仅500米，离机场2公里。前临老挝国家重要交通枢纽13号公路，后依东南亚名河－湄公河300米，与泰国隔河相望。

酒店拥有四栋建筑楼，建筑面积1万平方米，设有标准客房44间、商务房6间、豪华套房3间、公寓56套。客房宽敞明亮，装饰典雅，舒适安全，并为您提供24小时保安服务。酒店下设北京饭庄、绿洲旅游公司及友谊夜总会。

我们以“宾客至上，服务第一”为宗旨，随时恭候您的光临。



Welcome to Mekong Hotel, which was co-founded by CNPC Liaoyang Company and Lao government in 1994.The hotel is located downtown in Vientiane, only 500 meters away from the commercial district and Watty International Airport is just 2 Km away. The Lao important 13th road is right adjacent to the hotel and the famous Mekong river is only 300 meters away at the back of the hotel.

Occupying 10,000 square meters, Mekong Hotel consist of 4 buildings in which there are 44 hotel standard rooms, 6 executive rooms, 3 executive suites and 56 suites of apartment rooms. All are well equipped and secured with proper and reliable security facilities. At the same time, we offer security service 24 hours a day. Beijing restaurant, Greenland Tourism Co. and Friendship night Club is affiliated to the hotel as well.

We are looking forward to your coming. Please enjoy the hospitality of our staff.







地址/Address：Ban sithanneua,Souphanouvong Rd.,Vientiane
电话/Reception：00856 21 212937/212938/212939 传真/Fax：00856 21 212822
网址/Website:www.mekong－hotel.com Email：客房 reservation@mekong－hotel.com 旅游服务 greenlandtour@mekong－hotel.com




ທ່ານ ນາງປານີ ຢາທໍ່ຕູ້ (ຂວາມື 2) ປະທານສະພາແຫ່ງຊາດລາວ, ທ່ານຈາວຈິນ(ຊ້າຍມື1) ກຳມະການປະຈຳຄະນະພັກແຂວງ, ຫົວໜ້າຄະນະໂຄສະນາຄະນະພັກແຂວງຢຸນນານພັກຄອມມູນິດຈີນ, ທ່ານບໍ່ແສງຄຳ ວົງດາລາ(ຊ້າຍມື2) ລັດຖະມົນຕີວ່າການກະຊວງຖະແຫຼງຂ່າວວັດທະນະທຳແລະທ່ອງທ່ຽວແຫ່ງ ສປປ ລາວ, ທ່ານກວນຮວາປີງ(ຂວາມື1)ເອກອັກຄະລັດຖະທູດຜູ້ມີອຳນາດເຕັມ ສປ ຈີນປະຈຳລາວຮ່ວມກັນລິເລີ່ມກົດປຸ່ມໄຟດອກງານລາຕີມ່ວນຊື່ນແບບຄອບຄົວ ຮ່ວມສະຫຼອງບຸນກຸດຈີນ-ລາວ.

老挝国会主席巴妮·叶陶都(右二)、中共云南省委常委、省委宣传部部长赵金(左一)、老挝新闻文化旅游部部长波显坎·翁达拉(左二)、中国驻老挝大使馆关华兵(右一)共同启动“中老情·合家欢”春节联欢晚会焰火　杨 云 图

# ສາລະບານ

04/2014 ສະບັບທີ 103










## ສາລະຄະດີພິເສດ 本刊特稿

04.ເດີນຕາມກະແສຕົ້ນຕໍ ເຕົ້າໂຮມກຳລັງແຮງທາງບວກ

--ຜູ້ແທນກອງປະຊຸມສອງສະພາຈີນຫາລືກ່ຽວກັບການປະຕິຮູບຢ່າງເລິກເຊິ່ງ ແລະ ຮອບດ້ານ

10. “ຖືໃຈປະຊາຊົນເປັນໃຈຕົວເອງ”

-ທ່ານນາຍົກລັດຖະມົນຕີ ລີເຄີ່ຊຽງ ພົບປະກັບນັກຂ່າວຈີນ ແລະ ຕ່າງປະເທດ

## ຄວາມໄຝ່ຝັນຂອງຈີນ 中国梦

17.ດ່ານຊີງສຸຍເທີມື້ງຕົ່ງ

19.ດ່ານຊ່າງຢ່ອນ

19.ດ່ານນານຊານເຈັ້ນຄ່າງ

## ປະຕູເມືອງຈີນ 中国之窗

22.ອີອູ ເມືອງການຄ້າເຄື່ອງໄຟຟ້າພົນເດັ່ນອັນໃນໂລກ

## ການໄປມາຫາສູ່ກັນສັນຖະວະໄມຕີຈີດ 友好往来

26.ທະນາຄານລາວຈີນສ້າງຊີວິດທະນາຄານບ້ານຊາດ

28.ສ້າງໄມຕີຈິດດ້ວຍປັ້ນ ສົ່ງເສີມສາຍພົວພັນຈີນ-ລາວ

30.ພິທີສະເຫຼີມສະຫຼອງວັນແມ່ຍິງສາກົນ 8 ມີນາ ທີ່ສະຖານກົງສຸນໃຫຍ່ແຫ່ງ ສປປ ລາວທີ່ນະຄອນຊຽງໄຮ້

31. ບານເຕະມິດຕະພາບຊີງອັນສະຖານກົງສຸນໃຫຍ່ແຫ່ງ ສປປ ລາວທີ່ນະຄອນຊຽງໄຮ້

## ລວມຈຸດຢຸນນານ 聚焦云南

34.ທາງດ່ວນຕ້າລີ-ລີ່ຈຽງເລີ່ມເປີດໃຫ້ລົດແລ່ນຢ່າງເປັນທາງການ

37.ວິສາຫະກິດເອກະຊົນແຂວງຢຸນນານກາຍເປັນກຳລັງແຮງແກ່ນໃນການລົງທຶນຢູ່ຕ່າງປະເທດ

38.ໃບຊາບູຮານລ້ານຊ້າງຈຳໜ່າຍຢູ່ຊານຟານຊິສໂກ

## ການທ່ອງທ່ຽວທົ່ວສະມາຈອນ 旅游纵横

40.ສຳຜັດກັບຮູບວິວຕ່າງປະເທດຢູ່ດອນຊ່ານຽນ

## ລຸນຊົມວັດທະນະທຳ 文化博览

46.ແກ້ວໃສ(ຜະລຶກຫີນ)ດົ່ງໄຫ່ະ ໂລກອັດສະຈັນແຫ່ງຄວາມໂປ່ງໃສ

## ໂຮງຮຽນຊັ້ນທີ່ມີສະເໜ່ 魅力名校

48.ມະຫາວິທະຍາໄລຕົ່ງນານ

## ປະຊາຊາດຈີນ 中华民族

52.ລຸນສົມບັດເຄົາລົບນັບຖືຜູ້ເຖົ້າຂອງເຜົ່າເຕີອັງ

## ບໍລິການເພື່ອທ່ານ 为您服务

54.ໝາກອິນດາ

## ຮຽນພາສາຈີນ 学汉语

60.ຮຽນພາສາຈີນ



国内广告总代理：
云南恩泽文化传播有限公司
网络商务代理：
昆明艾玛尼网络科技有限公司
办公室电话：
86–871–64668646（传真）
广告部电话：
86–871–64668646
http://www.gms-seasa.com
Email:zrz125576@live.cn
邮编：650034

ຕົວແທນໃຫຍ່ໂປສະເຕີພາຍໃນປະເທດ:
ບໍລິສັດເຜີຍແຜ່ວັດທະນະທຳເອີນເຈີຢຸນນານຈຳກັດ
ຕົວແທນອິນເຕີເນັດຝ່າຍການຄ້າ:
ບໍລິສັດວິທະຍາສາດເຕັກນິກອິນເຕີເນັດອາຍມານີຄຸນມິງຈຳກັດ
ເບີໂທຫ້ອງການ: 86-871-64668646 (ແຟັກ)
ເບີໂທພາກສ່ວນໂປສະເຕີ: 86-871-64668646
http:||www.gms-seasa.com
Email:zrz125576@live.cn
ລະຫັດໄປສະນີ: 650034

http://www.yunnangateway.com
E-mail: ynzhanba@163.com



**主　管** 中华人民共和国国务院新闻办公室
ເຈົ້າໜ້າທີ່ຄຸ້ມຄອງໂດຍ ຫ້ອງການຂ່າວຄະນະລັດຖະບານ ສປ ຈີນ
**主　办** 云南省人民政府新闻办公室
ຈັດທຳໂດຍ ຫ້ອງການຂ່າວປົກຄອງແຂວງຢຸນນານ
**编辑出版**《占芭》杂志社
ຮຽບຮຽງພິມຈຳໜ່າຍ ສຳນັກພິມວາລະສານ《ຈຳປາ》

**总顾问** 赵 金 卯稳国
ທີ່ປຶກສາໃຫຍ່ ຈາວຈິນ ເມົາເວິນກົວ
**顾　问** 宣宇才 蔡春生 张瑞才 李联斌
ທີ່ປຶກສາ ຊວນຢູ່ໄຊ ໄຊຊຸນແຊງ ຈ່າງຢູ່ໄຊ ລີລຽນປິ່ນ
**社　长** 李 茜
ຜູ້ອຳນວຍການໃຫຍ່ ລີສ້ຽນ
**副社长** 郭建初 吴静波 田虎青 海 江
ຮອງຜູ້ອຳນວຍການໃຫຍ່ ກົວຈຽນຊູ ອູຈິນໂປ ທຽນຫູຊິນ ໄຮຈຽງ
**总编辑** 杨 云
ຫົວໜ້າບັນນາທິການໃຫຍ່ ຢາງຢູນ
**总编室主任** 禹正玉
ຫົວໜ້າ ພິມຈຳໜ່າຍ ຢູຍເຈິງຢູຍ
**编辑总监** 李 可
ຫົວໜ້າຫ້ອງການບັນນາທິການ ຫຼີເຄີ
**编辑部副主任** 苏雯雯
ຮອງຫົວໜ້າພະແນກບັນນາທິການ ຊູ່ເວີນເວີນ
**翻　译** 北京外国语大学亚非学院 李小元 吴敦信 刘仁和
ຜູ້ແປພາສາລາວ ມະຫາວິທະຍາໄລພາສາຕ່າງປະເທດປັກກິ່ງ ຫຼີຊຽວຢວນ ອູຕຶມສິນ ລິວເຢີນເຫີ
**老挝文译审** 刘仁和
ຜູ້ກວດແກ້ພາສາລາວ ລິວເຢີນເຫີ
**老挝文编辑** 白 艳
ບັນນາທິການພາສາລາວ ປາຍຍຽນ
**美术总监** 祝 群
ຜູ້ຄຸ້ມງານຝ່າຍສິລະປະ ຈູ້ສິນ
**网络总监** 张守义　**总监助理** 张俊宏
ຜູ້ຄຸ້ມງານຝ່າຍອິນເຕີເນັດ ຈາງເຊີຢີ ຜູ້ຊ່ວຍຜູ້ຄຸ້ມງານ ຈາງຈຸນຮອງ
**网络部副主任** 李 涛　**编辑** 李文君 赵艳娟
ຮອງຫົວໜ້າພະແນກອິນເຕີເນັດ ລີທາວ ບັນນາທິການ ລີເວີນຈູນ ໂຈ້ວຢ້ຽນຈຽນ
**发　行** 陈 龙 邹和平
ພິມຈຳໜ່າຍແຈກຈ່າຍ ແຊງລົ້ງ ໂຈວເຮີພິງ
**编　务** 陆 蕊 汪伟云 贺新倩
ພະນັກງານຝ່າຍປົກຄອງ ລູຢູຍ ຫວ່າງເວີຍຢູນ ເຮີຊິ່ງສ້ຽງ



**发行范围：**国内外公开发行
**出版日期：**每月五日
**邮发代号：**64－36
**国际标准刊号：**ISSN 1673－3266
**国内统一刊号：**CN53－1200/D

ພິມຈຳໜ່າຍເປີດເຜີຍ: ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ: ວັນທີ 5 ທຸກເດືອນ
ລະຫັດວາລະສານມາດຖານສາກົນ: ISSN 1673–3266
ລະຫັດວາລະສານປະເທດຈີນ: CN53–1200/D

**地址：**云南省昆明市环城西路577号
**编辑部电话：**86–871–64112975
**办公室电话：**86–871–64101644
**传真：**86–871–64112975
**邮编：**650034

ສະຖານທີ່: ຖະໜົນຫວນເຊີນຊີລູເຮືອນເລກທີ 577 ຂົງນະຄອນຄຸນມິງແຂວງຢູນນານ ສປ ຈີນ
ລະຫັດໄປສະນີ: 650034
ໂທ: 86–871–64112975 64101644
ແຟັກ: 86–871–64112975

**《占芭》杂志社驻老挝代表处：**
**地址：**万象市苏发努冯路湄公酒店二栋2211 室
**电话：**00856–21–254866

ຫ້ອງການຕາງໜ້າສຳນັກພິມວາລະສານ《ຈຳປາ》ສປ ຈີນປະຈຳນະຄອນຫຼວງວຽງຈັນ ສປປ ລາວ
ທີ່ ຢູ່ຫ້ອງ 2211 ຕຶກທີ 2 ໂຮງແຮມແມ່ຂອງ ຖະໜົນສຸພານຸວົງ ນະຄອນຫຼວງວຽງຈັນ
ເບີໂທ: 00856-21-254866

广告经营许可证号：5300004000052　ເລກໃບປາຕັງທຸລະກິດໂຄສະນາ: 5300004000052
印刷：昆明富新春彩色印务有限公司

RMB ¥10

图 / 新华社

# ເດີນຕາມກະແສຕົ້ນຕໍ ເຕົ້າໂຮມກຳລັງແຮງທາງບວກ

## ——ຜູ້ແທນກອງປະຊຸມສອງສະພາຈີນຫາລືກ່ຽວກັບການປະຕິຮູບຢ່າງເລິກເຊິ່ງ ແລະ ຮອບດ້ານ



ທ່ານ ລີເຄີຊຽງ ນາຍົກລັດຖະມົນຕີຈີນສະເໜີບົດລາຍງານວຽກງານລັດຖະບານ

中国国务院总理李克强作政府工作报告

## 唱响主旋律 凝聚正能量

### ——两会代表委员热议全面深化改革

中国共产党的十八届三中全会描绘了未来中国改革发展蓝图。3月3日，全国政协十二届二次会议开幕，3月5日，十二届全国人大二次会议开幕，中国又一次进入“两会时间”。

在全面深化改革开局之年举行的这次两会，改革毫无疑问是主旋律，也是世界关注的焦点。说形势，提建议。会上，人大代表、政协委员热议全面深化改革，积极建言献策，为实现中华民族伟大复兴中国梦凝聚起磅礴的正能量。

ກອງປະຊຸມຄັ້ງທີ 3 ສະໄໝທີ 18 ຂອງພັກຄອມມູນິດຈີນໄດ້ວາງແຜນປະຕິຮູບ ແລະ ພັດທະນາຂອງຈີນໃນອະນາຄົດ.ວັນທີ 3 ມີນານີ້,ກອງປະຊຸມຄັ້ງທີ 2 ສະໄໝທີ 12 ຂອງສະພາປຶກສາການເມືອງປະຊາຊົນທົ່ວປະເທດຈີນເລີ່ມໄຂຂຶ້ນ.ວັນທີ 5 ມີນານີ້,ກອງປະຊຸມຄັ້ງທີ 2 ສະໄໝທີ 12 ຂອງສະພາປະຊາຊົນທົ່ວປະເທດຈີນໄຂຂຶ້ນ.ຈີນໄດ້ເຂົ້າສູ່ໄລຍະ“ກອງປະຊຸມສອງສະພາ”ອີກ.

ກອງປະຊຸມສອງສະພາເທື່ອນີ້ຈັດຂຶ້ນໃນໄລຍະເບື້ອງຕົ້ນແຫ່ງການລົງເລິກການປະຕິຮູບຢ່າງຮອບດ້ານ,ການປະຕິຮູບຈະເປັນກະແສຫຼັກຢ່າງບໍ່ຕ້ອງສົງໄສ,ກໍ່ເປັນຈຸດສຸມຂອງສາຍຕາຊາວໂລກ.

ຫາລືສະພາບການ,ວາງຂໍ້ສະເໜີ. ໃນກອງປະຊຸມ,ຜູ້ແທນສອງສະພາໄດ້ປຶກສາຫາລືຢ່າງຟົດຟື້ນກ່ຽວກັບການປະຕິຮູບຢ່າງເລິກເຊິ່ງ ແລະ ຮອບດ້ານ,ແລະ ຕັ້ງໜ້າປະກອບຄຳຄິດຄຳເຫັນ,ເຊິ່ງເປັນກຳລັງທາງບວກທີ່ເຂັ້ມແຂງສຳລັບບັນລຸຄວາມຝັນແຫ່ງການຟື້ນຟູຄວາມຮຸ່ງເຮືອງຄັ້ງຍິ່ງໃຫຍ່ຂອງປະຊາຊາດຈີນ.

ການປະຕິຮູບຢ່າງເລິກເຊິ່ງ ແລະ ຮອບດ້ານ,ກາຍເປັນສຽງຮຽກຮ້ອງຮ່ວມຂອງຜູ້ແທນສອງສະພາ

ປະຈຸບັນ,ຈີນກຳລັງປະເຊີນກັບເງື່ອນໄຂ ແລະ ໂອກາດທີ່ດີຫຼາຍຢ່າງ,ພ້ອມທັງຢູ່ໃນໄລຍະຫັນປ່ຽນຄວາມໄວແຫ່ງການເຕີບໂຕ.ຜູ້ແທນສະເໜີອອກມາວ່າ,ຈຳເປັນຕ້ອງຮັບຮູ້ສະພາບການປະຕິຮູບ ແລະ ພັດທະນາໃນປະຈຸບັນຢ່າງເຕັມທີ,ຄືການພັດທະນາຂອງຈີນພວມປະເຊີນກັບຄວາມຂັດແຍ່ງ ແລະ ບັນຫາພົ້ນເດັ່ນຈຳນວນໜຶ່ງ,ຕົວຢ່າງວ່າ,ການພັດທະນາຢ່າງບໍ່ດຸ່ນດ່ຽງ ແລະ ກົມກຽວກັນ,ຍັງບໍ່ສາມາດພັດທະນາແບບຍືນຍົງ,ຄວາມສາມາດປະດິດສ້າງດ້ານເຕັກນິກວິທະຍາສາດບໍ່ເຂັ້ມແຂງ,ໂຄງປະກອບອຸດສາຫະກຳບໍ່ສົມເຫດສົມຜົນ,ດັ່ງນີ້ເປັນຕົ້ນ.ຕ້ອງການຊຸກຍູ້ການແກ້ໄຂບັນຫາເຫຼົ່ານີ້ໂດຍຜ່ານການລົງເລິກການປະຕິຮູບຢ່າງຮອບດ້ານ.



ວັນທີ 9 ມີນາ,ທ່ານ ຈາງເຕີຈ່ຽງ ປະທານສະພາປະຊາຊົນທົ່ວປະເທດຈີນຂຶ້ນກ່າວຄຳລາຍງານວຽກງານຄະນະກຳມະການປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດ

3月9日，全国人大常委会委员长张德江作全国人民代表大会常务委员会工作报告



ວັນທີ 3 ມີນາ,ທ່ານ ຢີເຈີງເຊິນ ປະທານສະພາປຶກສາການເມືອງທົ່ວປະເທດຕາງໜ້າຄະນະກຳມະການປະຈຳສະພາປຶກສາການເມືອງທົ່ວປະເທດຄັ້ງທີ 12 ຂຶ້ນກ່າວຄຳລາຍງານວຽກງານ.

3月3日，全国政协主席俞正声代表政协第十二届全国委员会常务委员会作工作报告

ທ່ານໄຊ້ຈີໜິງ,ຜູ້ແທນສະພາປະຊາຊົນທົ່ວປະເທດຈີນ,ຫົວໜ້າສູນຄົ້ນຄວ້າການເມືອງ ແລະ ເສດຖະສາດມະຫາວິທະຍາໄລຊິ່ງຮວາຊີ້ອອກວ່າ,“ກໍລະນີທີ່ເປັນກຸ່ມປະໂຫຍດຮ່ວມມີຢູ່ເກືອບທຸກບ່ອນ,ຜົນປະໂຫຍດຂອງພາກສ່ວນລັດຖະບານ,ການຜູກຂາດໃນຂະແໜງການ,ພ້ອມດ້ວຍກຸ່ມຄົນທີ່ໄດ້ຮັບຜົນປະໂຫຍດມາແລ້ວ,ຈະຜູກເປັນຮົ້ວອັນແຂງແກ່ນ.”

ທ່ານເມີຍຊິ່ງປາວ,ຜູ້ແທນສະພາປຶກສາການເມືອງທົ່ວປະເທດຈີນ,ຜູ້ຕິດຕາມພາຍນອກຂອງທະນາຄານຈີນຊີ້ອອກວ່າ,“ຖ້າວ່າບໍ່ແກ້ໄຂບັນຫາທີ່ມີຢູ່ໃນລະບອບເສດຖະກິດ,ແລະ ຮູບການຕິດຕາມຄຸ້ມຄອງ,ເສດຖະກິດຈີນຈະບໍ່ສາມາດພັດທະນາແບບຍືນຍົງ.”

ລົງເລິກການປະຕິຮູບຢ່າງຮອບດ້ານ,ກາຍເປັນສຽງດັງທີ່ສຸດທັງພາຍໃນ ແລະ ພາຍນອກຫໍປະຊຸມ.

ການປະຕິຮູບຢ່າງເລິກເຊິ່ງ ແລະ ຮອບດ້ານ,ເປັນພາລະກິດໄລຍະຍາວນານ,ຕ້ອງເລັ່ງລັດການປະຕິຮູບດ້ານຕ່າງໆ,ພ້ອມທັງເອົາໃຈໃສ່ຄວາມກົມກຽວກັນ“ແຮງຊຸກຍູ້ຂອງເສດຖະກິດຈີນຢູ່ນຳການປະຕິຮູບ,ຊີວິດຂອງວິສາຫະກິດຢູ່ນຳການປະດິດສ້າງໃໝ່.”ຕາມຄວາມເຫັນ




ວັນທີ 5 ມີນາ, ກອງປະຊຸມສະພາຜູ້ແທນປະຊາຊົນທົ່ວປະເທດຈີນຄັ້ງທີ 2 ສະໄໝທີ 12 ໄຂຂຶ້ນຢູ່ຫໍສະພາປະຊາຊົນທີ່ປັກກິ່ງ
3月5日，第十二届全国人民代表大会第二次会议在北京人民大会堂开幕

ຂອງທ່ານເຢີນຊິ້ນຊິ່ນ,ປະທານບໍລິສັດກົນຈັກວິສະຫະກໍາໜັກຈົ່ງຊິ້ນເຫີນານຮຸ້ນສ່ວນຈໍາກັດທີ່ເປັນຜູ້ແທນສະພາປະຊາຊົນທົ່ວປະເທດຈີນສອງຊຸດລຽນຕິດ,ນັບແຕ່ກອງປະຊຸມໃຫຍ່ຄັ້ງທີ 18,ໂດຍສະເພາະແມ່ນກອງປະຊຸມຄັ້ງທີ 3 ສະໄໝທີ 18 ຂອງພັກຄອມມູນິດຈີນເປັນຕົ້ນມາໄດ້ປະກາດໃຊ້ມາດຕະການປະຕິຮູບຫຼາຍປະການ,ຖືວ່າແມ່ນບໍ່ຄ່ອຍມີໃນຫຼາຍປີຜ່ານມາ.

ການປະຕິຮູບໃນຊຸມນີ້,ຕິດພັນເຖິງພາລະກິດຫຼາຍດ້ານ,ຕ້ອງມີທ່າທີອັນຕັ້ງໜ້າ,ພ້ອມທັງຕ້ອງມີຄວາມລະມັດລະວັງ.

ການຊຸກຍູ້ການປະຕິຮູບບໍ່ແມ່ນເລື່ອງງ່າຍ.ກ່ອນໜ້ານີ້,ຫຼັງຈາກການພັດທະນາເປັນເວລາ 36 ປີ,ຜົນປະໂຫຍດຈາກການປະຕິຮູບຮອບຜ່ານມາຂອງຈີນເກືອບໝົດໄປແລ້ວ,ບັນຫາໃໝ່ກັບບັນຫາເກົ່າປະສົມກັນ,ຄວາມຮຽກຮ້ອງຕ້ອງການດ້ານຜົນປະໂຫຍດຂອງຝ່າຍຕ່າງໆເຮັດໃຫ້ການປະຕິຮູບຮອບໃໝ່ດໍາເນີນໄປຢ່າງຫຍຸ້ງຍາກ.

ການປະຕິຮູບໄດ້ເຂົ້າສູ່ໄລຍະໃໝ່ທີ່ສະທ້ອນເຖິງໂຄງປະກອບຜົນປະໂຫຍດເກົ່າ,ແລະ ປັບປຸງການພົວພັນຜົນປະໂຫຍດ.ຈີນກໍາລັງປະເຊີນກັບການທົດສອບອັນສໍາຄັນຄັ້ງປະຫວັດສາດ,ການຫັນປ່ຽນຮູບການປົກຄອງຂອງລັດໄດ້ໄປຮອດຈຸດຫົວລ້ຽວຫົວຕໍ່,ການຫັນປ່ຽນຮູບການເຕີບໂຕດ້ານເສດຖະກິດກ້າວໄປສູ່ຂອດສໍາຄັນທີ່ນໍາພາໂດຍການບໍລິໂພກ,ການຫັນປ່ຽນຮູບການສັງຄົມກໍ່ຮອດເສັ້ນພື້ນທີ່ຈະສາມາດແກ້ໄຂຄວາມຂັດແຍ່ງລະດັບກຸ່ມຮ່ວມຜົນປະໂຫຍດຢ່າງມີປະສິດທິຜົນຫຼືບໍ່.

"ໃນໄລຍະເວລາທີ່ສໍາຄັນນີ້,ຕ້ອງເອົາໃຈໃສ່ແກ້ໄຂການພົວພັນໃນຮູບການຕ່າງໆໃຫ້ດີເປັນພິເສດ,ຕ້ອງເອົາໃຈໃສ່ຄວາມກົມກຽວກັນໃນການປະຕິຮູບ."ທ່ານຊີຟູລິນ,ກໍາມະການສະພາປຶກສາການເມືອງທົ່ວປະເທດຈີນ,ຫົວໜ້າສະຖາບັນຄົ້ນຄວ້າການປະຕິຮູບ ແລະ ການພັດທະນາຈີນ(ໄຫນານ)ໄດ້ດໍາເນີນການຄົ້ນຄວ້າການປະຕິຮູບໂດຍຕະຫຼອດ.ທ່ານຊີ້ອອກວ່າ,ລັກສະນະການປະຕິຮູບຢ່າງຮອບດ້ານມີຄວາມແຕກຕ່າງທີ່ສໍາຄັນທີ່ສຸດຈາກເມື່ອກ່ອນ,ຄືການປັບປຸງການພົວພັນຜົນປະໂຫຍດທີ່ເລິກເຊິ່ງ ແລະ ສັບສົນ.ການປະຕິຮູບເຂົ້າສູ່ໄລຍະບຸກທະລຸ,ປະເຊີນກັບອໍ່ຫຍຸ້ງຍາກຫຼາຍຢ່າງ,ເຊັ່ນ,ຜົນປະໂຫຍດຂອງພາກສ່ວນລັດຖະບານ,ຜົນປະໂຫຍດຂອງຂະແໜງການຕ່າງໆ, ແລະ ຜົນປະໂຫຍດຂອງທ້ອງຖິ່ນຕ່າງໆເປັນຕົ້ນ,ບໍ່ວ່າການປະຕິຮູບດ້ານໃດກໍ່ຕາມລ້ວນແຕ່ຕ້ອງແກ້ໄຂຄວາມຂັດແຍ່ງທີ່ສັບສົນ,ຕ້ອງແກ້ໄຂສິ່ງຕ່າງໆທີ່ເປັນອຸປະສັກດ້ານຄວາມຮັບຮູ້ ແລະ ຜົນປະໂຫຍດ.



ເຕົ້າໂຮມຢູ່ປັກກິ່ງ,ຮ່ວມກັນປຶກສາຫາລືແນວທາງນະໂຍບາຍຂອງປະເທດຊາດ
聚京华 议国是

ທ່ານຈ່າງໄລປິ່ນ,ກໍາມະການສະພາປຶກສາການເມືອງທົ່ວປະເທດຈີນກ່າວວ່າ,ຊຸກຍູ້ການປະຕິຮູບ,ຈະບໍ່ເດີນຕາມເສັ້ນທາງເກົ່າທີ່ປິດລ້ອມຕົວເອງ,ກໍ່ຈະບໍ່ໄປສູ່ເສັ້ນທາງທີ່ຫັນປ່ຽນແນວຄວາມຄິດພື້ນຖານ,ນີ້ຄືເສັ້ນພື້ນດ້ານການເມືອງຂອງການປະຕິຮູບ,ທັງເປັນທິດທາງຖືກຕ້ອງຂອງການປະຕິຮູບ. "ເວົ້າເປັນຮູບປະທໍາແລ້ວ,ກໍ່ແມ່ນຍຶດໝັ້ນທິດຊີ້ນໍາ 3 ຢ່າງ,ຄື,ທິດຊີ້ນໍາຂອງຕະຫຼາດ,ທິດຊີ້ນໍາຂອງບັນຫາ,ແລະ ທິດຊີ້ນໍາຂອງຊີວິດການເປັນ



ວັນທີ 3 ມີນາ,ກອງປະຊຸມຄະນະກໍາມະການທົ່ວປະເທດສະພາທີ່ປຶກສາການເມືອງປະຊາຊົນຈີນຄັ້ງທີ 2 ສະໄໝທີ 12 ໄດ້ໄຂຂຶ້ນຢູ່ຫໍສະພາປະຊາຊົນທີ່ປັກກິ່ງ
3月3日，中国人民政治协商会议第十二届全国委员会第二次会议在北京人民大会堂开幕



ວັນທີ 13 ມີນາ,ຫຼັງຈາກກອງປະຊຸມສະພາຜູ້ແທນປະຊາຊົນທົ່ວປະເທດຄັ້ງທີ 2 ສະໄໝທີ 12 ອັດລົງແລ້ວຜູ້ແທນປະຊາຊົນທົ່ວປະເທດຍ່າງອອກຈາກຫໍສະພາປະຊາຊົນປັກກິ່ງ.
3 月 13 日，第十二届全国人民代表大会第二次会议闭幕会结束后代表走出人民大会堂

ຢູ່ຂອງປະຊາຊົນ."

ແນວຄິດ ແລະ ພຶດຕິກຳເປັນເອກະພາບກັນໃນການຕັດສິນນະໂຍບາຍ ແລະ ຈັດສັນວຽກງານຂອງລັດຖະບານສູນກາງ,ເລັ່ງລັດການປະຕິຮູບກ້າວເຂົ້າສູ່ລວງເລິກຢ່າງແຂງແຮງ

ບົດຮຽນດ້ານປະຫວັດສາດສະແດງໃຫ້ເຫັນວ່າ, ໂອກາດຈະພາດໄປໄວ, ຕ້ອງກຳໃຫ້ແໜ້ນ.

ປີ 2014 ແມ່ນໄລຍະເບື້ອງຕົ້ນສຳລັບການລົງເລິກຈັດຕັ້ງປະຕິບັດນ້ຳໃຈກອງປະຊຸມຄັ້ງທີ 3 ສະໄໝທີ 18 ຂອງພັກຄອມມູນິດຈີນ ແລະ ລົງເລິກການປະຕິຮູບຢ່າງຮອບດ້ານ.ເມື່ອປະເຊີນກັບໜ້າທີ່ໜັກໃນການພັດທະນາ,ວຽກຮີບດ່ວນໃນປະຈຸບັນນີ້ແມ່ນສ້າງຄວາມຮັບຮູ້ຮ່ວມສຳລັບການປະຕິຮູບ,ເຕົ້າໂຮມກຳລັງແຮງສຳລັບການປະຕິຮູບ.

ຜູ້ແທນສອງສະພາຊີ້ອອກວ່າ,ລົງເລິກການປະຕິຮູບຢ່າງຮອບດ້ານພົວພັນເຖິງພາກສ່ວນລວມ,ເປັນພາລະກິດຫຍຸ້ງຍາກລຳບາກ,ແລະ ມີຜົນສະທ້ອນຢ່າງເລິກເຊິ່ງ.ຄະນະພັກທຸກຂັ້ນຕ້ອງຈັດເອົາການລົງເລິກການປະຕິຮູບຮອບດ້ານໄວ້ຢູ່ຖານະທີ່ພົ້ນເດັ່ນກວ່າເກົ່າ,ເສີມຂະຫຍາຍສະຕິປັນຍາ ແລະ ກຳລັງແຮງດ້ານຕ່າງໆຢ່າງເຕັມສ່ວນ,ເຕົ້າໂຮມກຳລັງແຮງແຫ່ງການປະຕິຮູບ,ສ້າງສິ່ງຄ້ຳປະກັນອັນໜັກແໜ້ນໃຫ້ແກ່ການລົງເລິກການປະຕິຮູບຢ່າງຮອບດ້ານ.

ໃນກອງປະຊຸມສອງສະພາ,ຜູ້ແທນພາກັນປະກອບຄວາມຄິດຄວາມເຫັນ ແລະ ຂໍ້ສະເໜີ:

ທ່ານກູເຊີງຈູ,ຜູ້ແທນສະພາປະຊາຊົນທົ່ວປະເທດຈີນ,ຮອງປະທານຄະນະກຳມະການສູນກາງສະຫະພັນສ້າງສາປະເທດປະຊາທິປະໄຕຂອງຈີນກ່າວວ່າ,ການປະຕິຮູບຮອບໃໝ່ຂອງຈີນຕ້ອງການຫັນປ່ຽນຮູບການຍຸດທະສາດເປີດປະຕູສູ່ພາຍນອກ: ຫັນຈາກຜູ້ເຮັດວຽກໃນໂຮງງານໂລກ,ກາຍເປັນຜູ້ຈັດສັນຊັບພະຍາກອນທົ່ວໂລກ,ຈາກ"ຜະລິດຢູ່ຈີນ"ກາຍເປັນ"ຂຶ້ນກັບຈີນ"ແລະ"ປະດິດສ້າງໂດຍຈີນ".

ທ່ານຊີຟູລິນຄາດຄະເນວ່າ,ໃນຕໍ່ໜ້ານີ້,ການລົງເລິກການປະຕິຮູບຮອບດ້ານຈະຊຸກຍູ້ໃນ 5 ດ້ານ; ໜຶ່ງ,ຈັດຕັ້ງປະຕິບັດ ແລະ ຈັດວາງແຜນລວມ ແລະ ແຜນການດຳເນີນງານທີ່ສົມກັບລະບົບປົກຄອງລັດ ແລະ ຄວາມສາມາດປົກຄອງລັດແບບທັນສະໄໝ,ຍົກລະດັບຄວາມສາມາດປົກຄອງຂອງລັດໃນດ້ານການພັດທະນາເສດຖະກິດ,ຄຸ້ມຄອງສັງຄົມ,ແລະ ປົກຄອງຕາມກົດໝາຍ,ເຊິ່ງພົວພັນເຖິງຄວາມໝັ້ນຄົງຍາວນານຂອງປະເທດ,ຕ້ອງໃຫ້ຄວາມສຳຄັນໃນລະດັບສູງ.ສອງ,ຈັດຕັ້ງປະຕິບັດບົດບາດຕັດສິນຂອງຕະຫຼາດໃນການຈັດສັນຊັບພະຍາກອນ.ສາມ,ເສດຖະກິດລະບອບປະສົມຈະມີການປ່ຽນແປງໃໝ່,ຕົວຢ່າງວ່າ,ການປະຕິຮູບລັດວິສາຫະກິດ,ຈະແກ້ໄຂການຜູກມັດຕື່ມອີກ.ສີ່,ສືບຕໍ່ຊຸກຍູ້ການປະຕິຮູບດ້ານລາຄາ,ຕົວຢ່າງວ່າ,ການປະຕິຮູບລາຄາຊັບພະຍາກອນ ແລະ ປັດໄຈການຜະລິດ,ຊຸກຍູ້ການປະຕິຮູບອັດຕາດອກເບ້ຍຕາມຕະຫຼາດ.ຫ້າ,ຈັດວາງມາດຕະການໃໝ່ໃນການພັດທະນາການປົກຄອງລັດຕາມກົດໝາຍ.

ຄົນທັງຫຼາຍຮ່ວມແຮງຮ່ວມໃຈເປັນເອກະສັນກັນ,ຈະສາມາດຍ້າຍພູດອຍໄດ້.ຜູ້ແທນສອງສະພາຊີ້ອອກວ່າ,ລົງເລິກການປະຕິຮູບຢ່າງຮອບດ້ານ,ບໍ່ຄວນສະແຫວງຫາຜົນກຳໄລຢ່າງຮີບຮ້ອນ,ກໍ່ຕ້ອງປ້ອງກັນບໍ່ໃຫ້ເກີດກໍລະນີເວົ້າແຕ່ປາກເປົ່າແຕ່ເຝົ້າຖ້າລ້າໆຫາກບໍ່ກ້າກ້າວໄປໜ້າ.ສຳລັບການຈັດຕັ້ງປະຕິບັດແຜນການປະຕິຮູບຂອງລັດຖະບານສູນກາງ,ພາກສ່ວນ ແລະ ທ້ອງຖິ່ນຕ່າງໆຄວນຈັດວາງແຜນການຕິດຕາມກວດກາໃຫ້ເປັນຮູບປະທຳ,ເພີ່ມທະວີການຕິດຕາມກວດກາ,ອອກແຮງຊຸກຍູ້ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍທີ່ກ່ຽວຂ້ອງ,ເພື່ອຮັບປະກັນນະໂຍບາຍຕ່າງໆໄດ້ຮັບການປະຕິບັດຢ່າງແທ້ຈິງ ແລະ ເປັນຮູບປະທຳ.

ກອງປະຊຸມສອງສະພາຂອງປີ 2014,ເປັນກອງປະຊຸມຄັ້ງໜຶ່ງທີ່ມີຄວາມໝາຍສຳຄັນໃນຂະບວນການລົງເລິກການປະຕິຮູບຢ່າງຮອບດ້ານ,ເຊິ່ງຈະເຕົ້າໂຮມກຳລັງແຮງຂອງປະຊາຊົນນັບເປັນຕື້ຄົນ,ຊຸກຍູ້ກຳປັ່ນຍິ່ງໃຫຍ່ແຫ່ງປະຊາຊາດຈີນເດີນທາງໄປໜ້າຢ່າງບໍ່ຢຸດຢັ້ງ.



ບັນດາຜູ້ແທນ ແລະ ກຳມະການໄດ້ສະເໜີຄວາມຄິດເຫັນ
代表委员建言献策



ທູຕານຸທູດຕ່າງປະເທດເຂົ້າຕິດຕາມກອງປະຊຸມ
外国使节在旁听会议

图 / 新华社

# “ຖືໃຈປະຊາຊົນເປັນໃຈຕົວເອງ”

## —ທ່ານນາຍົກລັດຖະມົນຕີ ລີເຄີ່ຊຽງ ພົບປະກັບນັກຂ່າວຈີນ ແລະ ຕ່າງປະເທດ




“以百姓之心为心”

——李克强总理会见中外记者

十二届全国人大二次会议 3 月 13 日上午闭幕后，中国国务院总理李克强在北京人民大会堂会见中外记者。现场近 800 个座位座无虚席，李克强共回答 15 个问题，其中 9 个来自外媒。有网友称，“答问中，感到了政府的担当和责任。”

ຕອນເຊົ້າວັນທີ 13 ມີນາ 2014,ກອງປະຊຸມຄັ້ງທີ 2 ສະໄໝທີ 12 ຂອງສະພາປະຊາຊົນທົ່ວປະເທດຈີນໄດ້ອັດລົງ,ຫຼັງຈາກນັ້ນ,ທ່ານລີເຄີ່ຊຽງ,ນາຍົກລັດຖະມົນຕີຈີນໄດ້ຕ້ອນຮັບນັກຂ່າວຈີນ ແລະ ຕ່າງປະເທດຢູ່ທີ່ຫໍສະພາປະຊາຊົນທີ່ນະຄອນຫຼວງປັກກິ່ງ.ຢູ່ສະຖານທີ່ຕ້ອນຮັບມີເກືອບ 800 ບ່ອນນັ່ງແມ່ນເຕັມໝົດເລີຍ.ທ່ານນາຍົກລີເຄີ່ຊຽງໄດ້ຕອບຄຳຖາມ 15 ຂໍ້,ໃນນັ້ນ 9 ຄຳຖາມແມ່ນຄຳຖາມຂອງສື່ຕ່າງປະເທດ.

ຄຳຖາມທຳອິດແມ່ນກ່ຽວກັບຍົນໂດຍສານສາຍການບິນມາເລເຊຍແອລາຍທີ່ຂາດການຕິດຕໍ່ ແລະ ສູນຫາຍໄປ.ທ່ານລີເຄີ່ຊຽງກ່າວວ່າ,ຢູ່ເທິງຍົນໂດຍສານທີ່ຂາດການຕິດຕໍ່ ແລະ ຫາຍໄປນັ້ນມີຜູ້ໂດຍສານ 239 ຄົນ,ໃນນັ້ນ 154 ຄົນເປັນຊາວຈີນ,ຄອບຄົວ ແລະ ພີ່ນ້ອງເຂົາເຈົ້າເປັນຫ່ວງເປັນໃຍທີ່ສຸດ,ຄວາມປອດໄພຂອງເຂົາເຈົ້າໄດ້ຈ່ອງຖືງເອົາຈິດໃຈລັດຖະບານຈີນ ແລະ ປະຊາຊົນຈີນຢ່າງຫຼວງຫຼາຍ.ປະຈຸບັນ,ພວກຂ້າພະເຈົ້າກໍຮີບຮ້ອນໃຈວ່າຈະໄດ້ຮັບຂ່າວ,ເຖິງວ່າຈະເປັນຂ່າວດີພຽງໜ້ອຍດຽວກໍ່ຍັງໄດ.

ໃນການຖາມຕອບເປັນເວລາເກືອບ 2 ຊົ່ວໂມງນັ້ນ,ການປະຕິຮູບ,ການພັດທະນາ ແລະ ຊີວິດການເປັນຢູ່ຂອງປະຊາຊົນໄດ້ກາຍເປັນຄຳສັບຕົ້ນຕໍໃນກອງປະຊຸມນັກຂ່າວ.

### ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນແມ່ນຈຸດໜັກໃນວຽກງານຂອງລັດຖະບານ

ທ່ານລີເຄີ່ຊຽງກ່າວວ່າ,ການປະຕິຮູບຈະກະທົບເຖິງຜົນປະໂຫຍດຂອງກຸ່ມຄົນ ຫຼື ພາກສ່ວນໃດໜຶ່ງ,ແຕ່ເພື່ອຜົນຂະຫຍາຍຜົນປະໂຫຍດຂອງການປະຕິຮູບ, ໂດຍສະເພາະແມ່ນສ້າງຜົນປະໂຫຍດຕົວຈິງໃຫ້ແກ່ປະຊາຊົນຢ່າງກວ້າງຂວາງ,ພວກເຮົາຈະປະຕິບັດພາລະໜ້າທີ່ຢ່າງບໍ່ຫວັ່ນໄຫວຄອນແຄນ.

ທ່ານລີເຄີ່ຊຽງກ່າວວ່າ,“ພວກເຮົາຈະບໍ່ໃຫ້ເກີດກໍລະນີທີ່ບໍ່ມີບ່ອນຢູ່ອາໄສ,ປະລະການປິ່ນປົວຍ້ອນຄວາມທຸກຍາກ ແລະ ອື່ນໆເກີດຂຶ້ນເລື້ອຍໆ,”ເອົາໃຈປະຊາຊົນມາປຽບທຽບໃສ່ໃຈຕົນເອງ,ພະນັກງານລັດຖະບານຄວນຖືໃຈປະຊາຊົນເປັນໃຈຕົວເອງ,ຖືຄວາມຕ້ອງການຂອງປະຊາຊົນເປັນໜ້າທີ່ຂອງຕົນ.”

ທ່ານກ່າວວ່າ,ສາເຫດທີ່ກຳນົດອັດຕາເຕີບໂຕເສດຖະກິດໄວ້ຢູ່ 7,5%,ໂດຍພິຈາລະນາເຖິງການຮັກສາການປະກອບອາຊີບ,ນຳເອົາຜົນປະໂຫຍດໃຫ້ແກ່ປະຊາຊົນ ແລະ ເພີ່ມລາຍໄດ້ໃຫ້ປະຊາຊົນໃນຕົວເມືອງ ແລະ ຊົນນະບົດ.ພວກເຮົາໃຫ້ຄວາມສຳຄັນຫຼາຍກວ່າຕໍ່ຊີວິດການເປັນຢູ່ຂອງປະຊາຊົນຢູ່ເບື້ອງຫຼັງຂອງຕົວເລກ,ແລະ ການປະກອບອາຊີບຢູ່ເບື້ອງຫຼັງການເຕີບໂຕ.”ພວກເຮົາບໍ່ແມ່ນສະແຫວງຫາ GDP ແຕ່ຢ່າງດຽວ,ແຕ່ພວກເຮົາຍັງຕ້ອງການ GDP ທີ່ຢູ່ໃກ້ຊິດກັບປະຊາຊົນ,GDP ທີ່ຍົກສູງຄຸນນະພາບ,ປະສິດທິຜົນ,ປະຢັດພະລັງງານ ແລະ ອະນຸລັກສິ່ງແວດລ້ອມ.”

ເມື່ອເວົ້າເຖິງການປະກາດສົງຄາມຕໍ່ມົນລະພິດຕ່າງໆ,ທ່ານລີເຄີ່ຊຽງກ່າວວ່າ,ຫຼາຍຄົນຕື່ນນອນໃນຕອນເຊົ້າແລ້ວ,ສິ່ງທຳອິດກໍ່ແມ່ນເປີດໂທລະສັບມືຖືເພື່ອຊອກຮູ້ຕົວເລກ PM 2.5,ນີ້ໄດ້ກາຍເປັນບັນຫາສຳຄັນໃນດ້ານຊີວິດການເປັນຢູ່ຂອງປະຊາຊົນ.

“ບັນຫາຈຸດຮ້ອນທີ່ສັງຄົມເອົາໃຈໃສ່, ໂດຍສະເພາະແມ່ນບັນຫາຊີວິດການເປັນຢູ່ຂອງປະຊາຊົນ,ແມ່ນວຽກງານຈຸດໜັກຂອງລັດຖະບານ.”ໃນເວລາເວົ້າເຖິງເຄືອຂ່າຍປະກັນສັງຄົມນັ້ນ,ທ່ານລີເຄີ່ຊຽງກ່າວວ່າ,ປີນີ້ຈະສຸມໃສ່ເຮັດວຽກ 3 ຢ່າງ,ຄືຮັກສາພື້ນຖານ,ຮັບປະກັນເສັ້ນພື້ນ,





ແລະ ຊຸກຍູ້ຄວາມຍຸຕິທຳ.

ທ່ານລີເຄີ້ຊຽງກ່າວວ່າ,ລັດຖະບານຈະໃຊ້ກຳລັງແຮງຫຼາຍກວ່າເກົ່າເພື່ອແກ້ໄຂບັນຫາເຮືອນຢູ່ພື້ນຖານຂອງປະຊາຊົນ."ປະຈຸບັນ,ຢູ່ເຂດເຮືອນຕູບທີ່ລອມສູນຢູ່ໃນຕົວເມືອງຍັງມີປະຊາຊົນ 100 ລ້ານຄົນ,ເວົ້າໄດ້ວ່າແມ່ນຂາດເຂີນເງື່ອນໄຂດຳລົງຊີວິດຂັ້ນພື້ນຖານ.ຫຼາຍຮ້ອຍຄົນນຳໃຊ້ຫ້ອງນ້ຳແຫ້ງຫ້ອງດຽວ, ໂດຍສະເພາະຢູ່ພາກເໜືອ,ຮອດລະດູໜາວປະຊາຊົນຈຳນວນໜຶ່ງຕ້ອງໃສ່ໝວກນອນ ແລະ ນຸ່ງເສື້ອນອນຈຶ່ງຈະສາມາດເຂົ້ານອນໄດ້,ເຊິ່ງເປັນເລື່ອງທີ່ໜ້າເຈັບໃຈຂອງລັດຖະບານ.

ການສໍ້ລາດບັງຫຼວງເປັນປະກົດການທີ່ເຮັດໃຫ້ປະຊາຊົນຄຽດແຄ້ນທີ່ສຸດ.ທ່ານລີເຄີ້ຊຽງກ່າວວ່າ,ສຳລັບພວກຜູ້ຄົນສໍ້ລາດບັງຫຼວງ ແລະ ການກະທຳສໍ້ລາດບັງຫຼວງ,ພວກເຮົາຈະບໍ່ຍອມຮັບຢ່າງເດັດຂາດ.ຈີນເປັນປະເທດທີ່ປົກຄອງຕາມກົດໝາຍ,ບໍ່ວ່າຜູ້ໃດກໍ່ຕາມ,ບໍ່ວ່າຕຳແໜ່ງສູງ ຫຼື ຕຳແໜ່ງຕ່ຳ,ຈະສະເໝີພາບກັນຢູ່ຕໍ່ໜ້າກົດໝາຍ.ບໍ່ວ່າຜູ້ໃດລະເມີດລະບຽບວິໄນຂອງພັກ ແລະ ກົດໝາຍຂອງລັດ,ກໍ່ຈະກວດກາ ແລະ ລົງໂທດຢ່າງເຂັ້ມງວດຕາມກົດໝາຍ ແລະ ລະບຽບວິໄນ.

### ການປະຕິຮູບຕ້ອງມີຄວາມຄືບໜ້າໃນຂົງເຂດຈຸດໜັກ

ການປະຕິຮູບ,ເປັນຄຳສັບສຳຄັນອັນໜຶ່ງທີ່ໄດ້ຮັບຄວາມສົນໃຈຫຼາຍໃນກອງປະຊຸມນັກຂ່າວ.ທ່ານລີເຄີ້ຊຽງທວນຄືນວ່າ,ເມື່ອ 30 ກວ່າປີກ່ອນ,ທ່ານເປັນພະນັກງານປົກຄອງບ້ານໃນຊົນນະບົດ,ໃນເວລານັ້ນລຸກແຕ່ເຊົ້າ ແລະ ເຮັດວຽກຈົນຮອດຄ່ຳຈຶ່ງເລີກວຽກ,ຢາກຈັດແຜນລະອຽດໃຫ້ແຮງງານໝົດທຸກຄົນໃນແຕ່ລະມື້,ແຕ່ໃນທີ່ສຸດຫາກິນບໍ່ອີ່ມ.ຕໍ່ມາໄດ້ປະຕິບັດລະບຽບການຮັບເໝົາ,ໃຫ້ຊາວກະສິກອນຕັດສິນຈະເຮັດວຽກຫຍັງ,ແລະ ປູກພືດຫຍັງດ້ວຍຕົນເອງ,ບໍ່ພໍເທົ່າໃດປີກໍ່ໄດ້ແກ້ໄຂບັນຫາກິນອີ່ມນຸ່ງອຸ່ນແລ້ວ.

ທ່ານລີເຄີ້ຊຽງກ່າວວ່າ,ພວກເຮົາຈະລົງເລິກການປະຕິຮູບຢ່າງຮອບດ້ານ,ກໍ່ຕ້ອງສຸມໃສ່ການປະຕິຮູບໃນຂົງເຂດສຳຄັນ,ແລະ ໄດ້ຮັບຄວາມຄືບໜ້າໃນຂົງເຂດຈຸດໜັກ.

ທ່ານລີເຄີ້ຊຽງປຽບທຽບ"ການປັບປຸງການປົກຄອງໃຫ້ກະທັດຮັດ ແລະ ປ່ອຍສິດອຳນາດໃຫ້ຂັ້ນລຸ່ມ"ນັ້ນເປັນມາດຕະການເບື້ອງຕົ້ນຂອງການປະຕິຮູບ.ທ່ານກ່າວວ່າ,"ລູກສອນຍິງອອກໄປແລ້ວກໍ່ກັບຄືນບໍ່ໄດ້,ພວກເຮົາມີແຕ່ຍຶດໝັ້ນປະຕິບັດຕະຫຼອດຮອດສຸດທ້າຍ."

ໃນ 1 ປີຜ່ານມາ,ລັດຖະບານໄດ້ປ່ອຍສິດພິຈາລະນາອະນຸມັດໃຫ້ອົງການຂັ້ນລຸ່ມ ຫຼື ຍົກເລີກຂັ້ນຕອນພິຈາລະນາອະນຸມັດມີເຖິງ 416 ລາຍການ.ທ່ານລີເຄີ້ຊຽງກ່າວວ່າ,ນີ້ເປັນສັນຍານທີ່ພົ້ນເດັ່ນ,ຄື:ຫຼຸດຜ່ອນຂໍ້ຈຳກັດສຳລັບວິສາຫະກິດ,ເຮັດໃຫ້ຕະຫຼາດເສີມຂະຫຍາຍບົດບາດຫຼາຍກວ່າເກົ່າ.

ທ່ານຍັງກ່າວວ່າ,ສິ່ງທ້າທາຍໃຫຍ່ທີ່ສຸດໃນປີກາຍນີ້,ແມ່ນຄວາມກົດດັນທີ່ເສດຖະກິດພັດທະນາຊ້າລົງ.ທ່ານກ່າວວ່າ,ປີນີ້ຍັງມີສິ່ງທ້າທາຍຢ່າງຂ້ຽວຂາດ,ອາດຈະສັບສົນກວ່າເກົ່າ.ພວກເຮົາຕ້ອງຮັກສາການເຕີບໂຕ,ຮັບປະກັນການປະກອບອາຊີບ,ພ້ອມທັງປ້ອງກັນເງິນເຟີ້,ຄວບຄຸມຄວາມສ່ຽງ,ຍັງຕ້ອງຍົກລະດັບຄຸນນະພາບ ແລະ ປະສິດທິຜົນ,ບຳບັດມົນລະພິດ,ຖ້າຢາກບັນລຸເປົ້າໝາຍຫຼາຍດ້ານກໍ່ຕ້ອງຊອກຄົ້ນຄວາມດຸ່ນດ່ຽງຢ່າງສົມເຫດສົມຜົນ,ນີ້ເປັນເລື່ອງລຳບາກຫຼາຍ.

ໃນເວລາເວົ້າວ່າ"ກັດກະດູກແຂງ"ໝາຍຄວາມວ່າແກ້ໄຂບັນຫາຫຍຸ້ງຍາກລຳບາກນັ້ນ,ທ່ານກ່າວເນັ້ນວ່າ,ຕ້ອງຊຳລະການພົວພັນລະຫວ່າງລັດຖະບານກັບຕະຫຼາດໃຫ້ດີ,ເສດຖະກິດຕະຫຼາດກໍ່ແມ່ນເສດຖະກິດທີ່ປົກຄອງຕາມກົດໝາຍ,ພວກເຮົາຕ້ອງພະຍາຍາມເຮັດໃຫ້ໄດ້ບ່ອນວ່າອົງການຕະຫຼາດ"ສາມາດເຮັດໄດ້ຖ້າກົດໝາຍກໍ່ໄດ້ເກືອດຫ້າມ",ສ່ວນພາກສ່ວນລັດຖະບານ"ຖ້າກົດໝາຍບໍ່ໄດ້ມອບສິດແມ່ນບໍ່ໃຫ້ເຮັດ".






ທ່ານຊີ້ອອກວ່າ,ພວກເຮົາຕ້ອງເພີ່ມທະວີການຕິດຕາມກວດກາ,ແກ້ໄຂຢ່າງທັນທີ,ຮັບປະກັນບໍ່ໃຫ້ເກີດຄວາມສ່ຽງທີ່ມີລັກສະນະພາກພື້ນ ແລະ ເປັນລະບົບ.

ທ່ານກ່າວວ່າ,ເສດຖະກິດຈີນຍັງມີກຳລັງບົ່ມຊ້ອນຢ່າງໃຫຍ່ຫຼວງ,ພວກເຮົາມີຄວາມສາມາດ ແລະ ເງື່ອນໄຂທີ່ເຮັດໃຫ້ເສດຖະກິດປີນີ້ໝູນວຽນລະຫວ່າງລະດັບທີ່ສົມເຫດສົມຜົນ.

ກ່ຽວກັບການບັນລຸເປົ້າໝາຍການປະຕິຮູບ,ທ່ານກ່າວວ່າ,ຄົນບູຮານມີຄວາມເວົ້າວ່າ,ເຮົາຈະຍຶດໝັ້ນປະຕິບັດແຕ່ຕົ້ນຈົນຈົບ.ຂໍແຕ່ຍຶດໝັ້ນຕະຫຼອດໄປ,ຈະໄດ້ຮັບຜົນສຳເລັດຢ່າງແນ່ນອນ.

## ຜູ້ສະຫຼາດສະແຫວງຫາຄວາມເປັນເອກະພາບກັນ

ໃນເວລາຕອບຄຳຖາມກ່ຽວກັບອະນາຄົດແຫ່ງການພັດທະນາຂອງຮົງກົງນັ້ນ,ທ່ານລີເຄີ້ຊຽງກ່າວວ່າ,ລັດຖະບານສູນກາງຈີນຈະສືບຕໍ່ສະໜັບສະໜູນຮົງກົງຮັກສາ ແລະ ຍົກລະດັບຖານະທີ່ເປັນສູນກາງທະນາຄານ,ການຄ້າ ແລະ ການຂົນສົ່ງທາງທະເລໃນສາກົນ.ພີ່ນ້ອງຮ່ວມຊາດຮົງກົງມີນ້ຳໃຈບາກບັ່ນສູ້ຊົນຢ່າງກ້າຫານຕະຫຼອດມາ,ຈະຮັກສາທ່າແຮງໃນການແຂ່ງຂັນທົ່ວໂລກ,ແລະຮັກສາຄວາມຈະເລີນຮຸ່ງເຮືອງ.

ກ່ຽວກັບການພັດທະນາສາຍພົວພັນສອງຝັ່ງຊ່ອງແຄບໄຕ້ຫວັນ,ທ່ານກ່າວວ່າ,ປະຊາຊົນສອງຝັ່ງເປັນພີ່ນ້ອງຮ່ວມຊາດ ແລະ ເປັນຄອບຄົວດຽວກັນ,ຄວາມເວົ້ານີ້ມີເນື້ອໃນເພີ່ມຂຶ້ນເລື້ອຍໆ.ປີກາຍນີ້,ສື່ມວນຊົນສອງຝັ່ງເລືອກເອົາຕົວໜັງສື “进” ແປວ່າກ້າວໄປໜ້າ,ເປັນຕົວໜັງສືປະຈຳປີຂອງສອງຝັ່ງ.ຕົວໜັງສືນີ້ໄດ້ສະແດງໃຫ້ເຫັນທ່າອ່ຽງທີ່ສາຍພົວພັນສອງຝັ່ງຂະຫຍາຍຕົວໄປທາງສັນຕິພາບ,ກໍ່ສ່ອງແສງເຖິງຄວາມຄອງຄອຍຂອງປະຊາຊົນສອງຝັ່ງຊ່ອງແຄບທະເລໄຕ້ຫວັນ.

ໃນເວລາກ່າວເຖິງການພົວພັນກັບຕ່າງປະເທດ,ທ່ານລີເຄີ້ຊຽງກ່າວວ່າ,ຈີນ ແລະ ເອີລົບເປັນຄູ່ການຄ້າໃຫຍ່ທີ່ສຸດໂດຍມີການຄ້າຢ່າງຂະໜາດໃຫຍ່,ນອກນີ້,ຈີນ ແລະ ອາເມລິກາກໍ່ມີກຳລັງບົ່ມຊ້ອນອັນໃຫຍ່ຫຼວງໃນການຮ່ວມມື.ທ່ານມີທ່າທີອັນເປີດເຜີຍຕໍ່ຄວາມຂັດແຍ່ງ ແລະ ຄວາມເຫັນທີ່ແຕກຕ່າງກັນ,ແລະ ຊີ້ອອກວ່າ,ຜູ້ສະຫຼາດຈະສະແຫວງຄວາມເປັນເອກະສັນກັນ,ຜູ້ໂງ່ຈຶ່ງສະແຫວງຫາຄວາມແຕກຕ່າງກັນ.

ໃນເວລາຕອບຄຳຖາມກ່ຽວກັບການພົວພັນລະຫວ່າງຈີນກັບປະເທດໃກ້ຄຽງ,ທ່ານຕອບວ່າ,ປະເທດທີ່ຢູ່ໃກ້ກັນເກີດຄວາມຂັດແຍ່ງກັນເປັນກໍລະນີທີ່ປົກກະຕິ,ແຕ່ພວກເຮົາເຄົາລົບເຊິ່ງກັນ ແລະ ກັນ,ແລະ ຄວບຄຸມຄວາມຂັດແຍ່ງກັນ,ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ,ຄວນສົ່ງສຽງທີ່ກົມກຽວກັນ,ຫາກບໍ່ແມ່ນສຽງນັ້ນແຊວທີ່ຂັດຫູ.

ທ່ານເວົ້າວ່າ,“ມີໄມຕີຈິດຕໍ່ກັນ,ຢູ່ຮ່ວມກັນໂດຍສັນຕິ,ແມ່ນຄວາມປາຖະໜາຂອງປະຊາຊົນຂອງຈີນກໍ່ຄືປະເທດໃກ້ຄຽງ”.

ທ່ານລີເຄີ້ຊຽງເຄີຍເວົ້າເຖິງເລື່ອງທີ່ໄປຢ້ຽມຢາມປະເທດອາຊຽນໃນປີກາຍນີ້.“ຂ້າພະເຈົ້າກັບຜູ້ນຳຫວຽດນາມໄດ້ຕົກລົງຄວາມຮັບຮູ້ເປັນເອກະພາບກັນດ້ານຫຼັກການກ່ຽວກັບຮ່ວມກັນບຸກເບີກທະເລ,ຮ່ວມມືທາງບົກ,ແລະຮ່ວມມືດ້ານການທະນາຄານແລ້ວ,ກໍ່ຢາກຟັງສຽງຕອບຮັບຂອງປະຊາຊົນ,ຫລັງຈາກຂ້າພະເຈົ້າເລີກວຽກແລ້ວຈຶ່ງຍ່າງເລາະ ແລະ ໄປຮອດຮ້ານນ້ອຍແຫ່ງໜຶ່ງ,ເຈົ້າຂອງຮ້ານພໍເຫັນຂ້າພະເຈົ້າກໍ່ເບິ່ງອອກວ່າຂ້າພະເຈົ້າແມ່ນໃຜ,ແລະ ໄດ້ກ່າວຕໍ່ຂ້າພະເຈົ້າວ່າຍິນດີຕ້ອນຮັບແຂກຈີນ,ຂ້າພະເຈົ້າຄິດວ່ານີ້ອາດຈະແມ່ນໂອກາດພັດທະນາທຸລະກິດທີ່ດີຂອງລາວ.ຂ້າພະເຈົ້າຖາມວ່າ,ມີຄວາມເຫັນແນວໃດຕໍ່ການພົວພັນກັບປະເທດໃກ້ຄຽງ,ລາວເວົ້າວ່າຫວັງຢາກໃຫ້ມີໄມຕີຈິດມິດຕະພາບ ແລະ ສັນຕິພາບຕໍ່ກັນ.”

ທ່ານວາງມິງອີ້,ນັກຂ່າວໜັງສືພິມຈົ່ງກົວຊືປ້າວຂອງໄຕ້ຫວັນເວົ້າວ່າ,ພາບປະທັບໃຈຂອງທ່ານທີ່ມີຕໍ່ກອງປະຊຸມນັກຂ່າວເທື່ອນີ້ກໍ່ແມ່ນ,ພາຍໃຕ້ການຈັດວາງແຜນລວມແຫ່ງການປະຕິຮູບນັ້ນ,ໄດ້ສະເໜີແນວຄິດໃນການຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳ.



边境口岸行 民生篇




# ຄວາມໄຝ່ຝັນຂອງຈີນ

ໄປສຳພາດດ່ານຊາຍແດນ ສະບັບຊີວິດການເປັນຢູ່ປະຊາຊົນ



文 / 楚 然 图 / 刘江林

# ດ່ານຊິ່ງສຸຍເຫີເມັ້ງຕິ້ງ

## 孟定清水河口岸

孟定清水河口岸地处云南省临沧市耿马傣族佤族自治县，与缅甸掸邦第一特区（果敢）接壤，与掸邦第二特区（瓦邦）南邓离河相望。作为云南省连接南亚、东南亚最为便捷的陆上通道，这里早在上世纪五十年代就正式对外开展小额贸易进出口业务。

ດ່ານຊິ່ງສຸຍເຫີເມັ້ງຕິ້ງຕັ້ງຢູ່ເມືອງປົກຄອງຕົນເອງເຜົ່າລີ້ເຜົ່າວາເກິງມານະຄອນລິນຊ່າງແຂວງຢຸນນານຈີນ,ມີຊາຍແດນຕິດກັບເຂດພິເສດທີ 1 ຂອງມຽນມາ,ແລະຕິດກັບເຂດພິເສດທີ 2 ຂອງມຽນມາໂດຍມີແມ່ນ້ຳເຕົ້ງລີ້ໃຕ້ອັ້ນໄວ້.ໃນຖານະເປັນທາງຜ່ານທາງບົກທີ່ສະດວກວ່ອງໄວທີ່ສຸດລະຫວ່າງແຂວງຢຸນນານຈີນກັບອາຊີໃຕ້ ແລະອາຊີຕາເວັນອອກສ່ຽງໃຕ້ນັ້ນ,ຢູ່ແຫ່ງນີ້ໄດ້ເລີ່ມດຳເນີນບໍລິການຂາເຂົ້າຂາອອກສິນຄ້າກ້ອນນ້ອຍຕໍ່ຕ່າງປະເທດຢ່າງເປັນທາງການໃນຊຸມປີ 1950.ເມັ້ງຕິ້ງມີທ່າແຮງພູມສາດທີ່ດີ,ມີທິວທັດທຳມະຊາດແຖບຮ້ອນຢ່າງສວຍງາມ,ຮີດຄອງປະເພນີຊົນເຜົ່າທີ່ມີປະຫວັດດົນນານ,ຊັບພະຍາກອນການທ່ອງທ່ຽວ ແລະ ພືດເສດຖະກິດແຖບຮ້ອນອັນອຸດົມສົມບູນ.

ດ່ານຊິ່ງສຸຍເຫີເມັ້ງຕິ້ງເປັນດ່ານເກົ່າສຳລັບການຈໍລະຈອນສິນຄ້າ,ເງິນທຶນ ແລະ ແຮງຄົນລະຫວ່າງເມັ້ງຕິ້ງກັບປະເທດ ແລະ ເຂດແຄວ້ນອ້ອມຂ້າງ,ປະຈຸບັນ,ດ່ານ




ສູນຮ່ວມສຳພັນກວດກາດ່ານຊິນສຸຍເຫີເມັ້ງຕິ້ງ
孟定清水河口岸联检中心




ດ່ານຊີງສຸຍເຫີເມີ່ງຕິ່ງ
孟定清水河口岸

ແຫ່ງນີ້ໄດ້ທັນຈາກ"ເສັ້ນທາງຜ້າໄໝບູຮານພາກຕາເວັນຕົກສ່ຽງໃຕ້" ແລະ "ເສັ້ນທາງເກົ່າແກ່ແຫ່ງການຂົນສົ່ງໃບຊາ",ກາຍມາເປັນດ່ານປະເພດທີ 1 ທີ່ຈີນເປີດປະຕູສູ່ພາຍນອກ,ອາຄານກວດກາ,ສະໜາມສິນຄ້າ,ແລະ ສິ່ງກໍ່ສ້າງກວດກາສຳຮອງຕ່າງໆມີຢ່າງຄົບຊຸດ,ເຊິ່ງສາມາດຕິດຕາມຄຸ້ມຄອງບຸກຄົນ ແລະ ລົດຍົນທີ່ເຂົ້າອອກເມືອງຕ່າງຫາກ,ຮູບການທຸລະກິດກໍ່ທັນຈາກການຄ້າມູນຄ່າໜ້ອຍໂດຍແລກປ່ຽນສິນຄ້າມາເປັນການຄ້າຊາຍແດນ,ການຄ້າສິ່ງຕໍ່,ແລະ ການຄ້າມູນຄ່າສູງ.

ດ່ານຊີ່ງສຸຍເຫີເມີ້ງຕິ້ງໄດ້ກວມເນື້ອທີ່ກວ້າງຂວາງ,ຈາກເມີ້ງຕີ້ງຮອດຫູບັນ ແລະ ກຸນນົງທີ່ເປັນເມືອງສຳຄັນຂອງມຽນມາແມ່ນມີໄລຍະຫ່າງ 15 ກິໂລແມັດ ແລະ 24 ກິໂລແມັດ,ໄປສູ່ລາຊູທີ່ເປັນສະຖານທີ່ຈໍລະຈອນສິນຄ້າອັນສຳຄັນຢູ່ພາກເໜືອຂອງມຽນມາແມ່ນ 161 ກິໂລແມັດ,ໄປຮອດຢາງກຸງແມ່ນ 1136,9 ກິໂລແມັດ.ນັບແຕ່ດ່ານຊີ່ງສຸຍເຫີເມີ້ງຕີ້ງສ້າງຕັ້ງຂຶ້ນເປັນຕົ້ນມາ,ກໍ່ເປັນຊ່ອງທາງສຳຄັນສຳລັບການເຄື່ອນໄຫວດ້ານການຄ້າຢູ່ພາກຕາເວັນຕົກຂອງແຂວງຢຸນນານ,ບໍລິເວນການເຄື່ອນໄຫວການຄ້າຊາຍແດນກັບມຽນມາໄດ້ກວມເອົາເມືອງລາວໄກ,ເຂດວາປາງ,ກຸນນົງ,ຫູບັນ,ແລະ ລາຊູ,ຈົນຮອດເມືອງຕາວາ ແລະ ຢາງກຸງເປັນຕົ້ນ.

ຄຽງຄູ່ກັບການພັດທະນາຂອງດ່ານຊີ່ງສຸຍເຫີເມີ້ງຕີ້ງ,ໂຄງປະກອບສິນຄ້າຂາເຂົ້າຂາອອກຂອງວິສາຫະກິດຢູ່ເມີ້ງຕີ້ງນັ້ນເອງກໍ່ໄດ້ຮັບການປັບປຸງດີຂຶ້ນເລື້ອຍໆ,ບົນພື້ນຖານສິນຄ້າປະເພດຕ່າງໆ,ເຊັ່ນ,ເຄື່ອງໃຊ້ປະຈຳວັນ,ຢາງພາລາ,ຫີນແຮ່ ແລະ ໄມ້ທ່ອນເປັນຕົ້ນໃນເມື່ອກ່ອນ,ໄດ້ເພີ່ມການສົ່ງອອກສິນຄ້າປະເພດກົນຈັກ,ເຄື່ອງຈັກວິສະວະກຳ ແລະ ຜະລິດຕະພັນເອເລັກໂຕຼນິກໄປສູ່ປະເທດມຽນມາ ແລະ ປະເທດອື່ນໆຢູ່ອ້ອມຂ້າງ.

ວັນທີ 20 ທັນວາ 2011,ເຂດຮ່ວມມືເສດຖະກິດຊາຍແດນເກິງມາ(ເມີ້ງຕີ້ງ)ໄດ້ເປີດບັ້ນກໍ່ສ້າງຢ່າງເປັນທາງການ.ເຂດຮ່ວມມືເສດຖະກິດຊາຍແດນດັ່ງກ່າວຖືເມີ້ງຕີ້ງເປັນເຂດໃຈກາງ,ຖືບໍລິເວນດ່ານນານຊານ ແລະ ດ່ານຊ່າງຢວນເປັນສອງປີກ,ແຜນລວມຄື"ເຂດໜຶ່ງຫຼາຍສວນ",ເຂດໃຈກາງມີເນື້ອທີ່ 3,47 ກິໂລຕາແມັດ,ເຂດບໍລິເວນອ້ອມຂ້າງ 50 ກິໂລຕາແມັດ,ແລະ ມີເຂດບໍລິເວນສຳຮອງ 200 ກິໂລຕາແມັດ,ສ້າງສາເຂດໃຈກາງເມີ້ງຕີ້ງເກິງມາ,ເຂດສວນນານຊານເຈີ້ນຄ່າງ,ແລະ ເຂດສວນຢົງເຫີຊ່າງຢວນ.ເຂດຮ່ວມມືເສດຖະກິດຊາຍແດນເກິງມາ(ເມີ້ງຕີ້ງ)ຕັ້ງຢູ່ຟາກຈີນເສັ້ນຊາຍແດນຈີນມຽນ,ມີທ່າແຮງດ້ານຊັບພະຍາກອນອັນພົ້ນເດັ່ນ.ຕະຫຼາດຊັບພະຍາກອນອາຊີໃຕ້ ແລະ ອາຊີຕາເວັນອອກສ່ຽງໃຕ້ອັນໃຫຍ່ຫຼວງ,ໄດ້ສ້າງເງື່ອນໄຂເອື້ອອຳນວຍໃຫ້ແກ່ເຂດຮ່ວມມືເສດຖະກິດຊາຍແດນໃນການນຳໃຊ້ຕະຫຼາດ ແລະ ຊັບພະຍາກອນທັງພາຍໃນ ແລະ ຕ່າງປະເທດ,ເພື່ອບັນລຸການພັດທະນາ ແລະ ເປີດປະຕູຢ່າງຂະໜາດໃຫຍ່.





# ດ່ານຊ່າງຢວນ

文 / 楚 然

## 沧源口岸

沧源口岸位于云南省临沧市沧源县，有芒卡和永和两个出境通道，与缅甸掸邦第二特区接壤，是西南地区通往东南亚的一个重要通道。1996 年 9 月 27 日，沧源口岸经云南省政府批准为二类口岸。




ຫຼັກຊາຍແດນເລກທີ 167 ຊາຍແດນຈີນ-ມຽນມາທີ່ຊ່ອງທາງຢົງເຫີດ່ານຊ່າງຢວນ
沧源口岸永和通道的中缅边境 167 号界碑 CFP 图

ດ່ານຊ່າງຢວນຕັ້ງຢູ່ເມືອງຊ່າງຢວນນະຄອນລິນຊ່າງແຂວງຢຸນນານຈີນ,ມີເສັ້ນທາງອອກເມືອງສອງແຫ່ງ,ຄືມັງຄາ ແລະ ຢົງເຫີ,ຕິດກັບເຂດພິເສດທີ 2 ຂອງມຽນມາ,ເປັນທາງຜ່ານສຳຄັນຈາກພາກຕາເວັນຕົກສ່ຽງໃຕ້ຈີນອອກໄປສູ່ອາຊີຕາເວັນອອກສ່ຽງໃຕ້.ວັນທີ 27 ກັນຍາປີ 1996,ອຳນາດການປົກຄອງແຂວງຢຸນນານໄດ້ອະນຸມັດດ່ານຊ່າງຢວນເປັນດ່ານປະເພດທີ 2.

ເມືອງຊ່າງຢວນຕັ້ງຢູ່ເຂດຊາຍແດນພາກຕາເວັນຕົກສ່ຽງໃຕ້ຂອງຈີນ,ແລະ ຢູ່ຕອນກາງຂອງຊາຍແດນຈີນມຽນມາ,ມີເນື້ອທີ່ 2445 ກິໂລຕາແມັດ,ປະຊາກອນ 1 ແສນ 7 ໝື່ນກວ່າຄົນ,ໃນນັ້ນເຜົ່າວາກວມ 85,1%,ເປັນໜຶ່ງໃນເມືອງປົກຄອງຕົນເອງເຜົ່າວາພຽງສອງແຫ່ງໃນທົ່ວປະເທດຈີນ,ກໍ່ເປັນເມືອງຕັ້ງຖິ່ນຖານໃຫຍ່ທີ່ສຸດຂອງເຜົ່າວາ.

# ດ່ານນານຊານເຈີ້ນຄ່າງ

文 / 楚 然　　图 / 刘江林

## 镇康南伞口岸

南伞口岸位于云南省临沧市镇康县城西南的南伞镇，是中国通往东南亚的重要陆路通道之一。1991 年，云南省人民政府批准南伞口岸为国家二类（省级）口岸。南伞交通便利，有公路可直达耿马孟定、镇康县城、保山龙陵、缅甸果敢县城。

ດ່ານນານຊານຕັ້ງຢູ່ເມືອງນ້ອຍນານຊານທີ່ຢູ່ທາງຕາເວັນຕົກສ່ຽງໃຕ້ຂອງເມືອງເຈີ້ນຄ່າງນະຄອນລິນຊ່າງແຂວງຢຸນນານຈີນ,ເປັນທາງບົກສຳຄັນຈາກຈີນໄປສູ່ອາຊີຕາເວັນອອກສ່ຽງໃຕ້.ປີ 1991,ອຳນາດການປົກຄອງແຂວງຢຸນນານໄດ້ອະນຸມັດດ່ານນານຊານເປັນດ່ານປະເພດທີ 2 (ລະດັບແຂວງ)ຂອງຈີນ.ດ່ານນານຊານມີການຄົມມະນາຄົມທີ່ສະດວກ,ມີທາງຫຼວງໄປສູ່ເມີ້ງຕີ້ງຂອງເກິງມາ,ເມືອງເຈີ້ນຄ່າງ,ໂລງລິງຂອງປາວສານ,ແລະ ເມືອງກົວການຂອງມຽນມາ.

ເມື່ອເຂົ້າສູ່ເມືອງນ້ອຍນານຊານ,ຈະໄດ້ເຫັນປະຕູ




ດ່ານນານຊານ
南伞口岸

ດ່ານທີ່ສູງໆ;ມີລົດຂົນສົ່ງປະເພດຕ່າງໆລຽນແຖວເພື່ອຜ່ານດ່ານ;ຢູ່ໃນອາຄານກວດກາຜ່ານດ່ານ,ມີປະຊາຊົນໄປມາຢ່າງບໍ່ຂາດສາຍ,ພະນັກງານກວດກາ ແລະ ອອກເອກະສານເຮັດວຽກຢ່າງຫ້າວຫັນ;ຢູ່ສະໜາມວັດທະນະທຳປະຕູແຫ່ງຊາດມີຮູບແກະສະຫຼັກ ແລະ ດອກໄມ້ຢ່າງສວຍງາມ,ມີນັກທ່ອງທ່ຽວໄປໆມາໆຢ່າງຫຼວງຫຼາຍ.

ພາຍໃຕ້ການເລັ່ງລັດສ້າງສາພັດທະນາຂອງສອງຝ່າຍຈີນມຽນມາ,ເມືອງນ້ອຍນານຊານທີ່ບໍ່ເຄີຍມີຊື່ສຽງປານໃດໄດ້ປະກົດມີສະພາບພິເສດຄື:ເມືອງໜຶ່ງເຊື່ອມຕໍ່ສອງປະເທດ,ຫຼັກໝາຍຊາຍແດນຕັ້ງຢູ່ໃນເມືອງ,ເຊິ່ງປຽບເໝືອນໄຂ່ມຸກອັນສວຍງາມຢູ່ຊາຍແດນຈີນມຽນມາ.

ປີ 2005,ເທສະບານເມືອງເຈີ້ນຄ່າງຍ້າຍເຂົ້າສູ່ນານຊານແລ້ວ,ການກໍ່ສ້າງດ່ານກໍ່ໄດ້ຈັດເຂົ້າໃນງົບປະມານສ້າງເມືອງໃໝ່,ນານຊານກໍ່ກາຍເປັນສູນການເມືອງ,ເສດຖະກິດ ແລະ ວັດທະນະທຳຂອງເມືອງເຈີ້ນຄ່າງເທື່ອລະກ້າວ.

ໃນຊຸມປີມໍ່ໆມານີ້,ພາກສ່ວນຄຸ້ມຄອງດ່ານນານຊານໄດ້ປະຕິບັດຕາມມາດຕະຖານປະດິດສ້າງສະພາບແວດລ້ອມແຫ່ງການເຂົ້າອອກເມືອງ,ຄື:"ປະຕິບັດກົດໝາຍຢ່າງມີມາລະຍາດ,ໃຫ້ການບໍລິການຢ່າງສຸດໃຈ,ສະດວກວ່ອງໄວ,ປະສິດທິພາບສູງ,ມີຄວາມກົມກຽວກັນ",ຕັ້ງໜ້າປັບປຸງກົນໄກໃໝ່,ຫັນປ່ຽນແນວຄິດເກົ່າ,ຮັບໃຊ້ແຜນລວມ,ຈັດຕັ້ງປະຕິບັດການຄຸ້ມຄອງຜ່ານດ່ານກັບການບໍລິການຢ່າງເໝາະສົມ,ອອກແຮງສ້າງຄວາມສາມາດໃນການຮັບໃຊ້ການຜ່ານດ່ານ,ແລະ ຮັບໃຊ້ການກໍ່ສ້າງເມືອງດ່ານໜ້າ,ບົດບາດບໍລິການສັງລວມນັບມື້ນັບໄດ້ຮັບການປັບປຸງດີຂຶ້ນ,ວຽກງານສະເໜີດ່ານນານຊານໃຫ້ເປັນດ່ານປະເພດທີ 1 ແຫ່ງຊາດກຳລັງກ້າວໄປໜ້າຢ່າງສະດວກ.




# ບໍລິສັດລາວເຈແລ່ມເຈີຈຳກັດ

老挝成捷企业有限公司







ທ່ານ ຮວງ ຈິນຜູ ປະທານບໍລິສັດ
黄金浦 董事长



ທີ່ຢູ່:ຫຼັກ 8ຖະໜົນທ່າເດື່ອນະຄອນຫຼວງວຽງຈັນ
ເບີໂທ: 856-21-314880
ມືຖື: 856-20-55763908
ແຟກ: 856-21-314882

昆明门市部：昆明市白龙路世博大道387号
豪都家具三楼
电话：13759179402
老挝厂址：老挝万象市塔德路八公里处
电话：856-21-314880
856-20-55763908
传真：856-21-314882









图/新华社

# ອີອູ ເມືອງການຄ້າເຄື່ອງໄຟຟ້າເພີ້ມເດັ່ນຂຶ້ນໃນໂລກ

## 义乌 崛起世界电商之都

交易超过 50 万笔的淘宝"金冠"店铺，近十分之一在浙江省义乌市；2012 年淘宝销售额排名，义乌居中国县级市第一；全球四大快递巨头都在此开展业务……

在新一轮的电商大潮中，义乌，这座以"全球最大的小商品集散中心"著称的城市，正在崛起成为全球瞩目的世界电商之都。



ທ່ານອາຍຫລີ ອາເຫີລີ(ຊ້າຍມື)ລູກຄ້າອາເມລິກາກຳລັງເລືອກເອົາຖົງຂອງຂວັນທີ່ເມືອງການຄ້າເສດຖະກິດສາກົນອີອູເຈີ້ຈຽງ
美国客商艾力·阿赫利（左）在浙江义乌国际商贸城选购礼品袋




ມຸມໜຶ່ງເຂດເຄື່ອງສຳອາງໃນເມືອງການຄ້າເສດຖະກິດສາກົນອີອູ
义乌国际商贸城的饰品区一角

ຮ້ານຄ້າ"ມຸງກຸດຄຳ"ຂອງການຂາຍເຄື່ອງທາງອິນເຕີແນັດທາວປາວທີ່ໄດ້ຂາຍ 5 ແສນເຄື່ອງນັ້ນເກືອບໜຶ່ງສ່ວນສິບແມ່ນເຄື່ອງມາຈາກເມືອງອີອູແຂວງເຈີຈຽງ;ໃນປີ 2012,ການຈຳໜ່າຍເຄື່ອງທາງອິນເຕີເນັດຂອງທາວປາວລຽນຊື້ນັ້ນ,ອີອູເປັນອັນດັບທີໜຶ່ງຂັ້ນເມືອງຂອງຈີນ,ຍັກໃຫຍ່ຂອງບໍລິສັດຂົນສົ່ງພັດສະດຸພັນດ່ວນທັງສີ່ໃນທົ່ວໂລກລ້ວນແຕ່ເປີດກິດຈະການຢູ່ທີ່ນີ້......

ໃນທ່າມກາງກະແສການຄ້າເຄື່ອງໄຟຟ້າຮອບທີໜຶ່ງໃໝ່,ເມືອງອີອູຊຶ່ງເປັນບ່ອນເຕົ້າໂຮມ ແລະ ແຈກຢາຍສິນຄ້ານ້ອຍໃຫ່ຍຫລາຍກວ່າໝູ່ໃນໂລກທີ່ມີຊື່ສຽງໂດ່ງດັງກຳລັງພົ້ນເດັ່ນຂື້ນກາຍເປັນເມືອງເຄື່ອງໄຟຟ້າໃນໂລກທີ່ປະຈັກຕາໄປທົ່ວໂລກ.

ເລີ່ມແຕ່ປີ 1998 ເປັນຕົ້ນມາ,ການຄ້າເຄື່ອງໄຟຟ້າຂອງອີອູ--ໄດ້ເລີ່ມຕົ້ນຈະເລີນຂື້ນ--ເຂົ້າສູ່ສະໄໝຈະເລີນຮຸ່ງເຮືອງໃນອິນເຕີເນັດ,ທ້າຍລາຊະວົງໝິງຕົ້ນລະຊາວົງຊີງກໍໄດ້ມີຈິດສຳນຶກດ້ານສິນຄ້າ"ຂົນໄກ່ແລກນ້ຳຕານ",ເຄີຍມີບຸກຄົນອີອູທີ່ມີເນື້ອຫາວັດທະນະທຳການຄ້າເຊັ່ນ:ຮ້ານຄ້າຝູຖົງ,ຕະຫລາດບູຮານເປີຍລຸຍເປັນຕົ້ນ.ໄດ້ສືບທອດມູນເຊື້ອອັນດີງາມທີ່ວ່າ"ກ້າບຸກກ້າເຮັດ,ກ້າປະດິດສ້າງໃໝ່",ເດີນໄປສູ່ແຖວໜ້າໃນຍຸກສະໄໝ;ບ້ານຊີນໄຫຍຫລີວຖືກເອີ້ນຊື່ວ່າ"ບ້ານທີ 1 ທາວປາວຂອງຈີນ",ທົ່ວທີ່ແມ່ນແນ່ໃສ່ການຄ້າເຄື່ອງໄຟຟ້າທາວປາວໃຊ້ຮູບການຂາຍຍົກປະສົມບວກໃສ່"ສິນຄ້າທີ່ຂາຍດີໃນໂລກ"ທີ່ບໍລິການເໜົາອົ້ມູນ....ສິ່ງດັ່ງກ່າວນີ້ລ້ວນແຕ່ເກີດຈາກເມືອງອີອູໝົດ.

ຈົນຮອດເຄິ່ງຕົ້ນຂອງປີ 2013 ,ບັນຊີທະນາຄານລູກຄ້າຂອງທາວປາວ(ລວມທັງທຽນເມົາ)ທີ່ມີສະຖານທີ່ຈົດທະບຽນຢູ່ອີອູນັ້ນມີເຖິງ 1 ແສນຄົນ,ສັງລວມເວທີລູກຄ້າເຄື່ອງໄຟຟ້າໃຫຍ່ຜູ້ອື່ນ ແລະ ບັນຊີທະນາຄານທີ່ໄດ້ຈົດທະບຽນຢູ່ອີອູນັ້ນລວມມີ 213.700 ບັນຊີ.ນັກທຸລະກິດເຄື່ອງໄຟຟ້າໄດ້ກາຍເປັນກຸ່ມທຸລະກິດໃຫຍ່ກວ່າໝູ່ຂອງອີອູ.

ນັກທຸລະກິດເຄື່ອງໄຟຟ້າຂ້າມຊາດເພີ່ມຂື້ນຫຼາຍ. ໃນປີ 2012, ຈຳນວນການຄ້າຂາຍຂອງອີອູທີ່ຈົດທະບຽນຢູ່ອີເບ eBay ເພີ່ມຂື້ນ 3 ເທົ່າທຽບໃສເວລາດຽວກັນຂອງປີທີ່ຜ່ານມາ,ຈຳນວນເງິນຄ້າຂາຍຂອງຜູ້ຄ້າຂາຍອີອູທາງດ້ານຂາຍດ່ວນໄດ້ເພີ່ມຂື້ນ 400% ທຽບໃສ່ເວລາດຽວກັນຂອງປີທີ່ຜ່ານມາ.

"ແຫຼ່ງສິນຄ້ານ້ອຍອີອູກວມເອົາ 1/3 ຂອງທົ່ວປະເທດຈີນ."ຜູ້ຮັບຜິດຊອບຂອງຫ້ອງການທຸລະກິດເອເລັກໂຕຼນິກທີ່ກ່ຽວຂ້ອງແນະນຳວ່າ,ອີອູໄດ້ເຕົ້າໂຮມວິສາຫະກິດຜະລິດຜະລິດຕະພັນບໍລິໂພກປະຈຳວັນ 2 ແສນກວ່າແຫ່ງ,,ຜະລິດສິນຄ້າ 1 ລ້ານ 7 ແສນກວ່າປະເພດ,.ນອກຈາກນັ້ນ,ໃຕ້ການຊັກນຳຂອງແຫ່ງດັ່ງກ່າວ,ບໍລິເວນອ້ອມຂ້າງກໍໄດ້ກາຍເປັນຖານທີ່ຜະລິດສິນຄ້ານ້ອຍທີ່ມີຂະໜາດໃຫຍ່.ປັດຈຸບັນນີ້,ສິນຄ້າ 70% ຂອງພໍ່ຄ້າຂາຍຍ່ອຍມາຈາກຕະຫລາດອີອູ;ສິນຄ້າ 80% ຂື້ນໄປຂອງພໍ່ຄ້າຂາຍສົ່ງມາຈາກຕະຫລາດອີອູ.

ອຳນາດການປົກຄອງເມືອງອີອູໄດ້ມີໄຫວພິບອັນ




ທ່ານຊາເອີດີ(ຂວາມື 1)ລູກຄ້າໂມລົກໂກໄດ້ຊອກຮູ້ເຮືອນໄມ້ນິເວດວິທະຍາທີ່ວິສາຫະກິດແຫ່ງໜຶ່ງຜະລິດອອກໃນງານວາງສະແດງຜະລິດຕະພັນປ່າໄມ້ສາກົນເຊິ່ງແມ່ນຮ້ານຄ້າຂາຍສິນຄ້ານ້ອຍຂອງຈີນອີອູເປັນຜູ້ຈັດຂຶ້ນ.
摩洛哥客商萨尔迪（右一）在义乌中国小商品城承办的国际森林产品博览会上了解义乌一家企业推出的生态木屋

ແຫຼມຄົມ,ຄວາມສຳຄັນພັດທະນາກິດຈະການເອເລັກໂຕຼນິກເພື່ອຊຸກການຄ້າກັບຕ່າງປະເທດຫັນປ່ຽນຮູບແບບ ແລະ ຍົກຊັ້ນ."ຄະນະພັກເມືອງ ແລະ ອຳນາດການປົກຄອງເມືອງອີອູໄດ້ກຳນົດຖານະກິດຈະກຳເອເລັກໂຕຼນິກເປັນອຸດສາຫະກຳຍຸດທະສາດ ແລະ ນຳໜ້າ,ບຳລຸງສ້າງເປັນຈຸດສຸມ, ຖືເອົາກິດຈະກຳເອເລັກໂຕຼນິກເປັນຫົວຈັກຫຼັກຂອງຕະຫລາດອີອູຫັນປ່ຽນຮູບແບບ ແລະ ຍົກຊັ້ນ, ອອກແຮງຊຸກດັນໂຄງການກິດຈະກຳເອເລັກໂຕຼນິກ ແລະ ຕະຫລາດ,ໄດ້ວາງມາດຕະການນອກງານເປັນລະບົບໜຶ່ງເຊັ່ນ: ທາງດ້ານອົງການການຈັດຕັ້ງ,ຮັບປະກັນເງິນທຶນ,ເວທີພັດທະນາ ແລະ ອື່ນໆ".ຜູ້ຮັບຜິດຊອບຂອງຫ້ອງການກິດຈະກຳເອເລັກໂຕຼນິກທີ່ກ່ຽວຂ້ອງແນະນຳວ່າຈັ່ງຊັ້ນ.

ໂດຍສະເພາະທາງດ້ານການກໍ່ສ້າງບຸກຄະລາກອນ, ອີອູໄດ້ເລີ່ມຕົ້ນໂຄງການຝຶກອົບຮົມບຸກຄະລາກອນກິດຈະກຳເອເລັກໂຕຼນິກເປັນຈຳນວນ 3 ແສນຄົນໃນເດືອນ 6 ປີ 2013.ໄດ້ເລີ່ມຕົ້ນການກະກຽມບຸກຄະລາກອນກິດຈະກຳເອເລັກໂຕນິກແຮໄວ້ໄວກວ່າໝູ່. ຂະແໜງການຈັດຕັ້ງຂອງຄະນະພັກເມືອງອີອູໄດ້ຂົນຂວາຍນາຍບ້ານນັກສຶກສາ 189 ກວ່າຄົນເຂົ້າສູ່ວິສາຫະກິດ,ຮ່ວມກັບວິສາຫະກິດ 5100 ແຫ່ງຂອງຄຸ້ມບ້ານຂອງຖະໜົນທັງໝົດ,ເປີດການຊີ້ນຳທັກສະກິດຈະກຳເອເລັກໂຕນິກເພື່ອຊ່ວຍຊູວິສາຫະກິດພັດທະນາກິດຈະກຳເອເລັກໂຕຼນິກ. ໂດຍຜ່ານເວລາ 4 ເດືອນເມືອງອີອູໄດ້ຝຶກອົບຮົມບຸກຄະລາກອນກິດຈະກຳເອເລັກໂຕນິກ 1 ແສນ 8 ໝື່ນກວ່າຄົນອອກມາ.

ໃຕ້ການຊຸກຍູ້ຂອງມາດຕາການ ແລະ ນະໂຍບາຍໃຫ້ເປັນລະບົບໜຶ່ງ,"ພື້ນຕອບສະໜອງພື້ນທີ່ຕ່ຳ"ຂອງພໍ່ຄ້າເອເລັກໂຕຼນິກກຳລັງສະແດງອອກາະແຈ້ງ.ເຮັດທຸລະກິດເອເລັກໂຕຼນິກໄປອີອູໄດ້ກາຍເປັນກະແສຮ້ອນແລ້ວ.

ວັນທີ 26 ເດືອນ 11,ອຳນາດການປົກຄອງເມືອງອີອູ ແລະ ເຄືອຂ່າຍເຕືອນຮວງຮ່ວມສຳພັນສ້າງ"ສູນສິນຄ້າເຄືອຂ່າຍທົ່ວໂລກຂອງອີອູໄດ້ຂຶ້ນເວັບໄຊຢ່າງເປັນທາງການແລ້ວ."ການລິເລີ່ມສູນດັ່ງກ່າວນີ້ທີ່ມີຈຸດປະສົງເຕົ້າໂຮມຂໍ້ມູນຂ່າວສານກິດຈະການການຄ້າ ແລະ ສິນຄ້າໃນທ້ອງຖິ່ນ.ສ້າງສາງຈຳລອງໃນເຄືອຂ່າຍແຫ່ງໜຶ່ງ ແລະ ສາງຕົວຈິງລຸ່ມເຄືອຂ່າຍ ແລະ ສາງເປີດກວ້າງແຫຼ່ງສິນຄ້າຂອງການຄ້າຕ່າງປະເທດທີ່ມີສູນເຕົ້າໂຮມ ແລະ ແຈກຢາຍຈໍລະຈອນສິນຄ້າປະສານສົມທົບກັນ,ຈະເອົາຜະລິດຕະພັນຈີນຈຳໜ່າຍທົ່ວໂລກໂດຍກົງຈາກທາງສາຍໄໝອິນເຕີເນັດ.

"ສູນທຸລະກິດອິນເຕີເນັດທົ່ວປະເທດ,ສູນຈຳໜ່າຍສິນຄ້າອິນເຕີເນັດໃນທົ່ວໂລກ,ດົນສູງພັດທະນາກິດຈະກຳເອເລັກໂຕຼນິກຂ້າມຊາດ",ອັນນີ້ແມ່ນແຜນວາດກິດຈະກຳເອເລັກໂຕຼນິກທີ່ປະດິດສ້າງເມືອງກິດຈະກຳເອເລັກໂຕຼນິດສາກົນຂອງອຳນາດການປົກຄອງ ແລະ ຄະນະພັກເມືອງອີອູແຕ້ມອອກມານັ້ນ.ຢູ່ໃຕ້ແຜນວາດນີ້,ກຳລັງເປີດວຽກງານເປັນລະບົບໜຶ່ງ,"ທ່າເຮືອອີອູ"ໄລຍະທີ 1 ທີ່ມີປະລິມານໜ້າວຽກ 1 ລ້ານ 1 ແສນທີ່ບຈອນເທນເນີນາດຖານໄດ້ສ້າງສຳເລັດນຳໃຊ້ແລ້ວ.ຕົວເມືອງທ່າທາງບົກສາກົນອີອູໄດ້ຮັບການກວດຜ່ານຂອງເອເປັກ APEC,ສູນຈໍລະຈອນສິນຄ້າປົກປ້ອງພາສີ ກໍຈະຖືກອະນຸມາດກໍ່ສ້າງໃນທ້າຍປີນີ້, ໂຄງການຕົວເມືອງກິດຈະກຳເອເລັກໂຕຼນິກສາກົນທີ່ມີເນື້ອທີ່ 670 ມູນັ້ນກຳລັງດຳເນີນໄປຢ່າງອັນອົງອ,ກະວ່າ,ສ້າງສຳເລັດແລະນຳໃຊ້ໃນປີ 2016.



ທ່ານເຊີນຢີ (ຂວາມື2) ຜູ້ຮັບຜິດຊອບບໍລິສັດການຄ້າໄທຊຽງນະຄອນອີອູພວມຕໍ່ລອງລາຄາກັບພໍ່ຄ້າອີຫລ່ານ 2 ຄົນ
义乌市泰翔贸易有限公司负责人陈郁（右二）在和两位伊朗客商讨价还价

图 / 彭正华

# ທະນາຄານລາວຈີນສ້າງຂົວທະນາຄານຂ້າມຊາດ




## 老中银行搭建跨境金融桥梁

1 月 22 日，由富滇银行、老挝外贸银行合资成立的老中银行在老挝首都万象正式开业，这是老挝央行批准的首家中老合资金融机构，也是中国首家由银监会批准在国外设立分支机构的城市商业银行。

ວັນທີ 22 ມັງກອນ 2014,ທະນາຄານລາວຈີນທີ່ແມ່ນທະນາຄານຝູ່ຕ່ຽນ ແລະ ທະນາຄານການຄ້າຕ່າງປະເທດລາວຮ່ວມທຶນສ້າງຂຶ້ນນັ້ນໄດ້ເປີດບໍລິການຢ່າງເປັນທາງການຢູ່ນະຄອນຫຼວງວຽງຈັນ,ນີ້ເປັນອົງກອນທະນາຄານຮ່ວມທຶນຈີນລາວແຫ່ງທຳອິດທີ່ໄດ້ຮັບການອະນຸມັດຈາກທະນາຄານແຫ່ງ ສປປ ລາວ,ກໍ່ເປັນທະນາຄານການຄ້າຕົວເມືອງແຫ່ງທຳອິດຂອງຈີນທີ່ຄະນະກຳມະການຕິດຕາມຄຸ້ມຄອງການທະນາຄານຈີນອະນຸມັດໃຫ້ສ້າງອົງການສາຂາຢູ່ຕ່າງປະເທດ.

ຢູ່ຕາມຖະໜົນໄກສອນພົມວິຫານທີ່ຕັ້ງຢູ່ໃຈກາງນະຄອນຫຼວງວຽງຈັນມີຄວາມຄຶກຄື້ນຫຼາຍ,ຢູ່ຕາມຖະໜົນສາຍນີ້ມີອົງການຈັດຕັ້ງ ແລະ ວິສາຫະກິດທີ່ສຳຄັນຢ່າງຫຼວງຫຼາຍ,ທະນາຄານລາວຈີນກໍ່ຕັ້ງຢູ່ໃນຖະໜົນສາຍນີ້. ນີ້ເປັນຕຶກອັນໃໝ່ອ່ຽມ,ຢູ່ຊັ້ນລຸ່ມເປັນປະຕູແກ້ວໃສທີ່ມີລັກສະນະທັນສະໄໝ,ສິງໂຕຫີນຄູ່ໜຶ່ງທີ່ມີທ່າທາງສະຫງ່າຜ່າເຜີຍຕັ້ງຢູ່ໜ້າປະຕູສະແດງໃຫ້ເຫັນວ່າອົງການແຫ່ງນີ້ມີການພົວພັນອັນໃກ້ຊິດກັບປະເທດຈີນ,ປ້າຍສີຟ້າຂຽນດ້ວຍທັງພາສາຈີນ ແລະ ພາສາລາວທີ່ວ່າ"ທະນາຄານລາວຈີນ",ແລະ ມີເຄື່ອງໝາຍທະນາຄານທີ່ອອກແບບຕາມດອກຈຳປາ.

ເຖິງວ່າຫາກໍ່ເປີດບໍລິການກໍ່ຕາມ,ແຕ່ທະນາຄານມີບໍລິການຢ່າງຄົບຊຸດ ແລະ ເຄື່ອງອຸປະກອນວິຊາການ, ພະນັກງານປະຈຳຕຳແໜ່ງຕ່າງໆກໍ່ວົນນຳວຽກຂອງຕົນ. ໃນເດືອນພະຈິກ 2011,ທະນາຄານຝູ່ຕ່ຽນຈີນກໍ່ໄດ້ນຳໜ້າສ້າງສຳນັກງານຜູ້ຕາງໜ້າຢູ່ລາວ,ໃນຫຼາຍປີຕໍ່ຈາກນັ້ນ, ເຂົາເຈົ້າໄດ້ດຳເນີນການສຳຫຼວດຄົ້ນຄວ້າຕະຫຼາດຢ່າງກວ້າງຂວາງ,ຊອກຮູ້ຢ່າງລະອຽດຕໍ່ສະພາບແວດລ້ອມການທະນາຄານ,ກົດໝາຍ,ເສດຖະກິດ ແລະ ເງື່ອນໄຂດ້ານຕະຫຼາດ,ໃນທີ່ສຸດໄດ້ຕົກລົງສ້າງອົງການຮ່ວມທຶນຢູ່ລາວ.

ທ່ານເຕີ້ງອີ້,ຜູ້ອຳນວຍການໃຫຍ່ທະນາຄານກ່າວຕໍ່ນັກຂ່າວວ່າ,ທະນາຄານສ້າງຕັ້ງອົງການຢູ່ຕ່າງປະເທດຈະມີສອງຮູບແບບ,ຄືສາຂາທະນາຄານ ຫຼື ສຳນັກງານຕາງໜ້າຂອງທະນາຄານ,ຢູ່ບ່ອນຕັ້ງອົງການ,ທະນາຄານສາຂາຈະບໍ່ແມ່ນນິຕິບຸກຄົນເອກະລາດ,ການດຳເນີນວຽກງານບໍ່ສາມາດເຊື່ອມຕໍ່ກັບທ້ອງຖິ່ນແຫ່ງນັ້ນ,ສະນັ້ນພວກຂ້າພະເຈົ້າຈຶ່ງໄດ້ເລືອກເອົາການສ້າງທະນາຄານລູກ.ທະນາຄານຟູ່ຕ້ຽນເລືອກເອົາທະນາຄານການຄ້າຕ່າງປະເທດມະຫາຊົນລາວທີ່ເປັນທະນາຄານການຄ້າໃຫຍ່ທີ່ສຸດຂອງລາວເປັນຄູ່ຮ່ວມມື,ທະນາຄານດັ່ງກ່າວແມ່ນໄດ້ຈຳໜ່າຍບັດຮຸ້ນສ່ວນຢູ່ໃນຕະຫຼາດຮຸ້ນຂອງລາວ, ຂະໜາດຊັບສິນ,ທັດສະນະບໍລິການ,ແລະ ເຄືອຂ່າຍລ້ວນແຕ່ຢູ່ໃນອັນດັບໜຶ່ງຂອງລາວ.ເດືອນມີນາ 2012,ສອງຝ່າຍໄດ້ເຊັນບົດບັນທຶກຊ່ວຍຈຳວ່າດ້ວຍການຮ່ວມທຶນ, ສ້າງທະນາຄານຮ່ວມທຶນ,ທຶນຂຶ້ນທະບຽນແມ່ນ 300 ຕື້ກີບ, ໃນນັ້ນ,ທະນາຄານຝູ່ຕ່ຽນຖືຮຸ້ນ 51%,ທະນາຄານການຄ້າຕ່າງປະເທດມະຫາຊົນລາວຖືຮຸ້ນ 49%.

ໃນໂຄງການນີ້,ວຽກງານທີ່ໃຊ້ແຮງງານຫຼາຍທີ່ສຸດແມ່ນຕ້ອງສ້າງລະບົບບໍລິການໃຈກາງໃໝ່,ລະບົບດັ່ງກ່າວແມ່ນອີງຕາມນະໂຍບາຍຕິດຕາມຄຸ້ມຄອງ,ສະພາບແວດລ້ອມການຕະຫຼາດ,ແລະ ຄວາມຮຽກຮ້ອງຂອງການບໍລິການ,ໄດ້ຄົ້ນຄວ້າພັດທະນາລະບົບບໍລິການໃຈກາງລະບົບໜຶ່ງໃຫ້ແກ່ທະນາຄານລາວຈີນໂດຍສະເພາະ,ສຳລັບຄວາມແຕກຕ່າງກັນລະຫວ່າງວັດທະນະທຳຂອງສອງປະເທດລາວຈີນກໍ່ເຮັດໃຫ້ທີມງານທະນາຄານໄດ້ຜ່ານໄລຍະລົງເຄີຍ ແລະ ປະສານສົມທົບກັນ.ໃນທີ່ສຸດ,ພາຍໃຕ້ຄວາມພະຍາຍາມຂອງທົ່ວທີມງານ,ທະນາຄານລາວຈີນໄດ້ເປີດບໍລິການຢ່າງເປັນທາງການໃນວັນທີ 22 ມັງກອນ 2014, ແຕ່ນີ້ຕໍ່ໄປ,ຢູ່ປະເທດລາວເລີ່ມມີອົງການທະນາຄານຂອງແຂວງຢຸນນານແລ້ວ.

ວິສາຫະກິດໄປສ້າງທຸລະກິດຢູ່ຕ່າງປະເທດ,ການທະນາຄານຈຳເປັນຕ້ອງຂະຫຍາຍໄປພ້ອມ.ກໍ່ແມ່ນຍ້ອນແນວຄິດແບບນີ້,ທະນາຄານຝູ່ຕ່ຽນເຂົ້າສູ່ປະເທດລາວ,ອີງຕາມຂໍ້ກຳນົດໃນ"ກົດໝາຍວ່າດ້ວຍທະນາຄານການຄ້າ"ຂອງປະເທດລາວ,ທະນາຄານລາວຈີນສາມາດດຳເນີນບໍລິການຮັບເງິນຝາກ,ປ່ອຍເງິນກູ້,ຊຳລະບັນຊີ,ບໍລິການເກັບຄ່າ,ສະໜອງ ແລະ ຄຸ້ມຄອງພາຫະນະຊຳລະບັນຊີ,ການຊື້ຂາຍເງິນຕາຕ່າງປະເທດ,ພົມຈຳໜ່າຍ ແລະ ຊື້ຂາຍຫຼັກຊັບ,ບໍລິການຕົວແທນການທະນາຄານ,ໃຫ້ຄຳປຶກສາດ້ານການເງິນ,ໃຫ້ຄຳປຶກສາດ້ານການລົງທຶນ ແລະ ລະດົມທຶນ, ພ້ອມດ້ວຍບໍລິການອື່ນໆທີ່ກຳນົດໄວ້ໃນກົດໝາຍຂອງລາວ ແລະ ຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ.

ພໍເປີດບໍລິການ,ທະນາຄານລາວຈີນກໍ່ໄດ້ຮັບຄວາມນິຍົມຊົມຊອບຈາກວິສາຫະກິດ ແລະ ນັກທຸລະກິດຂອງລາວ.

ການສ້າງຕັ້ງທະນາຄານລາວຈີນ,ເປັນການທົດລອງອັນສຳຄັນໃນການສົ່ງເສີມການຊຳລະບັນຊີຂ້າມຊາດດ້ວຍເງິນຢວນຈີນ,ເປີດກວ້າງຊ່ອງທາງການທະນາຄານ,ແລະຊຸກຍູ້ໃຫ້ການບໍລິການດ້ານການທະນາຄານກ້າວສູ່ຕ່າງປະເທດ.ທ່ານເຕີ້ງອີ້ກ່າວວ່າ,ພວກຂ້າພະເຈົ້າຈະສ້າງພື້ນຖານຢູ່ນະຄອນຫຼວງວຽງຈັນ,ອາໃສກຸ່ມລູກຄ້າ,ບໍລິການ ແລະ ເຄືອຂ່າຍ,ເລືອກສ້າງຈຸດເຄືອຂ່າຍຢູ່ແຂວງຫຼວງພະບາງ ແລະ ແຂວງອື່ນໆ.ນອກນີ້, ໂດຍຜ່ານການເປີດກວ້າງກຸ່ມລູກຄ້າ ແລະ ພັດທະນາຕະຫຼາດ,ການສະສົມບົດຮຽນໃນຕະຫຼາດຕ່າງປະເທດ,ຮັກສາຄວາມໜ້າເຊື່ອຖື ແລະ ກຳແໜ້ນໂອກາດ,ທະນາຄານຝູ່ຕ່ຽນອາດຈະສາມາດກ້າວໄປສູ່ຕະຫຼາດໃຫຍ່ກວ່າເກົ່າຢູ່ອາຊີຕາເວັນອອກສ່ຽງໃຕ້ ແລະ ອາຊີໃຕ້.

图 / 彭正华

# ສ້າງໄມຕີຈິດດ້ວຍປຶ້ມ ສົ່ງເສີມສາຍພົວພັນຈີນ-ລາວ

## 以书会友筑牢中老情谊

在老挝首都万象，有这样一个市民在闲暇时爱去的地方——万象华文书局。这里不仅是老挝最大的书店，更是因为其丰富、专业的两国读物而广受好评。开业以来，书店已经成为了服务老挝读者、传播中华文化的一张名片，更成为深化中老两国人民友好的桥梁和纽带。

ຢູ່ນະຄອນຫຼວງວຽງຈັນ,ໃນເວລາຫວ່າງປະຊາຊົນມັກໄປເລາະເບິ່ງເລື້ອຍໆ,ຄືຮ້ານປຶ້ມພາສາຈີນນະຄອນຫຼວງວຽງຈັນ,ນີ້ບໍ່ພຽງແຕ່ເປັນຮ້ານຂາຍປຶ້ມໃຫຍ່ທີ່ສຸດຂອງລາວເທົ່ານັ້ນ,ຍັງໄດ້ຮັບການຕີລາຄາສູງຍ້ອນມີປຶ້ມອ່ານສອງປະເທດຈີນລາວຢ່າງຫຼາກຫຼາຍ.ນັບແຕ່ການເປີດບໍລິການເປັນຕົ້ນມາ,ຮ້ານຂາຍປຶ້ມແຫ່ງນີ້ກາຍເປັນນາມບັດໃບໜຶ່ງໃນການຮັບໃຊ້ຜູ້ອ່ານປະຊາຊົນລາວ ແລະ ເຜີຍແຜ່ວັດທະນະທຳຈີນ,ທັງເປັນຊ່ອງທາງສົ່ງເສີມໄມຕີຈິດມິດຕະພາບລະຫວ່າງປະຊາຊົນສອງຊາດລາວຈີນ.

ຮ້ານປຶ້ມພາສາຈີນນະຄອນຫຼວງວຽງຈັນຕັ້ງຢູ່ຖະໜົນຂຸນບູລົມໃຈກາງນະຄອນຫຼວງວຽງຈັນ,ແມ່ນກຸ່ມບໍລິສັດຊິ່ນຈື່ຄຸນໝິງລົງທຶນສ້າງຂຶ້ນ,ເປີດບໍລິການໃນເດືອນມີນາປີ 2012.ຮ້ານປຶ້ມມີເນື້ອທີ່ 700 ກວ່າຕາແມັດ,ມີປຶ້ມ 3 ໝື່ນກວ່າຊະນິດ,ເຊິ່ງລວມທັງສິລະປະວັນນະຄະດີ,ວິທະຍາສາດສັງຄົມ,ປຶ້ມເດັກນ້ອຍ,ຊີວິດການເປັນຢູ່,ວິທະຍາສາດເຕັກນິກ,ແລະ ພາສາຕ່າງປະເທດທັງໝົດ 6 ປະເພດໃຫຍ່,ພ້ອມທັງຈຳໜ່າຍເຄື່ອງອັດສຽງ ແລະ ຮູບ,ເຄື່ອງໃຊ້ວັດທະນະທຳ ແລະ ກິລາເປັນຕົ້ນ.ຜະລິດຕະພັນທີ່ມີຫຼາກຫຼາຍຊະນິດ,ຄຸນນະພາບດີ ແລະ ລາຄາອັນເໝາະສົມໄດ້ສ້າງຄວາມສະດວກໃຫ້ແກ່ປະຊາຊົນນະຄອນຫຼວງວຽງຈັນ,ຈຶ່ງໄດ້ຮັບຄວາມນິຍົມຫຼາຍ.ນັບມາຮອດປະຈຸບັນ,ໄດ້ມີມູນຄ່າຈຳໜ່າຍປະມານ 1 ລ້ານ 5 ແສນ 7 ໝື່ນ 2 ພັນ 3 ຮ້ອຍຢວນ,ໃນນັ້ນ,ການຈຳໜ່າຍປຶ້ມກວມ 38%,ເຄື່ອງໃຊ້ວັດທະນະທຳ ແລະ ກິລາກວມ 62%.







ນອກນີ້,ຮ້ານປຶ້ມດັ່ງກ່າວຍັງໄດ້ສ້າງການພົວພັນກັບສະຖາບັນຂົງຈື້ຂອງມະຫາວິທະຍາໄລແຫ່ງຊາດ,ນຳໃຊ້ຫ້ອງຮຽນຂອງສູນແລກປ່ຽນມິດຕະພາບຊາວໜຸ່ມຈີນລາວທີ່ຕັ້ງຢູ່ໃນຮ້ານປຶ້ມນັ້ນ,ເປີດຊຸດອົບຮົມພາສາຈີນ.ປະຈຸບັນ,ຮ້ານປຶ້ມພາສາຈີນນະຄອນຫຼວງວຽງຈັນໄດ້ກາຍເປັນຫ້ອງຮຽນອົບຮົມເອກະຊົນທີ່ມີສະພາບແວດລ້ອມທີ່ດີ ແລະ ຂະໜາດໃຫຍ່ທີ່ສຸດຢູ່ນະຄອນຫຼວງວຽງຈັນ.

ກຸ່ມບໍລິສັດຊິ່ນຈື່ກັບພາກສ່ວນຖະແຫຼງຂ່າວ ແລະ ພິມຈຳໜ່າຍ,ພາກສ່ວນສຶກສາ,ແລະ ພາກສ່ວນການຄ້າບັນລຸຈេດຕະນາຮ່ວມມືກ່ຽວກັບການດຳເນີນໂຄງການແລກປ່ຽນວັດທະນະທຳ,ເປີດກວ້າງການພິມຈຳໜ່າຍດ້ານຖະແຫຼງຂ່າວ,ໂຄງການອົບຮົມວັດທະນະທຳ,ການທ່ອງທ່ຽວ ແລະ ການສຶກສາຂ້າມຊາດເປັນຕົ້ນ,ຈະຊຸກຍູ້ການແປ,ຈຳໜ່າຍ ແລະ ການຄ້າດ້ານລິຂະສິດຂອງຜົນງານວັດທະນະທຳທີ່ດີເດັ່ນ,ເຮັດໃຫ້ການແລກປ່ຽນດ້ານເສດຖະກິດ ແລະ ວັດທະນະທຳລະຫວ່າງລາວຈີນລົງສູ່ລວງເລິກຕື່ມອີກ.

文、图 / 老挝驻上海总领事馆 提供

# ພິທີສະເຫຼີມສະຫຼອງວັນແມ່ຍິງສາກົນ 8 ມີນາ ທີ່ສະຖານກົງສຸນໃຫຍ່ແຫ່ງ ສປປ ລາວທີ່ນະຄອນຊຽງໄຮ້



## 老挝驻上海总领事馆庆祝三八国际妇女节

2014 年 3 月 8 日下午 3 点，老挝驻上海总领事馆为了回顾国际妇女的传统及老挝妇女为了争取妇女权力进行英勇的斗争直至取得胜利，举行 2014 年三八国际妇女节庆祝仪式。

ໃນວັນທີ 08 ມີນາ 2014 ເວລາ 15:00 ໂມງ,ສະຖານກົງສຸນໃຫຍ່ ແຫ່ງ ສປປ ລາວ ທີ່ນະຄອນຊຽງໄຮ້ ໄດ້ຈັດພິທີສະເຫຼີມສະຫຼອງວັນແມ່ຍິງສາກົນເພື່ອທວນຄືນມູນເຊື້ອວັນແມ່ຍິງສາກົນກໍ່ຄືແມ່ຍິງລາວທີ່ໄດ້ຕໍ່ສູ້ ແລະ ຍາດມາໄດ້ສິດທິຂອງແມ່ຍິງລາວ,ຄວາມເຂັ້ມແຂງ,ກ້າຫານ ແລະ ມີໄຊ.ທ່ານ ນາງ ສີສະໄໝ ຫຼວງຈັນດາວົງ,ກົງສຸນໃຫຍ່ແຫ່ງ ສປປ ລາວທີ່ນະຄອນຊຽງໄຮ້ໄດ້ຂຶ້ນເລົ່າມູນເຊື້ອປະຫວັດຄວາມເປັນມາຂອງວັນທີ 8 ມີນາທັງຍົກໃຫ້ເຫັນຄວາມສຳຄັນນະໂຍບາຍຂອງລັດຖະບານ ສປປ ລາວທີ່ມີຕໍ່ການປົກປ້ອງສິດທິ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍເຊິ່ງໄດ້ກຳນົດໄວ້ໃນລັດຖະທຳມະນູນ ສປປ ລາວ,ພິທີດັ່ງກ່າວໄດ້ຈັດຂຶ້ນເຊິ່ງເປັນການສົບທົບກັນລະຫວ່າງສະຖານກົງສຸນໃຫຍ່ ສປປ ລາວ ແລະ ສະມາຄົມນັກສຶກສາລາວທີ່ນະຄອນຊຽງໄຮ້,ມີນັກສຶກສາ ແລະ ແຂກທີ່ມີກຽດເຂົ້າຮ່ວມ 100 ກ່າວຄົນ.

ໃນພິທີຍັງໄດ້ມີການຕອບຄຳຖາມກ່ຽວກັບວັນດັ່ງກ່າວກໍຄືການຈັດຕັ້ງສະຫະພັນແມ່ຍິງລາວພ້ອມດຽວກັນກໍມີການສະແດງສິລະປະແບບປະເພນີລາວຂອງນັກສຶກສາ,ການເຮັດກິດຈະກຳຫຼິ້ນເກມຮ່ວມກັນ ແລະ ການຮ່ວມພາເຂົ້າສາມັກຄີກັນທັງນີ້ເພື່ອສ້າງຄວາມເບີກບານມ່ວນຊື່ນ,ສ້າງຄວາມສາມັກຄີທັງພາຍໃນ ແລະ ພາຍນອກ,ສ້າງຄວາມໃກ້ຊິດຕິດແທດລະຫວ່າງພະນັກງານກົງສຸນ ແລະ ນັກສຶກສາກໍຄືລະຫວ່າງນັກສຶກສາດ້ວຍກັນ,ປູກຈິດສຳນຶກໃຫ້ນັກສຶກສາ-ນັກຄົ້ນຄ້ວາທີ່ອອກມາສຶກສາ-ຄົ້ນຄ້ວາຢູ່ຕ່າງປະເທດໃຫ້ມີນ້ຳໃຈສາມັກຄີກັນ,ຮັກເຊື້ອແພງຊາດ,ຮັກຄວາມເປັນຊາດລາວ ແລະ ຮັກແພງຄົນລາວດ້ວຍກັນ.

ການຈັດພິທີສະເຫຼີມສະຫຼອງໃນຄັ້ງນີ້,ເປັນຄັ້ງທຳອິດທີ່ພາຍຫຼັງສະຖານກົງສຸນໃຫຍ່ແຫ່ງ ສປປ ລາວ ໄດ້ຈັດພິທີເປີດສະຖານກົງສຸນໃຫຍ່ຢ່າງເປັນທາງການໃນວັນທີ 8 ມັງກອນ 2014 ຜ່ານມານີ້,ເນື່ອງຈາກວ່າເປັນວັນແມ່ຍິງສາກົນຄົບຮອບ 104 ປີກໍຄືໂອກາດຄົບຮອບ 52 ປີທີ່ ສປປ ລາວເຂົ້າເປັນພາຄີຂອງອົງການດັ່ງກ່າວ.





# ບານເຕະມິດຕະພາບຊິງຂັນສະຖານກົງສຸນໃຫຍ່ແຫ່ງ ສປປ ລາວທີ່ນະຄອນຊຽງໄຮ້

## 老挝驻上海总领事馆举行领事杯足球友谊赛

2014 年 3 月 29 日下午 2 时，上海东华大学举行了领事杯足球友谊赛。参加比赛的有上海老挝留学生队、昆山县老挝留学生队、江苏苏州老挝留学生队、浙江杭州老挝留学生队。

ໃນວັນທີ 29 ມີນາ 2014 ເວລາ 14:00 ໂມງໄດ້ມີການແຂ່ງຂັນກິລາບານເຕະຊິງຂັນສະຖານກົງສຸນໃຫຍ່ລະຫວ່າງທີມນັກສຶກສາລາວທີ່ນະຄອນຊຽງໄຮກັບທີມນັກສຶກສາລາວທີ່ເມືອງຂຸນຊານ,ນັກສຶກສາລາວທີ່ເມືອງຊູໂຈ,ແຂວງຈຽງຊູ,ນັກສຶກສາລາວທີ່ເມືອງຫາງໂຈ,ແຂວງເຈີຈຽງ.ບານເຕະມິດຕະພາບໄດ້ຈັດທີ່ມະຫາວິທະຍາໄລຕົງຫົວຂອງນະຄອນຊຽງໄຮ້,ມີຈຸດປະສົງເພື່ອສ້າງຄວາມສາມັກຄີລະຫວ່າງນັກສຶກສາທີ່ນະຄອນຊຽງໄຮ້ກັບບັນດາແຂວງທີ່ຢູ່ອ້ອມຂ້າງນະຄອນຊຽງໄຮ້ເຊິ່ງເປັນແຂວງທີ່ກົງສຸນໃຫຍ່ ສປປ ລາວທີ່ນະຄອນຊຽງໄຮ້ຮັບຜິຊອບ.ແນໃສ່ສ້າງໂອກາດໃຫ້ຂະເຈົ້າໄດ້ໃກ້ສິດກັນ,ໄປມາຫາສູ່ ແລະ ຮັກແພງກັນ.ບານເຕະມິດຕະພາບຄັ້ງນີ້ຈັດຂຶ້ນເຊິ່ງເປັນການສົບທົບກັນລະຫວ່າງສະຖານກົງສຸນໃຫຍ່ ສປປ ລາວ ແລະ ສະມາຄົມນັກສຶກສາ ລາວ ທີ່ນະຄອນຊຽງໄຮ້,ແຂວງເຈີຈຽງ ແລະ ແຂວງຈຽງຊູມີນັກສຶກສາເຂົ້າຮ່ວມ 150 ກວ່າຄົນ.

ບານເຕະມິດຕະພາບຄັ້ງນີ້,ເປັນຄັ້ງທຳອິດທີ່ມີການສົບທົບກັນລະຫວ່າງສະມາຄົມນັກສຶກສາລາວຂອງ 3 ແຂວງແຕ່ເນື່ອງຈາກຝົນຕົກລິນລຽນຕິດກັນຫຼາຍຊົ່ວໂມງເຮັດໃຫ້ການແຂ່ງຂັນຍຸດຕິລົງ ແລະ ຈະຈັດໃຫ້ມີການແຂ່ງຂັນອີກເທື່ອໜຶ່ງໃນໂອກາດສະເຫລີມສະຫຼອງວັນບຸນປີໃໝ່ລາວປີ 2104 ເພື່ອໃຫ້ຮູ້ຜົນໄດ້ເສຍ.ພາຍຫຼັງຍຸດຕິການແຂ່ງຂັນໄດ້ພາກັນຮ່ວມພາເຂົ້າສາມັກຄີ ແລະ ມ່ວນຊື່ນຕາມປະເພນີ.






ສູນການຄ້າສາກົນຊັ່ງຈ່ຽງແຫ່ງປະເທດລາວຕັ້ງຢູ່ລະຫວ່າງຖະໜົນສຸພານຸວົງ ແລະຖະໜົນເຕສອງຂອງນະຄອນຫຼວງວຽງຈັນ ຊຶ່ງຫ່າງຈາກສະໜາມບິນສາກົນວັດໄຕສາມກິໂລແມັດ ປະກອບມີການບໍລິການດ້ານການຄ້າຂາຍ ແລະການທ່ອງທ່ຽວທີ່ຄົບວົງຈອນ ຄືໂຮງແຮມລະດັບສີ່ດາວ ສູນການຄ້າຂະໜາດໃຫຍ່ ອາພາດເມັ້ນແລະສາງເຄື່ອງເປັນຕົ້ນ ເປັນສະຖານທີ່ໜ້າຊື້ເຄື່ອງ ແລະທ່ຽວຊົມ.

老挝三江国际商贸城位于老挝万象 13 号公路与 T2 路之间的黄金地段，距机场三公里，内设有四星级酒店、大型综合商场、公寓、仓库等配套完善的商业与旅游设施，是理想的商务、购物与旅游场所。




ໂຮງແຮມ ຊັ່ງຈ່ຽງ ແກຣນ 老挝三江大酒店

ໂຮງແຮມ ຊັ່ງຈ່ຽງ ແກຣນ ຕັ້ງຢູ່ໃນສູນການຄ້າສາກົນຊັ່ງຈ່ຽງ ຊຶ່ງເປັນໂຮງແຮມລະດັບສີ່ດາວ ປະກອບມີຫ້ອງນອນ 163ຫ້ອງ ຮ້ານອາຫານ ຄາລາໂອເກະ ຫ້ອງອອກກຳລັງກາຍ ສະລອຍນ້ຳ ແລະອື່ນໆ ເປັນໂຮງແຮມອັນດັບແຖວໜ້າ ຂອງ ສ.ປ.ປ. ລາວ ປະຈຸບັນ.

老挝三江大酒店是一所商务、休闲四星级酒店，客房 163 间，内设有饭店、KTV、健身房、游泳池等配套设施，是老挝目前规模最大、配套最完善的酒店之一。



ອາພາດເມັ້ນຊັ່ງຈ່ຽງ 三江公寓楼

ເບີໂທຕິດຕໍ່ 联系电话:

ສູນການຄ້າສາກົນຊັ່ງຈ່ຽງ 老挝三江国际商贸城:

00856-21-520367 00856-21-520999

ໂຮງແຮມ ຊັ່ງຈ່ຽງ ແກຣນ 老挝三江大酒店:

00856-21-520888

ອາພາດເມັ້ນຊັ່ງຈ່ຽງ 三江公寓楼:

00856-21-520367 00856-21-520999

ທີ່ຢູ່: ຕະຫຼາດຊັ່ງຈ່ຽງ ຖະໜົນເຕ 2 ບ້ານວັດໄຕນ້ອຍທົ່ງ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ສ.ປ.ປ.ລາວ

地址：老挝万象市 T2 路三江国际商贸城

# ຍິນດີຕ້ອນຮັບທ່ານມາລົງພິມໂປສະເຕີ

## 欢迎刊登广告

《占芭》杂志犹如占芭花那样艳丽芬芳，让幸福与快乐永远与你相伴

ວາລະສານ《ຈຳປາ》ສົດສວຍງາມຕາ ແລະ ຫອມຫວນຄືດອກຈຳປາ, ເຮັດໃຫ້ຄວາມສຸກ ແລະ ຄວາມເບີກບານມ່ວນຊື່ນຢູ່ນຳກັນກັບທ່ານຕະຫຼອດ.



SAYO ໄຊໂຍລາວ ເລີຟ LAOS LOVE
Business Culture Destination & Health Magazine

老挝《胜利 · 爱》杂志董事长徐丽娜

ນາງ ອໍເດິນາ ມະຫາວົງ
ປະທານວາລະສານ《ໄຊໂຍ · ເລີບ》ລາວ

联系方式: ວິທີຕິດຕໍ່:

Ban ChomCheang Sisattanak District
Vientiane LAO P.D.R P.O.BOX 1421
Tel | Fax: 856-21 312 287
LAO: 856-20 777 17 888 3065 111
THAL: +66 81 7520 988

champasayolaoslove@yahoo.com
champasayolaoslove@gmail.com
champasayolaoslove@hotmail.com

发行对象：老挝政界、经济界、科学文化教育旅游界、以及青年朋友

ເປົ້າໝາຍພິມຈຳໜ່າຍ: ວົງການການເມືອງ,ວົງການເສດຖະກິດ,ວົງການວິທະຍາສາດ ວັດທະນະທຳ ການສຶກສາ ແລະ ການທ່ອງທ່ຽວ,ແລະ ເພື່ອນມິດຊາວໜຸ່ມຂອງລາວ

图 / 新华社

# ທາງດ່ວນຕ້າລີ-ລີ້ຈ່ຽງເລີ່ມເປີດໃຫ້ລົດແລ່ນຢ່າງເປັນທາງການ

## ——ພັນລະນາທາງດ່ວນຕ້າລີ-ລີ້ຈ່ຽງຢ່າງລະອຽດ

### 大理丽江高速公路正式通车

——细说大丽高速公路

2013 年 12 月 30 日，连接大理、丽江、香格里拉三个著名风景名胜区的大理至丽江高速公路正式通车。该路概算总投资 188 亿元，是云南省迄今为止里程最长、投资最大的高速公路项目，建设总里程 259 公里，工期 4 年。公路的贯通对两地的发展将带来更为重要的意义。

ວັນທີ 30 ທັນວາປີ 2013,ທາງດ່ວນຕ້າລີ-ລີ້ຈ່ຽງທີ່ເຊື່ອມຕໍ່ແຫຼ່ງທ່ອງທ່ຽວຕ້າລີ,ລີ້ຈ່ຽງ ແລະ ຊຽງກຼີລາທີ່ເປັນແຫຼ່ງທ່ອງທ່ຽວ 3 ແຫ່ງທີ່ມີຊື່ສຽງຂອງຈີນນັ້ນໄດ້ເປີດບໍລິການໃຫ້ລົດແລ່ນໄດ້ຢ່າງເປັນທາງການ.ທາງດ່ວນສາຍນີ້ໃຊ້ການລົງທຶນ ໂດຍລວມປະມານ 18 ຕື້ 800 ລ້ານຢວນ,ເປັນ ໂຄງການທາງດ່ວນທີ່ມີໄລຍະທາງຍາວທີ່ສຸດ ແລະ ລົງທຶນຫຼາຍສຸດຢູ່ແຂວງຢູນນານໃນປະຈຸບັນ,ເຊິ່ງມີໄລຍະທາງຍາວທັງໝົດ 259 ກິໂລແມັດ,ການກໍ່ສ້າງໃຊ້ເວລາ 4 ປີ.ຄັນຊັ້ນ,ການເປີດບໍລິການຂອງທາງດ່ວນສາຍນີ້ມີຄວາມໝາຍແນວໃດຕໍ່ການພັດທະນາຂອງຕ້າລີ ແລະ ລີ້ຈ່ຽງ?

ຕ້າລີ ແລະ ລີ້ຈ່ຽງເປັນແຫຼ່ງທ່ອງທ່ຽວລະດັບໂລກ,ຢູ່ໃນເສັ້ນທາງທ່ອງທ່ຽວດີເດັ່ນຢູ່ພາກຕາເວັນຕົກສ່ຽງເໜືອແຂວງຢູນນານ.ໂດຍທົ່ວໄປແລ້ວ,ບໍລິສັດທ່ອງທ່ຽວສະເໜີການທ່ອງທ່ຽວເປັນເວລາ 7 ມື້ຕາມເສັ້ນທາງສາຍນີ້.ຄັນຊັ້ນ,ໃນເວລາ 7 ວັນນີ້,ແມ່ນຈະອາໄສຢູ່ຕ້າລີຕື່ມອີກມື້ໜຶ່ງ,ຫຼື ອາໄສຢູ່ລີ້ຈ່ຽງຕື່ມອີກມື້ໜຶ່ງ,ກໍ່ຈະມີຜົນສະທ້ອນຢ່າງຫຼວງຫຼາຍຕໍ່ການພັດທະນາເສດຖະກິດການທ່ອງທ່ຽວຂອງສອງແຫ່ງນີ້.

ຫຼັງຈາກທາງລົດໄຟຕ້າລີ-ລີ້ຈ່ຽງເປີດບໍລິການແລ້ວ,ຄະນະນັກທ່ອງທ່ຽວສ່ວນຫຼາຍພຽງແຕ່ນອນຄືນດຽວກໍ່ສາມາດຈາກຕ້າລີຮອດລີ້ຈ່ຽງແລ້ວ.ເພື່ອຮັກສາຈຳນວນນັກທ່ອງທ່ຽວ,ພ້ອມທັງບຸກເບີກກຳລັງບົ່ມຊ້ອນຂອງຕະຫຼາດນັກທ່ອງທ່ຽວທີ່ບໍ່ເປັນຄະນະ,ກົງແຂວງປົກຄອງຕົນເອງເຜົ່າປາຍຕ້າລີໄດ້ພະຍາຍາມຫັນປ່ຽນຮູບການບໍລິການທ່ອງທ່ຽວ,ພັດທະນາການທ່ອງທ່ຽວແບບພັກຜ່ອນຢ່ອນໃຈ.ເຂົາເຈົ້າໄດ້ໃຊ້ມາດຕະການຕ່າງໆ,ເຊັ່ນ,ຂຸດຄົ້ນຊັບພະຍາກອນທ່ອງທ່ຽວຂອງເມືອງຕ່າງໆ,ບູລະນະລະບົບການບໍລິການທ່ອງທ່ຽວ;ພັດທະນາການບໍລິການທ່ອງທ່ຽວແບບພັກຜ່ອນຢ່ອນອາລົມ,ສົ່ງເສີມເສັ້ນທາງທ່ອງທ່ຽວຮອບໜອງເອີໄຫ(ໜອງແສ); ສ້າງ ໂຮງແຮມລີຊອດລະດັບສູງ,ພ້ອມດ້ວຍ ໂຮງແຮມປະເພດຕ່າງໆ,ດັ່ງນີ້ເປັນຕົ້ນ.

ປະຈຸບັນ,ທາງດ່ວນຕ້າລີ-ລີ້ຈ່ຽງເລີ່ມເປີດບໍລິການແລ່ນລົດແລ້ວ,ການຂັບລົດຈາກຕ້າລີຮອດລີ້ຈ່ຽງຫັນຈາກການໃຊ້ເວລາ 4 ຊົ່ວ ໂມງໃນເມື່ອກ່ອນຫຼຸດລົງເປັນ 2 ຊົ່ວ ໂມງເທົ່ານັ້ນ,ແມ່ນໄວກວ່າການຂີ່ລົດໄຟທີ່ໃຊ້ເວລາ 2 ຊົ່ວ ໂມງເຄິ່ງອີກ.ເງື່ອນໄຂຄົມມະນາຄົມດີຂຶ້ນ,ເຮັດໃຫ້ຕ້າລີກັບລີ້ຈ່ຽງມີທ່າແຮງໃນການຮ່ວມມືກັນ.ໂດຍຜ່ານການຈັດການທ່ອງທ່ຽວຂອງສອງຕົວເມືອງເຊື່ອມ ໂຍງເຂົ້າກັນເພື່ອເພີ່ມທະວີກຳລັງແຂ່ງຂັນໃນຕະຫຼາດ,ນີ້ມີຄວາມສຳຄັນຫຼາຍຕໍ່ການພັດທະນາພ້ອມກັນ.

ພາກສ່ວນຄົມມະນາຄົມໃຫ້ຮູ້ວ່າ,ເສັ້ນທາງສາຍນີ້ເປັນເສັ້ນທາງທ່ອງທ່ຽວວັດທະນະທຳ.ທາງດ່ວນຕ້າລີ-ລີ້ຈ່ຽງໄດ້ຖືກກະຊວງຄົມມະນາຄົມຈີນຈັດເປັນ ໂຄງການຮ່ວມມືລະດັບກະຊວງ ແລະ ແຂວງຕັ້ງແຕ່ຕອນເລີ່ມຕົ້ນກໍ່ສ້າງ,ໄດ້ຈັດຕັ້ງ“ໜ່ວຍງານສະເພາະເພື່ອຄົ້ນຄວ້າວັດທະນະທຳຕາມທາງດ່ວນຕ້າລີ-ລີ້ຈ່ຽງ”,ໂດຍມີເປົ້າໝາຍເພື່ອສ້າງທາງນີ້ເປັນເສັ້ນທາງທ່ອງທ່ຽວວັດທະນະທຳ.ຢູ່ຕາມເສັ້ນທາງສາຍນີ້ມີ ໂຄງການວັດທະນະທຳ 25 ຈຸດ,ຈຸດບໍລິການ 3 ຈຸດ,ເດີ່ນຈອດລົດ 3 ບ່ອນ,ແຫຼ່ງ






ທ່ອງທ່ຽວ 9 ບ່ອນ,ແລະ ຈຸດເກັບຄ່າໃຊ້ທາງດ່ວນ 12 ຈຸດ,ຫຼັງຈາກການວາງແຜນລວມ ແລະ ອອກແບບເປັນເອກະພາບກັນ,ຈາກບົດບາດຮອດຊື່,ຈາກແບບແຜນກໍ່ສ້າງຮອດຫົວທັດ,ລ້ວນແຕ່ໄດ້ເຊື່ອມໂຍງກັບເອກະລັກພາກພື້ນ,ຮີດຄອງປະເພນີຊົນເຜົ່າ ແລະ ວັດທະນະທຳປະຫວັດສາດ.

ໃນໄລຍະເປີດການນຳໃຊ້ທາງດ່ວນຕ້າລີ-ລີ້ຈ່ຽງ, ທ່ານຢາງສ້ຽວມິນ,ຫົວໜ້າກົມຄົມມະນາຄົມ ແລະ ຂົນສົ່ງຂອງນະຄອນລີ້ຈ່ຽງແມ່ນເຝົ້າເຮັດວຽກຢູ່ຕາມທາງດ່ວນຕ້າລີ-ລີ້ຈ່ຽງທຸກມື້ເລີຍ.ທ່ານກ່າວວ່າ,ການກໍ່ສ້າງພື້ນຖານໂຄງລ່າງພັດທະນາຢ່າງຊັກຊ້າ,ເປັນອຸປະສັກຕົ້ນຕໍອັນໜຶ່ງທີ່ກີດຂວາງການພັດທະນາເສດຖະກິດສັງຄົມຂອງລີ້ຈ່ຽງ.ການເປີດບໍລິການຂອງທາງດ່ວນຕ້າລີ-ລີ້ຈ່ຽງ,ຈະມີບົດບາດອັນສຳຄັນ ແລະ ເລິກເຊິ່ງຍາວໄກຕໍ່ການຄົມມະນາຄົມ,ການທ່ອງທ່ຽວ,ຈໍລະຈອນສິນຄ້າ,ການຄ້າ,ການດຶງດູດນັກລົງທຶນ,ວັດທະນະທຳ ແລະ ຂົງເຂດອື່ນໆ.

ທາງດ່ວນຕ້າລີ-ລີ້ຈ່ຽງເຂົ້າສູ່ລີ້ຈ່ຽງຢູ່ຈິວເຫີ,ຫຼັງຈາກຜ່ານໜອງລາຊື່,ຊອດອຸໂມງຫວງສ່ານແລ້ວ,ກໍ່ຈະໄດ້ພົບເຫັນລີ້ຈ່ຽງທີ່ສວຍງາມ.

ທ່ານຈ່າງເວີຍ,ຮອງຜູ້ອຳນວຍການໃຫຍ່ບໍລິສັດລົງທຶນ ແລະ ພັດທະນາຂອງນະຄອນລີ້ຈ່ຽງວິເຄາະວ່າ, ທາງດ່ວນຕ້າລີ-ລີ້ຈ່ຽງເບື້ອງໜຶ່ງຕິດກັບຕ້າລີ,ອີກເບື້ອງໜຶ່ງຕິດກັບລີ້ຈ່ຽງ,ເຮັດໃຫ້ເສັ້ນທາງຈາກນະຄອນຄຸນໝິງຮອດລີ້ຈ່ຽງທີ່ເປັນເສັ້ນທາງທ່ອງທ່ຽວຍອດນິຍົມສາຍນີ້ມີທາງດ່ວນໝົດສາຍເລີຍ,ນີ້ຈະຊຸກຍູ້ການພັດທະນາອະສັງຫະລິມະຊັບດ້ານການທ່ອງທ່ຽວຂອງລີ້ຈ່ຽງ, ແລະ ເປີດຕະຫຼາດອັນກວ້າງຂວາງໃຫ້ແກ່ການພັດທະນາແບບສັງລວມຂອງຕົວເມືອງ.

ທາງດ່ວນຕ້າລີ-ລີ້ຈ່ຽງໄດ້ຕິດພັນກັບນະຄອນຕ້າລີ, ເມືອງເອີຢວນ,ແລະ ເມືອງຈ້ຽນຊ່ວນ,ເຊິ່ງເປັນແຖບເສດຖະກິດອັນໃໝ່,ທັງຈະເຮັດໃຫ້ນະຄອນຕ້າລີທີ່ເປັນທາງຜ່ານສາກົນອັນເກົ່າແກ່ຢູ່ພາກຕາເວັນຕົກສ່ຽງໃຕ້ຂອງຈີນນີ້ຟື້ນຟູຄວາມມີກຳລັງຊີວິດຊີວາຄືນໃໝ່.



# ວິສາຫະກິດເອກະຊົນແຂວງຢູນນານ ກາຍເປັນກຳລັງແຂງແກ່ນໃນການລົງທຶນຢູ່ຕ່າງປະເທດ

## 云南民企渐成对外投资中坚

据云南省商务厅透露，云南省企业对外直接投资又取得新的进展。2013 年，云南省新批境外投资企业 40 家，对外实际投资突破 8 亿美元，同比增长 15.6%。截至 2013 年底，云南省境外投资企业已达 440 家，对外实际投资累计达 33.8 亿美元。民营企业逐渐成长为云南省对外投资的中坚力量。

ພະແນກການຄ້າແຂວງຢູນນານແຈ້ງໃຫ້ຊາບວ່າ, ການລົງທຶນໂດຍກົງຂອງວິສາຫະກິດແຂວງຢູນນານຢູ່ຕ່າງປະເທດໄດ້ຮັບຄວາມຄືບໜ້າໃໝ່.ປີ 2013,ແຂວງຢູນນານໄດ້ອະນຸມັດວິສາຫະກິດທີ່ໄປລົງທຶນຢູ່ຕ່າງປະເທດ 40 ແຫ່ງ,ການລົງທຶນຢູ່ຕ່າງປະເທດໄດ້ຫຼາຍກວ່າ 800 ລ້ານໂດລາ,ເພີ່ມຂຶ້ນ 15,6%.ເມື່ອທຽບກັບໄລຍະດຽວກັນຂອງປີ 2012.ນັບມາຮອດທ້າຍປີ 2013,ວິສາຫະກິດຢູນນານທີ່ໄປລົງທຶນຢູ່ຕ່າງປະເທດມີເຖິງ 440 ແຫ່ງ,ມູນຄ່າລົງທຶນຕົວຈິງຢູ່ຕ່າງປະເທດມີເຖິງ 3 ຕື້ 380 ລ້ານໂດລາສະຫະລັດ.

ຕາມຜົນການວິເຄາະຂອງພາກສ່ວນການຄ້າຈີນ,ປີກາຍນີ້,ການລົງທຶນຕໍ່ຕ່າງປະເທດຂອງແຂວງຢູນນານມີຈຸດພິເສດ 4 ຢ່າງ.ຈຸດພິເສດຕົ້ນຕໍແມ່ນ,ຖານະໃນຕະຫຼາດເດີມມີຄວາມໝັ້ນທ່ຽງ.5 ປະເທດຂອງອະນຸພາກພື້ນລ້ອງແມ່ນ້ຳຂອງເປັນຕະຫຼາດຕົ້ນຕໍຂອງວິສາຫະກິດແຂວງຢູນນານກ້າວເຂົ້າສູ່ຕ່າງປະເທດ,ປີກາຍນີ້,ວິສາຫະກິດແຂວງຢູນນານໄດ້ລົງທຶນຢູ່ມຽນມາ,ລາວ,ຫວຽດນາມ,ກຳປູເຈຍ ແລະ ໄທ,ລວມທັງໝົດ 581 ລ້ານກວ່າໂດລາສະຫະລັດ,ກວມ 70,8% ຂອງເງິນລົງທຶນທັງໝົດໃນໄລຍະດຽວກັນ,ຕະຫຼາດເດີມຍັງເປັນຕະຫຼາດຕົ້ນຕໍສຳລັບການລົງທຶນຂອງແຂວງຢູນນານຢູ່ຕ່າງປະເທດ.

ວິສາຫະກິດເອກະຊົນກຳລັງພັດທະນາເປັນກຳລັງແຂງແກ່ນໃນການລົງທຶນຕໍ່ຕ່າງປະເທດຂອງແຂວງຢູນນານ.ປີກາຍນີ້,ວິສາຫະກິດເອກະຊົນຕ່າງໆ,ເຊັ່ນ,ຢູນນານຈ້ຽນເສິ່ງ,ຢູນນານໄຫເສິງ,ຢູຍລີ້ຕ້າທົ່ງ,ກຸ່ມບໍລິສັດຢູນເມີງ,ບໍລິສັດລົງທຶນເຈເຟິ່ງຢູນນານເປັນຕົ້ນໄດ້ລົງທຶນຕົວຈິງ 466 ລ້ານ 6 ແສນ 4 ໝື່ນ 5 ພັນໂດລາສະຫະລັດ; ລັດວິສາຫະກິດຕ່າງໆ,ເຊັ່ນ,ບໍລິສັດເຕັກນິກເສດຖະກິດ ແລະ ການລົງທຶນອາຊີຕາເວັນອອກສ່ຽງໃຕ້ຢູນນານ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານ,ບໍລິສາດລົງທຶນຕ່າງປະເທດແຂວງຢູນນານ,ແລະ ອື່ນໆ,ໄດ້ລົງທຶນຕົວຈິງ 354 ລ້ານ 5 ແສນ 6 ໝື່ນ 3900 ໂດລາສະຫະລັດ.

ການນຳໃຊ້ຜົນກຳໄລເຂົ້າໃນການລົງທຶນກາຍເປັນຈຸດເຕີບໂຕໃໝ່.ຄຽງຄູ່ກັບໂຄງການຕ່າງປະເທດຂອງວິສາຫະກິດແຂວງຢູນນານດຳເນີນໄປເປັນຢ່າງດີ,ຫຼັງຈາກໄດ້ສຳເລັດໂຄງການໄລຍະເບື້ອງຕົ້ນແລ້ວ,ວິສາຫະກິດຕ່າງໆໄດ້ນຳໃຊ້ຜົນກຳໄລຈາກຕ່າງປະເທດ,ປ່ຽນໄປລົງທຶນຢູ່ປະເທດອື່ນ ຫຼື ຂົງເຂດອື່ນໆອີກ,ຮູບແບບດັ່ງກ່າວກາຍເປັນຈຸດເຕີບໂຕໃໝ່ໃນການລົງທຶນຕໍ່ຕ່າງປະເທດ, ປີກາຍນີ້,ການນຳໃຊ້ຜົນກຳໄລເຂົ້າໃນການລົງທຶນມີເຖິງ 90 ລ້ານ 8 ແສນ 3 ໝື່ນ 6300 ໂດລາສະຫະລັດ,ກວມ 11,06% ຂອງຍອດມູນຄ່າການລົງທຶນໃນໄລຍະດຽວກັນ.

# ໃບຊາບູຮານລ້ານຊ້າງຈຳໜ່າຍຢູ່ຊານຟານຊິສໂກ



CFP 图

## 澜沧古茶远销旧金山

位于云南普洱市的澜沧拉祜族自治县，因东临澜沧江而得名，现在的澜沧县有了新名片——千年万亩古茶园的景迈山。因有近50万株100年以上的古茶树，景迈山已入选《中国世界文化遗产预备名单》，澜沧县也正为申请世界文化遗产积极筹备着。经历这几年的发展，这里的茶产品销售到了澳门、台北，最远，甚至跨越太平洋销售到了旧金山。

ເມືອງປົກຄອງຕົນເອງເຜົ່າລາຫູ້ລ້ານຊ້າງທີ່ຕັ້ງຢູ່ພາກຕາເວັນຕົກຂອງນະຄອນພູເອີແຂວງຢຸນນານ,ໄດ້ຊື່ນີ້ຍ້ອນທິດຕາເວັນອອກແປະກັບແມ່ນ້ຳລ້ານຊ້າງ,ປະຈຸບັນ,ເມືອງລ້ານຊ້າງໄດ້ມີນາມບັດໃໝ່ຂອງຕົນ,ຄືພູຈິງໄມ້ທີ່ມີສວນຊານັບເປັນພັນເຮັກຕາທີ່ມີປະຫວັດຫຼາຍກວ່າພັນປີ.ຢູ່ແຫ່ງນີ້ມີຕົ້ນໃບຊາທີ່ມີອາຍຸສູງກວ່າ100 ປີເປັນຈຳນວນປະມານ 5 ແສນຕົ້ນ,ພູຈິງໄມ້ຈຶ່ງໄດ້ຖືກຈັດເຂົ້າໃນ“ບັນຊີລາຍຊື່ສຳຮອງຂອງມໍລະດົກວັດທະນະທຳໂລກຂອງຈີນ,”ເມືອງລ້ານຊ້າງກໍ່ພວມພະຍາຍາມກະກຽມເພື່ອຮ້ອງຂໍເອົາເປັນມໍລະດົກວັດທະນະທຳຂອງໂລກ.

ຢູ່ເທິງພູຈິງໄມ້,ການເດັດໃບຊາຈະເປັນພາບວິວອີກແບບໜຶ່ງ.ເມື່ອໄປຮອດສວນຊາ,ຈະໄດ້ເຫັນຕົ້ນຊາແຈກຢາຍຢ່າງເປັນລະບຽບຮຽບຮ້ອຍ ແລະ ເປັນຮົ່ມເຢັນສະບາຍ.ການເດັດໃບຊາຕ້ອງການໄຕ່ຂຶ້ນຕົ້ນຊາ.ທ່ານຢາງຢຸນ,ເລຂາຄະນະພັກຕາແສງຫຸ້ຍມິນຊີ້ມືໄປທີ່ຕົ້ນຊາຕົ້ນໜຶ່ງທີ່ສູງເຖິງ 2 ແມັດ,ແລະ ບອກນັກຂ່າວວ່າ,ຕົ້ນຊາຕົ້ນໜຶ່ງປະກົດມີຂໍ້ໜຶ່ງຕ້ອງຜ່ານ100 ປີ,ຕົ້ນຊາຕົ້ນນີ້ຢ່າງໜ້ອຍກໍ່ມີປະຫວັດສາດ1600 ປີແລ້ວ.ຢູ່ເທິງພູຈິງໄມ,ຕົ້ນຊາບູຮານທີ່ໄດ້ຈົດທະບຽນໄວ້ມີເຖິງ 4 ແສນ 7 ໝື່ນ 8 ພັນ 5 ລ້ອຍຕົ້ນ,ກວມເນື້ອທີ 800 ກວ່າເຮັກຕາ.

ຢູ່ບ້ານມາງຈິງ,ຊາວບ້ານ 94% ເປັນເຜົ່າປູ້ລາງ,ທຳມາຫາກິນດ້ວຍການປູກຊາໃນທຸກຊົ່ວຄົນ,ມີປະຫວັດການດື່ມນ້ຳຊາ ແລະ ປູກໃບຊາຍາວເຖິງ 2000 ປີແລ້ວ.

ໃນຊຸມປີມໍ່ໆມານີ້,ຊາພູເອີໄດ້ຮັບຄວາມນິຍົມຊົມຊອບຈາກຜູ້ບໍລິໂພກຢ່າງຫຼວງຫຼາຍ,ພູຈິງໄມທີ່ເປັນແຫຼ່ງກຳເນີດແຫ່ງໜຶ່ງຂອງຊາພູເອີ,ກໍ່ໄດ້ມີຍີ່ຫໍ້ໃບຊາຂອງຕົນ.ຄະນະພັກບ້ານມາງຈິງໄດ້ນຳໜ້າສ້າງຕັ້ງສະມາຄົມຊາວກະສິກອນປູກຊາບູຮານມາງຈິງ,ລົງທະບຽນຍີ່ຫໍ້“ອາບາຍຫຼ້າ”ໃນປີ 2008,ໂດຍຜ່ານການພັດທະນາເປັນເວລາຫຼາຍປີແລ້ວ,ຜະລິດຕະພັນຍີ່ຫໍ້“ອາບາຍຫຼ້າ”ໄດ້ຈຳໜ່າຍໄປສູ່ມາກາວ,ໄຕ້ຫວັນ,ໄກສຸດໄດ້ຂ້າມມະຫາສະໝຸດປາຊີຟິກໄປເຖິງຊານຟານຊິສໂກຂອງອາເມລິກາ.


ຢູ່ເທິງພູຈິງໄມ້ເມືອງປົກຄອງຕົນເອງເຜົ່າລາຫູລ້ານຊ້າງ,ແມ່ຍິງເຜົ່າບູລັງກຳລັງຕາກໃບຊາຢູ່ໃນບ້ານ.
澜沧拉祜族自治县景迈山上，布朗族妇女在山寨中晒茶花　新华社 图

ປະຈຸບັນ,ສາຍໃຍແກ້ວໄດ້ຕິດຕັ້ງຢູ່ໃນສວນປູກຊາບູຮານພັນປີຂອງພູຈິງໄມ້,ແລະ ກຳລັງກະກຽມການກໍ່ສ້າງສວນຊາແບບດີຈິຕອນ,ໃນອະນາຄົດທີ່ບໍ່ໄກນີ້,ການດື່ມນ້ຳຊາດ້ວຍໃບຊາສົດຊື່ນທີ່ຜະລິດໃນມື້ດຽວກັນ,ເຕົ້າໂຮມອ້ອມເຕົາເພື່ອຊີມນ້ຳຊາສົດຊື່ນນັ້ນກໍ່ຈະປະກົດຜົນເປັນຈິງແລ້ວ.


ນາງສາວເດັດໃບຊາເຜົ່າລື້ກຳລັງເດັດໃບຊາຢູ່ສວນຊາ 10 ພັນມູທີ່ພູຈິງໄມ້
傣族采茶女在景迈山万亩古茶园采茶　新华社 图

ສວນປູກຊາແບບດີຈິຕອນພວມຢູ່ໃນການກໍ່ສ້າງຄົມມະນາຄົມທີ່ນັບມື້ນັບສະດວກວ່ອງໄວກວ່າເກົ່າ,ເຮັດໃຫ້ສວນປູກຊາບູຮານຖືກສັງຄົມຄົ້ນພົບຄືນໃໝ່;ວິທະຍາສາດເຕັກໂນໂລຊີທີ່ມີການພັດທະນາຢ່າງວ່ອງໄວ,ກໍ່ເຮັດໃຫ້ຜະລິດຕະພັນໃບຊາຂອງເຜົ່າປູ້ລາງໄດ້ຮັບການພັດທະນາໃໝ່.

ປະຫວັດສາດການປູກຊາເປັນເວລາພັນປີເຊື່ອມໂຍງກັບວິທະຍາສາດເຕັກໂນໂລຊີທັນສະໄໝ,ພວກເຮົາສາມາດສົມມຸດວ່າ,ບໍ່ວ່າຢູ່ບ່ອນໃດ,ເມື່ອເປີດຄອມພິວເຕີກໍ່ຈະໄດ້ເຫັນຮູບວິວຈາກພູຈິງໄມ້,ຮ່ວມມ່ວນຊື່ນກັບໝູ່ຄູ່ຊີມນ້ຳຊາທີ່ຊົງດ້ວຍໃບຊາອັນສົດຊື່ນທີ່ຫາກໍ່ເດັດມາຈາກຕົ້ນໃບຊາພັນປີທີ່ຢູ່ໃນພູຈິງໄມ້ນີ້.

ໃນຕໍ່ໜ້ານີ້,ລູກຄ້າສາມາດມາຈອງປູກຕົ້ນໃບຊາບູຮານຢູ່ພູຈິງໄມ້,ແລະ ມອບໝາຍໃຫ້ຊາວບ້ານມາງຈິງເປັນຜູ້ຄຸ້ມຄອງດູແລໃຫ້,ຕັ້ງກ້ອງໃສ່ຕົ້ນຊາ,ລູກຄ້າສາມາດຕິດຕາມສະພາບການຂອງຕົ້ນຊາທີ່ຕົນເອງຈອງປູກນັ້ນດ້ວຍຄອມພິວເຕີຢູ່ທຸກສະຖານທີ່ທຸກເວລາ.


ກົກຊາໂບຮານທີ່ມີອາຍຸເກືອບພັນປີ
近千年古茶树

文、图 / 楚 然

# ສຳຜັດກັບຮູບວິວຕ່າງປະເທດຢູ່ດອນຊ່າເມ້ຽນ

## 在沙面感受异国风情

说起广州的沙面岛，很多人都说这里是极具异国风情的小岛，是到广州旅游一定不能错过的极佳旅游之地，因为这里不仅较完整地保留有众多 19 世纪欧陆风情的古建筑，还承载着一段特殊的历史。今天的沙面，已成为广州的一张名片，是广州著名的外事浏览区和历史文物保护区。

ເມື່ອເວົ້າເຖິງດອນຊ່າມ້ຽນຂອງນະຄອນກວາງໂຈ່ວ, ຫຼາຍຄົນຈະເວົ້າວ່າດອນນ້ອຍແຫ່ງນີ້ມີບັນຍາກາດຕ່າງປະເທດຫຼາຍ,ເປັນແຫຼ່ງທ່ອງທ່ຽວດີເລີດສຳລັບນັກທ່ອງທ່ຽວທີ່ພາດບໍ່ໄດ້,ເພາະວ່າຢູ່ແຫ່ງນີ້ບໍ່ພຽງແຕ່ໄດ້ຮັກສາສິ່ງກໍ່ສ້າງເກົ່າແກ່ທີ່ເປັນແບບແຜນເອີລົບຈຳນວນຫຼວງຫຼາຍເທົ່ານັ້ນ,ຍັງມີປະຫວັດສາດພິເສດ.ດອນຊ່າມ້ຽນ,ໄດ້ກາຍເປັນນາມບັດໃບໜຶ່ງຂອງນະຄອນກວາງໂຈ່ວ,ເປັນເຂດທັດສະນະສຶກສາວຽກງານຕ່າງປະເທດ ແລະ ເຂດສະຫງວນວັດຖຸບູຮານດ້ານປະຫວັດສາດທີ່ມີຊື່ສຽງຂອງນະຄອນກວາງໂຈ່ວ.

ດອນຊ່າມ້ຽນ (Shameen Island ຫຼື Shamin Island ) ,ຕັ້ງຢູ່ທິດຕາເວັນຕົກຂອງນະຄອນກວາງໂຈ່ວ, ແລະ ຢູ່ແຄມໜອງໄບເອີແມ່ນ້ຳຈູ່ຈ່ຽງ,ເປັນດອນທຣາຍ ຢູ່ເທິງແມ່ນ້ຳຈູ່ຈ່ຽງ,ຢູ່ໃກ້ກັບແຜ່ນດິນນະຄອນກວາງໂຈ່ວ ໂດຍມີຮ່ອງຊ່າຈີ່ຢົງກັ້ນໄວ້,ມີເນື້ອທີ່ປະມານ 0,3 ກິໂລຕາແມັດ.



ເຖິງວ່າດອນນ້ອຍກັບຕົວເມືອງມີແຕ່ຂົວແຫ່ງໜຶ່ງຂັ້ນໄວ້ເທົ່ານັ້ນ,ແຕ່ມີບັນຍາກາດກັບຈັງຫວະດຳລົງຊີວິດທີ່ແຕກຕ່າງກັນຫຼາຍ.ດອນຊ່າມ້ຽນແມ່ນອ້ອມດ້ວຍນ້ຳ, ມີຮົ່ມເຢັນຈາກຕົ້ນໄມ້ຂຽວງາມ,ມີຄວາມງຽບສະຫງົບ. ຢູ່ເທິງດອນມີສິ່ງກໍ່ສ້າງທີ່ເປັນແບບສະຖາປັດຕະຍາກຳຂອງເອີລົບ,ປະຈຸບັນມີຈຳນວນ 169 ຫຼັງ,ໃນນັ້ນສິ່ງກໍ່ສ້າງທີ່ເປັນວັດຖຸບູຮານກໍ່ມີ 53 ຫຼັງ,ກໍ່ມີສິ່ງກໍ່ສ້າງແບບແຜນ barroco ໃໝ່,ແບບແຜນ Gothic,ແລະ ແບບແຜນຈີນກັບແບບແຜນຕາເວັນຕົກເຊື່ອມໂຍງເຂົ້າກັນ,ມີຮູບຊົງ



ສະຫງ່າງາມ,ຫຼືເປັນແບບງ່າຍດາຍ,ມີລວດລາຍສວຍງາມ.ນອກນີ້,ໄຟເຍືອງຮຸ່ງແຄມທາງ,ຮູບແກະສະຫຼັກ,ສາລາ,ສວນດອກໄມ້,ຕັ່ງໄມ້,ແລະ ນໍ້າພຸລ້ວນແຕ່ເປັນແບບຕາເວັນຕົກ,ເມື່ອຍ່າງຫຼິ້ນຢູ່ແຫ່ງນີ້ກໍ່ເໝືອນດັ່ງຢູ່ປະເທດຕາເວັນຕົກ.ຢູ່ເທິງດອນນ້ອຍທີ່ງຽບສະຫງົບແຫ່ງນີ້,ມີບັນຍາກາດເອີລົບທີ່ໂຣມັນຕິກ,ທັງມີຄຸນຄ່າດ້ານວັດທະນະທຳປະຫວັດສາດ.





ໄລຍະກາງຂອງສະຕະວັດທີ 19,ມີ 10 ກວ່າປະເທດໄດ້ສ້າງຕັ້ງສະຖານກົງສຸນຢູ່ດອນຊ່າມ້ຽນ,ທັງມີທະນາຄານຕ່າງປະເທດ 9 ແຫ່ງ,ແລະ ຮ້ານຄ້າຕ່າງປະເທດ 40 ກວ່າແຫ່ງດຳເນີນທຸລະກິດຢູ່ນີ້,ສະນັ້ນສິ່ງກໍ່ສ້າງຢູ່ນີ້ສ່ວນຫຼາຍເປັນແບບແຜນຕາເວັນຕົກ,ຢູ່ເທິງດອນນ້ອຍຍັງມີໂບດ,ໂຮງໄປສະນີ,ໂຮງໂທລະເລກ,ໂຮງໝໍ ແລະ ສິ່ງກໍ່ສ້າງສາທາລະນະອື່ນໆ.ໂບດຄາໂທລິກຢູ່ເຂດເຊົ່າຝຣັ່ງ,ໂບດຄຣິສຕຽນຢູ່ເຂດເຊົ່າອັງກິດ,ທະນາຄານ HSBC ອັງກິດເກົ່າ,ສະຖານກົງສຸນເກົ່າຂອງອັງກິດ ແລະ ຝຣັ່ງ,ແລະ ສິ່ງກໍ່ສ້າງອື່ນໆ,ລ້ວນແຕ່ຢູ່ເທິງດອນນ້ອຍໆແຫ່ງນີ້.ດອນຊ່າມ້ຽນໄດ້ເປັນພິຍານແກ່ການປ່ຽນແປງຂອງນະຄອນກວາງໂຈ່ວໃນປະຫວັດ 100 ກວ່າປີມານີ້,ທັງມີຮ່ອງຮອຍຂອງນັກປະຕິວັດລຸ້ນເກົ່າຂອງຈີນ,ເຊັ່ນທ່ານຊຸນຢັດເຊັນ ແລະ ທ່ານໂຈ່ວເອິນໄລເປັນຕົ້ນ,ກໍ່ໄດ້ຜ່ານເຫດການປະຫວັດສາດສຳຄັນຫຼາຍຄັ້ງ,ເຊິ່ງເປັນຫຼັກຖານອັນໜຶ່ງໃນປະຫວັດສະໄໝໃໝ່ ແລະ ປະຫວັດເຂດເຊົ່າຂອງຈີນ.



ຫຼັງຈາກປະເທດຈີນໃໝ່ສະຖາປະນາຂຶ້ນແລ້ວ,ລັດຖະບານໄດ້ໃຫ້ຄວາມສຳຄັນແກ່ການອະນຸລັກມໍລະດົກວັດທະນະທຳປະຫວັດສາດຂອງຊ່າມ້ຽນ,ກຸ່ມສິ່ງກໍ່ສ້າງແບບພິເສດຢູ່ແຫ່ງນີ້ຈຶ່ງໄດ້ຮັບການປົກປັກຮັກສາຢ່າງຄົບຖ້ວນ.ເດືອນພະຈິກປີ 1996,ກຸ່ມສິ່ງກໍ່ສ້າງຊ່າມ້ຽນໄດ້ຈັດເຂົ້າເປັນຫົວໜ່ວຍອະນຸລັກວັດຖຸບູຮານຈຸດໜັກຂອງຈີນ.ປີ 2010,ອົງການປົກຄອງນະຄອນກວາງໂຈ່ວໄດ້ດຳເນີນໂຄງການປັບປຸງສິ່ງແວດລ້ອມຂອງຊ່າມ້ຽນ.ດອນຊ່າມ້ຽນໃນປະຈຸບັນ,ຄ້າຍຄືສວນສາທາລະນະສິ່ງກໍ່ສ້າງແບບຕາເວັນຕົກທີ່ສວຍງາມ,ມີຜູ້ຊົມຫຼັ່ງໄຫຼໄປມາຢ່າງບໍ່ຂາດສາຍ;ມີນັກແຕ້ມນັກຖ່າຍຮູບມາເກັບຮູບ;ຮູບແກະສະຫຼັກສະແດງໃຫ້ເຫັນຫົວຂໍ້ທີ່ວ່າ“ການແລກປ່ຽນວັດທະນະທຳລະຫວ່າງຈີນກັບຕາເວັນຕົກ”;ຊາວໜຸ່ມມາຂໍແຕ່ງງານ ແລະ ຖ່າຍຮູບຊຸດງານດອງ;ຜູ້ເຖົ້າຜູ້ແກ່ມາໂອ້ລົມກັນ ແລະ ທວນຄືນເຖິງອະດີດ;ສຳລັບດອນຊ່າມ້ຽນນັ້ນເອງກໍ່ຢູ່ຢ່າງງຽບສະຫງັດ,ເປັນສັກຂີພິຍານໃຫ້ແກ່ຄວາມຊົງຈຳອັນສວຍງາມຂອງຜູ້ຄົນທັງຫຼາຍ.













美丽幸福集团

ຫາຍໂສກ ກຣຸບ

Haysoke Group

Comfort & Hospitality

美丽幸福集团业是由陈文森董事长创建于1988年开始的美丽干洗店。后来连续增加经营酒店服务业，房地产业，旅游业，木材业，装饰材料等。美丽幸福集团业如今已有二十多年的发展。

创办人始终坚持“创造和谐、促进发展”。

在未来的发展过程中，愿我们的努力能为社会创造更多的合作机会和取得双赢，不断地共同创造价值和谋求发展。

Haysoke Group was established in 1988 by Mr Wensen Chen (Chairman), he started off with a small dry cleaning shop The Meely Laundry. With Mr Wensen hardwork and believes,a continuous growth from branches and even to other industries such as: Guesthouse, Hotel, Real estate, Tourism, Timber and Decoration materials. Haysoke Group is up and running for 20 over years till now. The Founder always adheres to "create harmony, promote development." Development processes in the future, is to create more opportunities for cooperation and a win-win situation, we will continue to work together to create value and better development.

Website: www.haysokegroup.com

Email: info@haysokegroup.com

图 /CFP



# ແກ້ວໃສ(ຜະລຶກຫີນ)ຕົ່ງໄຫ: ໂລກອັດສະຈັນແຫ່ງຄວາມໂປ່ງໃສ

## 东海水晶：晶莹剔透的奇妙世界

江苏省东海县是中国首批沿海开放县，闻名中外的水晶产地。随着东海水晶业的蓬勃发展，水晶石这一大自然鬼斧神工之作，越来越受到人们的钟爱，一批又一批爱石之人，以赏石、藏石为乐。一个以水晶收藏、水晶鉴赏、水晶加工、工艺流派、开发研究、水晶文学为内容的水晶文化也从无到有，渐成气候。

ເມືອງຕົ່ງໄຫແຂວງຈ່ຽງຊູ່ຈີນເປັນເມືອງແຄມທະເລຊຸດທຳອິດທີ່ເປີດປະຕູສູ່ພາຍນອກ,ເປັນແຫຼ່ງຜະລິດແກ້ວໃສ(ຜະລຶກຫີນ)ທີ່ມີຊື່ສຽງທັງພາຍໃນ ແລະ ຕ່າງປະເທດ.ຢູ່ເນື້ອທີ່ດິນໜຶ່ງສ່ວນສອງຂອງເມືອງຕົ່ງໄຫມີແຮ່ແກ້ວຫີນ ແລະ ແກ້ວຫີນມະນີ,ປະລິມານສະສົມຕ່າງກໍ່ມີ 3 ແສນໂຕນ ແລະ 300 ລ້ານໂຕນ.ປະລິມານບຸກເບີກແຮ່ແກ້ວຫີນແມ່ນ 400-600 ໂຕນຕໍ່ປີ,ກວມເຄິ່ງໜຶ່ງຂອງທົ່ວປະເທດ.ລາຊາແກ້ວຄູີສຕັນທີ່ວາງສະແດງຢູ່ຫໍພິພິທະພັນທໍລະນີສາດແຫ່ງຊາດຈີນກໍ່ແມ່ນກຳເນີດອອກຈາກເມືອງຕົ່ງໄຫ.

ຄຽງຄູ່ກັບອຸດສາຫະກຳແກ້ວຄູີດສະຕັນຂອງເມືອງຕົ່ງໄຫໄດ້ພັດທະນາຢ່າງວ່ອງໄວ,ຫີນແກ້ວຄູີດສະຕັນທີ່ເປັນແຫລ່ງເກີດຄວາມອັດສະຈັນທີ່ກຳເນີດຈາກທຳມະຊາດ,ໄດ້ຮັບຄວາມນິຍົມຈາກປະຊາຊົນນັບມື້ນັບຫຼາຍຂຶ້ນ,ຫຼາຍຄົນນິຍົມຊົມຫີນ ແລະ ເກັບສະສົມຫີນງາມ.ວັດທະນະທຳແກ້ວຄູີດສະຕັນທີ່ກວມລວມການເກັບສະສົມ,ການວິໄຈເຈຍລະໄນ,ການປຸງແຕ່ງ,ພາກສ່ວນກ່ຽວກັບວິທີປຸງແຕ່ງ,ບຸກເບີກຄົ້ນຄວ້າ,ວັນນະຄະດີກ່ຽວກັບແກ້ວຄູີດສະຕັນກໍ່ໄດ້ເປັນຮູບເປັນຮ່າງຂຶ້ນເທື່ອລະກ້າວ.

ຍ້ອນເຕັກນິກປຸງແຕ່ງແກ້ວຄູີດສະຕັນມີຈຸດພິເສດທີ່ກວມເຕັກນິກຫຼາຍດ້ານ,ກ່ອນອື່ນ,ພາກສ່ວນທີ່ກ່ຽວຂ້ອງຂອງເມືອງຕົ່ງໄຫໄດ້ດຳເນີນການຮ່ວມມືກັບອົງການຄົ້ນຄວ້າວິທະຍາສາດ,ອົງການຄົ້ນຄວ້າພັດທະນາຜະລິດຕະພັນ, ແລະ ຂະແໜງການປຸງແຕ່ງເຜັດນິນຈິນດາຊະນິດອື່ນໆ,ຍົກລະດັບຄຸນສົມບັດດ້ານສິລະປະຂອງຜູ້ປະກອບອາຊີບ;ສ້າງຕັ້ງຫ້ອງການຊ່ຽວຊານ,ເພື່ອໃຫ້ຄູສອນລູກສິດ,ບຳລຸງສ້າງນັກວິຊາການຂອງຕົນ;ກຳນົດມາດຕະຖານຕຳແໜ່ງ,ສ້າງຜູ້ມີຄວາມຮູ້ຄວາມສາມາດລະດັບສູງໃຫ້ແກ່ການຄວັດແກະສະຫຼັກແກ້ວຄູີດສະຕັນ;ຈັດຊຸດອົບຮົມໄລຍະຍາວ,ກາງ ແລະ ສັ້ນ,ອົບຮົມນັກວິຊາການປະເພດຕ່າງໆທີ່ມີຄວາມຕ້ອງການດ່ວນໃນຕະຫຼາດ.ມາດຕະການເຫຼົ່ານີ້,ໄດ້ປ່ຽນແປງສະພາບການຈາກເດີມທີ່ເມືອງຕົ່ງໄຫພຽງແຕ່ສາມາດປຸງແຕ່ງແກ້ວຄູີດສະຕັນແບບງ່າຍດາຍເທົ່ານັ້ນ.ກຸ່ມຊ່າງແກະສະຫຼັກແກ້ວຄູີດສະຕັນຂອງເມືອງຕົ່ງໄຫ,ບໍ່ພຽງແຕ່ສາມາດຜະລິດເຄື່ອງສິລະປະປະເພດຕ່າງໆ,ເຄື່ອງໃຊ້ປະຈຳວັນ,ເຄື່ອງເອ້ເທົ່ານັ້ນ,ຄົນຕົ່ງໄຫຍັງໄດ້ປະດິດແຕ່ງເຄື່ອງສິລະປະແກ້ວຄູີດສະຕັນ, ໂດຍເປັນສິ່ງທີ່ຮັບຄວາມນິຍົມຊົມຊອບຢ່າງຫຼວງຫຼາຍໃນວົງການເພັດນິນຈິນດາ ແລະ ວົງການເກັບສະສົມສິ່ງລ້ຳຄ່າ.

ເນື່ອງຈາກວ່າ,ວັດສະດຸແກ້ວຫີນໃສ ແມ່ນສິ່ງມີຄ່າ ແລະ ມີຄວາມໂປ່ງໃສສ່ອງຊອດ,ພາຍໃນມີພາບວິວຫຼາກຫຼາຍ,ສ່ອງແສງເຖິງອາລົມຈິດແຫ່ງທຳມະຊາດ ແລະ ສິລປະທີ່ພຽບພ້ອມໄປດ້ວຍຄວາມມີຊີວິດຊີວາຫນ້າອັດສະຈັນແລະໂປ່ງໃສ, ແຂງແກ່ນແລະອ່ອນໂຍນ,ທັງມີຄຸນຄ່າສິລະປະເອກະລັກສະເພາະ ແລະມີອະນາຄົດແຫ່ງການພັດທະນາອັນກວ້າງຂວາງ,ສະນັ້ນ,ຈຶ່ງດຶງດູດບຸກຄະລາກອນສິລະປະຫຸກແຫ່ງຫີນໃນທົ່ວປະເທດ ແລະ ຊ່າງແກະສະຫຼັກເກັ່ງເປັນຈຳນວນຫຼວງຫຼາຍໄດ້ເຂົ້າສູ່ຂົງເຂດແກະສະຫຼັກແກ້ວຫີນໃສ,ເພື່ອສີດກຳລັງຊີວິດຊີວາອັນໃໝ່ເຂົ້າສູ່ການພັດທະນາຜະລິດຕະກຳແກ້ວຫີນໃສ.

ຕະຫຼາດແກ້ວຄູີດສະຕັນຂອງເມືອງຕົ່ງໄຫໄດ້ກາຍເປັນເວທີໃຫຍ່ສຳລັບກຸ່ມຄົນຕ່າງໆທີ່ແຂ່ງຂັນສີມືປຸງແຕ່ງແກ້ວຄູີດສະຕັນ, ແລະ ພ້ອມກັນພັດທະນາ.ປະຈຸບັນ,ໃນສີມືດ້ານແກະສະຫຼັກແກ້ວຄູີດສະຕັນຕົ້ນຕໍມີ 5 ພາກສ່ວນ,ເຊິ່ງລ້ວນແຕ່ມີຈຸດພິເສດຂອງຕົນ.ສີມືຟູຈ້ຽນ:ຊ່າງແກະສະຫຼັກຮູບຄົນ.ສີມືຢາງໂຈວ:ຊ່າງແກະສະຫຼັກເປັນຮູບທີ່ທາງໃນເປັນເປົ່າຫວ່າງ.ສີມືເຮີນານ,ຊ່າງແກະສະຫຼັກເຄື່ອງເອ້ກ້ອນນ້ອຍທີ່ເປັນຮູບຄົນ ແລະ ສັດ.ສີມືປັກກິ່ງ:ແກະສະຫຼັກຮູບຄົນທີ່ມີທ່າທາງສະຫງ່າຜ່າເຜີຍຢ່າງມີຊີວິດຊີວາ.ສີມືຕົ່ງໄຫ:ສ່ວນຫຼາຍເປັນຊ່າງຄົນລຸ້ນໃໝ່,ຊ່າງແກະສະຫຼັກເຄື່ອງເອ້ນ້ອຍ,ມີລັກສະນະຊີວິດການເປັນຢູ່ຍຸກປະຈຸບັນ.

文/楚然 图/CFP

# ມະຫາວິທະຍາໄລຕົ່ງນານ

## 东南大学

东南大学是中国教育部直属的全国重点大学，是中国最早建立的高等学府之一，素有“学府圣地”和“东南学府第一流”之美誉。

ມະຫາວິທະຍາໄລຕົ່ງນານເປັນມະຫາວິທະຍາໄລຈຸດໜັກລະດັບຊາດທີ່ຂຶ້ນກັບກະຊວງສຶກສາທິການໂດຍກົງ,ກໍ່ເປັນໜຶ່ງໃນມະຫາວິທະຍາໄລໃນ“ໂຄງການ 985” ແລະ“ໂຄງການ 211”. ໂຮງຮຽນຕັ້ງຢູ່ນະຄອນນານກິ່ງທີ່ເປັນຕົວເມືອງທີ່ມີຊື່ສຽງດ້ານປະຫວັດສາດ ແລະ ວັດທະນະທຳ,ມີເນື້ອທີ່ປະມານ 400 ເຮັກຕາ,ມີເຂດໂຮງຮຽນຊື່ໄພໂລວ,ຈິວໂລງຫູ ແລະ ຕິ່ງເຈ່ຍຊຽວເປັນຕົ້ນ.

ມະຫາວິທະຍາໄລຕົ່ງນານເປັນໜຶ່ງໃນໂຮງຮຽນຊັ້ນສູງທີ່ສ້າງຂຶ້ນກ່ອນໝູ່ຢູ່ຈີນ,ມີນາມມະຍົດເປັນ“ໂຮງຮຽນຍອດຢ້ຽມ”ແລະ“ໂຮງຮຽນອັນດັບໜຶ່ງຢູ່ພາກຕາເວັນອອກສ່ຽງໃຕ້ຂອງຈີນ”.ມະຫາວິທະຍາໄລຕົ່ງນານໄດ້ຊອກຄົ້ນວິທີດຳເນີນວຽກງານການສຶກສາ ແລະ ອົບຮົມນັກສຶກສາຕະຫຼອດມາ, ໂດຍໄດ້ສ້າງພື້ນຖານອັນດີງາມ.ໃນ 100 ກວ່າປີມານີ້,ມະຫາວິທະຍາໄລຕົ່ງນານໄດ້ສ້າງນ້ຳໃຈບາກບັ່ນສູ້ຊົນເພື່ອພັດທະນາວິທະຍາສາດເຕັກນິກ ແລະ ສ້າງຄວາມຮັ່ງມີເຂັ້ມແຂງໃຫ້ປະເທດຈີນ,ເຊິ່ງກະຕຸກຊຸກຍູ້ໃຫ້ຄູອາຈານ ແລະ ນັກສຶກສາຂອງມະຫາວິທະຍາໄລຕົ່ງນານສ້າງຜົນງານອັນພົ້ນເດັ່ນເລື້ອຍໆ.

ໂດຍຜ່ານການພັດທະນາເປັນເວລາ 100 ກວ່າປີ, ມະຫາວິທະຍາໄລຕົ່ງນານໄດ້ກາຍເປັນມະຫາວິທະຍາໄລແບບສັງລວມທີ່ມີວິຊາການຊ່າງເປັນສີສັນພິເສດ,ແລະມີຫຼາຍວິຊາພັດທະນາພ້ອມກັນ,ເຊັ່ນ,ວິທະຍາສາດ,ແພດສາດ,ວັນນະຄະດີ,ທຳມະສາດ,ສຶກສາສາດ,ເສດຖະສາດ,ການບໍລິຫານ,ແລະ ສິລະປະກຳເປັນຕົ້ນ.ປະຈຸບັນ,ໃນໂຮງຮຽນມີທັງໝົດ 29 ຄະນະ,75 ວິຊາລະດັບປະລິນຍາຕີ,ໄດ້ຮັບສິດມອບໃບປະກາດລະດັບປະລິນຍາເອກຂອງວິຊາລະດັບໜຶ່ງ 29 ວິຊາ,ມີສິດມອບໃບປະກາດລະດັບປະລິນຍາໂທຂອງວິຊາລະດັບໜຶ່ງ 49 ວິຊາ.ໃນຊຸມປີມໍ່ໆມານີ້, ໂຮງຮຽນໄດ້ເພີ່ມທະວີການພັດທະນາວິຊາ,ແລະ ໄດ້ຮັບໝາກຜົນອັນໃຫຍ່ຫຼວງ.

ໃນການດຳເນີນວຽກງານການສຶກສາເປັນເວລາດົນນານມານີ້,ມະຫາວິທະຍາໄລຕົ່ງນານປະຕິບັດຕາມທັດສະນະທີ່“ຖືການບຳລຸງສ້າງຄົນເປັນພື້ນຖານ”,ເພີ່ມງົບປະມານເຂົ້າໃນວຽກງານການສຶກສາເລື້ອຍໆ,ລົງເລິກການປະຕິຮູບການສຶກສາ ແລະ ການສິດສອນ,ພະຍາຍາມຊຸກຍູ້ການສຶກສາດ້ານຄຸນສົມບັດ,ອອກແຮງສົ່ງ



ເສີມແນວຄິດປະດິດສ້າງໃໝ່ ແລະ ຄວາມສາມາດດ້ານພຶດຕິກຳຕົວຈິງຂອງນັກສຶກສາ. ໃນຂະນະດຽວກັນທີ່ຍຶດໝັ້ນມູນເຊື້ອການສຶກສາລະດັບປະລິນຍາຕີທີ່"ເນັ້ນໜັກໃສ່ພື້ນຖານ,ພຶດຕິກຳ ແລະ ຄຸນສົມບັດ"ນັ້ນ,ທາງໂຮງຮຽນໄດ້ສະເໜີເປົ້າໝາຍໃໝ່ທີ່"ສ້າງຄວາມດີເດັ່ນ,ເຊື່ອມໂຍງກັບສາກົນ ແລະ ເປັນວິຊາການແບບຄົ້ນຄວ້າ". ໂຮງຮຽນໄດ້ສ້າງສູນເຝິກງານຈຳນວນຫຼາຍຢູ່ພາຍໃນໂຮງຮຽນ ແລະ ນອກໂຮງຮຽນ,ແລະ ຈັດກິດຈະກຳວິທະຍາສາດເຕັກນິກ ແລະ ວັດທະນະທຳນອກໂມງການຮຽນຢ່າງຫຼວງຫຼາຍ.

ມະຫາວິທະຍາໄລຕົ່ງນານຖື"ສ້າງຄວາມເຂັ້ມແຂງຂອງປະເທດຊາດດ້ວຍການສຶກສາວິທະຍາສາດ"ເປັນພາລະໜ້າທີ່ຂອງຕົນ, ໂດຍສັງເກດຄວາມຕ້ອງການຂອງເສດຖະກິດແຫ່ງຊາດ ແລະ ການພັດທະນາຂອງສັງຄົມ,ຕັ້ງໜ້າປະຕິບັດການຄົ້ນຄ້ວາພື້ນຖານ,ການຄົ້ນຄວ້າພື້ນຖານການນຳໃຊ້ຕົວຈິງ,ແລະ ການຄົ້ນຄວ້າເຕັກໂນໂລຊີຍຸດທະສາດອັນສຳຄັນ, ໄດ້ກາຍເປັນສະຖານທີ່ທີ່ມີບົດບາດອັນສຳຄັນດ້ານການຄົ້ນຄວ້າໄຮເທັກທັງພາຍໃນ ແລະ ຕ່າງປະເທດ.

ມະຫາວິທະຍາໄລຕົ່ງນານເປັນມະຫາວິທະຍາໄລແຫ່ງໜຶ່ງທີ່ມີອິດທິພົນຫຼາຍສົມຄວນໃນສາກົນ.ນັບແຕ່ການປະຕິຮູບ ແລະ ເປີດປະຕູສູ່ພາຍນອກເປັນຕົ້ນມາ, ໄດ້ມີການເຄື່ອນໄຫວແລກປ່ຽນກັບສາກົນນັບມື້ນັບຫຼາຍຂຶ້ນ, ໄດ້ເຊັນສັນຍາແລກປ່ຽນ ແລະ ຮ່ວມມືກັບມະຫາວິທະຍາໄລ ແລະ ອົງການຄົ້ນຄວ້າ 100 ກວ່າແຫ່ງໃນໂລກ, ເຊັ່ນ,ມະຫາວິທະຍາໄລແຄມບຼິດຂອງອັງກິດ,ວິທະຍາໄລເຕັກໂນໂລຊີມາຊາຈູເຊັດ Massachusetts Institute of Technology ຂອງອາເມລິກາ,ມະຫາວິທະຍາໄລມາລີແລນ Maryland, ມະຫາວິທະຍາໄລເລໄຮ Lehigh,ອີທີເອຈຊູຣິກ ETH Z ü rich ຂອງສະວິສ,ມະຫາວິທະຍາໄລໂຕໂຮຄຸຂອງຍີ່ປຸ່ນ,ມະຫາວິທະຍາໄລເຕັກນິກມູນິກ,ມະຫາວິທະຍາໄລ Ulm ຂອງເຢຍລະມັນ,ມະຫາວິທະຍາໄລໂມນັສຂອງອົສຕຼາລີ,ມະຫາວິທະຍາໄລ Rennes 1 ຂອງຝຣັ່ງ,ແລະ ອື່ນໆ.ປະຈຸບັນ,ມີນັກສຶກສາຕ່າງປະເທດ 1600 ກວ່າຄົນທີ່ມາຈາກ 100 ກວ່າປະເທດ, ໃນນັ້ນມີນັກສຶກສາແບບສົມບູນ 1200 ກວ່າຄົນ. ໂຮງຮຽນໄດ້ສ້າງສະຖາບັນຂົງຈື້ 3 ແຫ່ງຢູ່ອາເມລິກາ ແລະ ເບລາຣູຊີ.ພ້ອມກັນນັ້ນ,ທາງໂຮງຮຽນຍັງໄດ້ຕັ້ງໜ້າດຳເນີນການແລກປ່ຽນວິຊາການກັບພາຍໃນ ແລະ ຕ່າງປະເທດຢ່າງກວ້າງຂວາງ,ພະຍາຍາມຊຸກຍູ້ການດຳເນີນການສຶກສາຮ່ວມກັນ, ໄດ້ຮ່ວມມືກັບມະຫາວິທະຍາໄລໂມສັນຂອງອົສຕາລີສ້າງວິທະຍາໄລນັກສຶກສາປະລິນຍາໂທຮ່ວມຊູໂຈ່ວມະຫາວິທະຍາໄລຕົ່ງນານ-ມະຫາວິທະຍາໄລໂມນັສ,ເຊິ່ງເປັນວິທະຍາໄລນັກສຶກສາປະລິນຍາໂທແຫ່ງທຳອິດທີ່ຈີນກັບຕ່າງປະເທດຮ່ວມສ້າງຂຶ້ນໂດຍໄດ້ຮັບການອະນຸມັດຈາກກະຊວງສຶກສາທິການຈີນ, ໄດ້ຮັບສະໝັກນັກສຶກສາ 218 ຄົນ; ການຮ່ວມມືກັບມະຫາວິທະຍາໄລ Rennes 1 ຂອງຝຣັ່ງໄດ້ເປີດຊ່ອງທາງໃໝ່ເພື່ອບຳລຸງສ້າງນັກສຶກສາປະລິນຍາໂທ ແລະ ຮ່ວມມືດ້ານການຄົ້ນຄວ້າວິທະຍາສາດ. ໄດ້ຮັບສະໝັກນັກສຶກສາຂອງຫຼາຍປະເທດ ແລະ ເຂດແຄວ້ນມາຮ່ຳຮຽນ, ປະຈຸບັນນັກສຶກສາປະລິນຍາໂທ ແລະ ປະລິນຍາເອກຕ່າງປະເທດທີ່ກຳລັງຮຽນຢູ່ມະຫາວິທະຍາໄລຕົ່ງນານມີປະມານ 300 ຄົນ.





# ບໍລິສັດຂົວທາງຫຸ້ນສ່ວນຢູນນານຈຳກັດ

## 云南路桥股份有限公司

ນິຕິບຸກຄົນຂອງບໍລິສັດ: ທ່ານ ລູ ຊື່ເຈີ ປະທານບໍລິສັດຜູ້ອຳນວຍການໃຫຍ່
公司法定代表人：鲁仕泽 董事长、总经理



鲁班奖



老挝人民民主共和国友谊勋章证书



老挝人民民主共和国友谊勋章

ບໍລິສັດຂົວທາງຫຸ້ນສ່ວນຢູນນານຈຳກັດມີທຶນຈົດທະບຽນຈຳນວນ 350 ລ້ານຢວນ,ມີໃບອະນຸຍາດດຳເນີນທຸລະກິດຢູ່ຕ່າງປະເທດ,ມີຄຸນສົມບັດຊັ້ນ 1 ໃນການຮັບເໝົາກໍ່ສ້າງໂຄງການເສັ້ນທາງໂດຍລວມ(EPC) ແລະ ຄຸນສົມບັດຊັ້ນ 1 ໃນການຮັບເໝົາກໍ່ສ້າງພື້ນທາງ,ໜ້າທາງ,ຂົວ,ອຸໂມງ,ຄຸນສົມບັດຊັ້ນສອງໃນການຮັບເໝົາກໍ່ສ້າງກິດຈະກຳທາງລົງຈອດສະໜາມບິນ ແລະ ຄຸນສົມບັດຊັ້ນສອງຮັບເໝົາລວມໂຄງການວິສາວະກຳເທດສະບານ,ເປັນວິສາຫະກິດກໍ່ສ້າງຫລັກແຫລ່ງໃນລະບົບຄົມມະນາຄົມແຂວງຢຸນນານແຫ່ງປະເທດຈີນ.

ຂະແໜງການທຸລະກິດຂອງບໍລິສັດ: ກໍ່ສ້າງ ແລະວັດແທກໂຄງການທາງຫຼວງ,ຂົວ,ອຸໂມງ,ຊົນລະປະທານ,ໂຄງການຜັງເທືອງ,ເຄຫະສະຖານ ແລະ ອື່ນໆ,ຄົ້ນຄວ້າປະດິດສ້າງ ແລະ ນຳໃຊ້ວັດສະດຸໃໝ່,ຄົ້ນຄວ້າປະດິດສ້າງ ແລະ ພັດທະນາລະບົບຕິດຕາມຄວບຄຸມເສັ້ນທາງ; ລົງທຶນໃສ່ວິສະວະກຳຊີວະພາບ,ເຄຫະສະຖານທີ່ດິນ,ພະລັງງານໄຟຟ້າ, ການທ່ອງທ່ຽວ,ຮັກສາສິ່ງແວດລ້ອມ ແລະ ຊັບສິນຂໍ້ມູນຂ່າວສານ; ຮັບເໝົາໂຄງການກໍ່ສ້າງເສັ້ນທາງຢູ່ຕ່າງປະເທດ ແລະ ໂຄງການປະມູນສາກົນພາຍໃນປະເທດກໍ່ຄືການສົ່ງອອກເຄື່ອງອຸປະກອນ ແລະ ວັດສະດຸຂອງໂຄງການຢູ່ຕ່າງປະເທດດັ່ງກ່າວທີ່ຕ້ອງການນັ້ນ; ຈັດສົ່ງພະນັກງານ,ຄົນງານປະຕິບັດໂຄງການຢູ່ຕ່າງປະເທດດັ່ງກ່າວທີ່ຕ້ອງການ.ໃນປະຈຸບັນບໍລິສັດມີພະນັກງານພະລາກອນ1557 ຄົນ, ວິຊາການປະເພດຕ່າງໆ 616 ຄົນ.ມີເຄື່ອງອຸປະກອນກໍ່ສ້າງ ແລະ ກວດກາວັດແທກປະເພດຕ່າງໆລວມ 1000 ກວ່າເຄື່ອງ/ຊຸດ.ນັບແຕ່ບໍລິສັດໄດ້ຮັບການສ້າງຕັ້ງຂຶ້ນມາ,ໄດ້ສ້າງເສັ້ນທາງທຸກຊັ້ນລະດັບລວມ4000 ກວ່າກິໂລແມັດ,ໃນນັ້ນເສັ້ນທາງດ່ວນ 300 ກວ່າກິໂລແມັດ,ຂົວປະເພດຕ່າງໆຂະໜາດໃຫຍ່ ແລະ ຂະໜາດກາງມີ 300 ກວ່າແຫ່ງ.

ບໍລິສັດຖືຄຸນນະພາບເປັນຊີວິດຂອງວິສາຫະກິດ,ໄດ້ຜ່ານການຮັບຮອງຈາກລະບົບຄຸ້ມຄອງໂດຍສັງລວມທັງຄຸນນະພາບ,ສິ່ງແວດລ້ອມ ແລະ ຄວາມປອດໄພສຸຂະພາບທາງອາຊີບ.ອັດຕາຖືກມາດຕະຖານຂອງໂຄງການຮັບເໝົາກໍ່ສ້າງແມ່ນ 100%,ມີຫລາຍໂຄງການໄດ້ຮັບລາງວັນວິສະວະກຳດີເລີດຊັ້ນກະຊວງ ແລະແຂວງແລະ"ລາງວັນຫລຽນເງິນ"ວິສະວະກຳດີເລີດແຫ່ງຊາດ.ໃນນັ້ນເສັ້ນທາງດ່ວນຄຸນມິງຫາຢູຊີໄດ້ຮັບກຽດເປັນ"ລາງວັນຊ່າງຫລູປັນ"ລາງວັນວິສະວະກຳດີເລີດແຫ່ງຊາດຂອງໂຄງການກໍ່ສ້າງປະເທດຈີນສົກປີ 2002; ໂຄງການກໍ່ສ້າງຂົວທາງຕາມເສັ້ນທາງຄຸນມິງ-ບາງກອກຕອນບໍ່ເຕັນຫານ້ຳລຸນໃນປະເທດລາວທີ່ ສປ ຈີນຊ່ວຍເຫລືອກໍ່ສ້າງໃນປີ 2004 ຖືກປະເມີນເປັນວິສະວະກຳທີ່ດີຈາກກະຊວງການຄ້າຂອງຈີນ ແລະ ຈາກກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ, ພ້ອມທັງໄດ້ຮັບ"ຫລຽນໄຊມິດຕະພາບ"ຈາກລັດຖະບານລາວ.

云南路桥股份有限公司注册资本35000万元人民币，具有对外经营许可证、公路工程施工总承包壹级资质及路基、路面、桥梁、隧道专业承包壹级资质、机场场道工程专业承包贰级和市政公用工程施工总承包贰级资质，是中国云南省交通系统骨干施工企业。

公司的经营范围：公路、桥梁、隧道、水利、市政、房屋等工程建筑以及工程测绘，新材料的研制与应用、道路监控系统的研制与开发；对生物工程、房地产、电力、旅游、环保、信息产业的投资；承包境外公路工程和境内国际招标工程以及上述境外工程所需的设备、材料出口；对外派遣实施上述境外工程所需的劳务人员。公司现有员工1557人，各类专业技术人员616人。拥有各类专业施工及检测设备共1000余台/套。自公司成立以来，共修建各种等级公路4000余公里，其中高速公路近300公里，各类大中型桥梁300余座。

公司视质量为企业的生命，相继通过了质量、环境、职业安全健康综合管理体系认证。所承建的工程项目合格率为100%，多项工程获得省部级优质工程奖和国家优质工程“银质奖”。其中昆明至玉溪高速公路荣获2002年度中国建筑工程“鲁班奖”（国家优质工程奖）；2004年代表中华人民共和国援建的昆曼公路老挝境内磨丁至楠伦桥段工程被国家商务部和老挝交通运输建设邮电部评为优良工程，并被老挝政府授予“友谊勋章”。




ລຽນກາຫລູປັນປັດຕະສະຍາກຳຈີນ
中国建筑工程鲁班奖奖牌(2002年)

ນິຕິບຸກຄົນຂອງບໍລິສັດ: ຫລູຊື່ເຈີ ປະທານສະພາບໍລິຫານ,ຜູ້ອຳນວຍການໃຫຍ່
ທີ່ຢູ່ບໍລິສັດ: ເລກ 185 ຖະໜົນປາວໄຮເມືອງກວນຕູ້ນະຄອນຄຸນມິງແຂວງຢຸນນານ ສປ ຈີນ
ໂທລະສັບ: （+86）871—67168668 67163188
ແຟັກ: （+86）871—67161702 67161249
ລະຫັດໄປສະນີ: 650200
ເວັບໄຊ : WWW.YNLQ.COM.CN
ອີເມລ: YNLQ@YNLQ.COM.CN

公司法定代表人：鲁仕泽 董事长、总经理
公 司 地 址：云南省昆明市官渡区宝海路185号 邮 政 编 码：650200
联系电话：(+86)871—67168668 67163188 传 真：(+86)871—67161702 67161249
网 址：WWW.YNLQ.COM.CN E—mail：YNLQ@YNLQ.COM.CN

文 / 楚 然　图 / 新华社

# ຄຸນສົມບັດເຄົາລົບນັບຖືຜູ້ເຖົ້າຂອງເຜົ່າເຕີອັງ

## 德昂族的敬老美德

德昂族是有着悠久历史的民族，尊老敬老便是德昂族人世代传承的美德。

ເຜົ່າເຕີອັງເປັນຊົນເຜົ່າໜຶ່ງຂອງຈີນທີ່ມີປະຫວັດສາດມາດົນນານແລ້ວ,ການເຄົາລົບນັບຖືຜູ້ເຖົ້າຜູ້ແກ່ເປັນມູນເຊື້ອອັນດີງາມທີ່ປະຊາຊົນເຜົ່າເຕີອັງສືບທອດກັນມາທຸກເຊັ່ນຄົນ.ເຜົ່າເຕີອັງເຊື່ອຖືວ່າ,ຕ້ອງເປັນຄົນທີ່ມີກະຕັນຍູ,ຈຶ່ງສາມາດດຳລົງຊີວິດຢ່າງມີຄວາມສຸກໄດ້.ໃນຊີວິດການເປັນຢູ່ຂອງປະຊາຊົນເຜົ່າເຕີອັງ,ຜູ້ເຖົ້າຈະໄດ້ຢູ່ໃນຫ້ອງທີ່ສະດວກສະບາຍທີ່ສຸດ,ການກິນດື່ມຈະກຽມຕ່າງຫາກເພື່ອສະແດງໃຫ້ເຫັນເຖິງຄວາມເຄົາລົບ;ຖ້າວ່າຜູ້ເຖົ້າໄປວຽກນອກ,ທົ່ວຄອບຄົວຈະກົ້ມຫົວສົ່ງ;ຖ້າຜູ້ເຖົ້າກັບມາຮອດບ້ານ,ທົ່ວຄອບຄົວຈະໄປຕ້ອນຮັບຢູ່ນອກເຮືອນ; ຖ້າວ່າພົບກັບຜູ້ເຖົ້າຢູ່ທາງນອກ,ຕ້ອງກົ້ມຫົວ ແລະ ທັກທາຍ;ຖ້າວ່າພົບກັບຜູ້ເຖົ້າແບບໜ້າຕໍ່ໜ້າຢູ່ກາງທາງຈະຫຼີກທາງ,ແລະ ຕ້ອງຫຼີກໄປທິດລຸ່ມເສັ້ນທາງ,ຫາກບໍ່ແມ່ນທິດເໜືອຂອງເສັ້ນທາງ.

ບຸນຫົດນ້ຳ(ບຸນກອງຊາຍ)ຂອງເຜົ່າເຕີອັງກໍ່ເອີ້ນເປັນ"ບຸນເຄົາລົບຜູ້ເຖົ້າ".ໃນໄລຍະວັນບຸນນີ້,ປະຊາຊົນເຜົ່າເຕີອັງຈະຈັດພິທີລ້າງມືລ້າງຕີນໃຫ້ແກ່ຜູ້ເຖົ້າໃນຄອບຄົວຕົນເອງ.ໃນເວລາຈັດພິທີ,ຈະໃຫ້ຄົນລຸ້ນຫຼັງກຽມນ້ຳຮ້ອນຊາມໜຶ່ງ,ວາງໄວ້ຢູ່ກາງຫ້ອງຮັບແຂກ,ແລ້ວເຊີນຜູ້ເຖົ້າໃນຄອບຄົວອອກມາ ແລະ ນັ່ງຢູ່ໃນຫ້ອງ.ຄົນລຸ້ນຫຼັງຈະນັ່ງຄູ້ເຂົ່າ,ຂໍອະໄພ ໂທດນຳຜູ້ເຖົ້າກ່ຽວກັບການກະທຳອະກະຕັນຍູໃນໜຶ່ງປີຜ່ານມາ.ຖັດຈາກນັ້ນ,ຄົນລຸ້ນຫຼັງຈະລ້າງມືລ້າງຕີນໃຫ້ຜູ້ເຖົ້າ,ອວຍພອນໃຫ້ໄດ້ຮັບຄວາມດີຄວາມສຸກໃນປີໃໝ່.ນອກນີ້,ໃນຕອນຂ້ອນແຈ້ງ,ຊາວໜຸ່ມຈະໄປເດັດດອກໄມ້ຢູ່ເທິງພູເພື່ອມອບໃຫ້ຜູ້ເຖົ້າ;ຫາມນ້ຳໃສຢູ່ແຄມແມ່ນ້ຳ ຫຼື ນ້ຳຫ້ວຍມາຫົດນ້ຳໃສ່ຜູ້ເຖົ້າໃນບ້ານ,ເພື່ອເປັນການອວຍພອນໃຫ້ຜູ້ເຖົ້າມີອາຍຸຍືນຍາວ,ແລະມີຄວາມສຸກກາຍສະບາຍໃຈ.ຄອບຄົວຕ່າງໆຍັງຈະກຽມອາຫານແຊບໆ,ເຂົ້າໜົມ ຫຼື ເຄື່ອງນຸ່ງຫົ່ມ,ໄປອວຍພອນປີໃໝ່ຕໍ່ຜູ້ທີ່ມີອາຍຸສູງສຸດ ແລະ ຮັບຄວາມເຄົາລົບນັບຖືຫຼາຍສຸດໃນບ້ານ.ໃນມື້ນັ້ນ,ຜູ້ເຖົ້າ ແລະ ຊາວໜຸ່ມຈະນຸ່ງຊຸດວັນບຸນ,ຟ້ອນກອງຂາຊ້າງເພື່ອສະເຫຼີມສະຫຼອງວັນບຸນ.ໃນເວລາກິນເຂົ້າຈະໃຫ້ຜູ້ເຖົ້າເລີ່ມກິນກ່ອນ,ຖ້າວ່າຜູ້ເຖົ້າບໍ່ທັນເລີ່ມກິນ,ຄົນລຸ້ນຫຼັງກໍ່ບໍ່ທັນໃຫ້ກິນ.





ຖ້າວ່າລູກຊາຍເຕີບໃຫຍ່ຂຶ້ນແລ້ວຈະໄປດຳລົງຊີວິດໃນເຮືອນຕ່າງຫາກ,ຈະຈຶ່ງ"ນາລ້ຽງຜູ້ເຖົ້າ"ສຳລັບພໍ່ແມ່.ຂໍແຕ່ຢູ່ສະຖານທີ່ທີ່ມີຜູ້ເຖົ້າ,ຖ້າວ່າຮ້ອງເພງກໍ່ຕ້ອງຄອບຜູ້ເຖົ້າກ່ອນ,ຖ້າວ່າຮ້ອງເພງຮັກກໍ່ຕ້ອງຂໍຄວາມເຫັນດີນຳຜູ້ເຖົ້າກ່ອນ.ຊາວໜຸ່ມຄົນລຸ້ນຫລັງຈະສ້າງແນວຄິດ ຫຼື ຄວາມຊິນເຄີຍທີ່ເຄົາລົບຜູ້ເຖົ້າມາແຕ່ຍາມນ້ອຍ.ປະຊາຊົນເຜົ່າເຕີອັງມັກເວົ້າວ່າ,ຖ້າວ່າບໍ່ມີຜູ້ເຖົ້າ,ກໍ່ຈະບໍ່ມີເຮົາມື້ນີ້,ສະນັ້ນ,ຕ້ອງໃຊ້ການກະທຳຕົວຈິງເພື່ອເຄົາລົບນັບຖື ແລະ ດູແລຜູ້ເຖົ້າ,ຄົນລຸ້ນຫຼັງກໍ່ຈະຮຽນແບບນຳ.

ສຸພາສິດຈີນກ່າວວ່າ"ເຄົາລົບຜູ້ເຖົ້າຈະໄດ້ອາຍຸຍືນຍາວ".ຢູ່ລະຫວ່າງປະຊາຊົນເຜົ່າເຕີອັງທີ່ມີຄຸນສົມບັດເຄົາລົບຜູ້ເຖົ້າ,ປະກົດມີຜູ້ເຖົ້າທີ່ມີອາຍຸຍືນຍາວຢ່າງຫຼວງຫຼາຍ,ໂດຍມີອາຍຸສູງກວ່າ 100 ປີ,ທັງມີສຸຂະພາບດີໝົດທຸກຄົນ.




## 印奇果

印奇果（Sacha Inchi）（plukenetia volubilis），别名印加果、美藤果、南美油藤、星油藤。大戟科，多年生木质藤本植物，原生长在海拔 80 至 1700 米南美洲安第斯山脉热带雨林，在南美洲印加地区当地土著人已有上千年的食用历史。从本期起，我们将分期为您介绍印奇果的特性、种植、栽培、养育及开发应用。

### ໜຶ່ງ,ແນະນຳກ່ຽວກັບໝາກອິນດາໂດຍຫຍໍ້

ໝາກອິນດາ (Sacha Inchi) (Plukenetia Volu-bilis),ຫຼື ເອີ້ນອີກຊື່ອື່ນແມ່ນໝາກອິນຄາ,ໝາກໄມ້ໃຫ້ນ້ຳມັນປະເພດເຄືອຈາກອາເມຣິກາໃຕ້,ໝາກດາວອິນດາເປັນປະເພດພືດໃບໃຫຍ່ຂອງເຂດຮ້ອນ,ໃບຂຽວເຕີບໃຫຍ່ຕະຫຼອດປີ,ໂດຍດັ້ງເດີມຈະອາໃສຢູ່ເຂດປ່າຮ້ອນຂອງພູເຂົາແອນດິສຂອງທະວີບອາເມຣິກາໃຕ້,ເຊິ່ງອາໃສ່ຢູ່ເຂດທີ່ມີຄວາມສູງຈາກລະດັບໜ້ານ້ຳທະເລລະຫວ່າງ 80-1,700 ແມັດ,ປະຊາຊົນພື້ນເມືອງຂອງເຂດອິນດາຂອງທະວີບອາເມຣິກາໃຕ້ໄດ້ມີປະຫວັດສາດເປັນພັນກ່ວາປີແລ້ວໃນການບໍລິໂພກໝາກອິນດາ.

ປະລິມານນ້ຳມັນຢູ່ເມັດພືດໝາກອິນດາມີປະມານ 45%-56%,ອົງປະກອບຂອງໄຂມັນຂອງໝາກດັ່ງກ່າວປະກອບດ້ວຍຫຼາຍທາດກົດໄຂມັນທີ່ບໍ່ອີ່ມຕົວ,ປະລິມານຂອງໄຂມັນຈະເຫັນໄດ້ຈະແຈ້ງວ່າແມ່ນຈະສູງກວ່າພືດທີ່ໃຫ້ນ້ຳມັນຊະນິດອື່ນໆ,ໃນນັ້ນທາດກົດໄຂມັນທີ່ ω ເປັນຫຼັກ,ຄື: ω-3、6、9, ເຊິ່ງສາມປະລິມານຂອງທັງສາມທາດລວມກັນແມ່ນ 92% ຂຶ້ນໄປ,ໃນນັ້ນທາດກົດໄຂມັນປະເພດ ω-3 ສູງສຸດຈະຢູ່ປະມານ 48%-54%.

ນ້ຳມັນທີ່ໄດ້ຈາກການສະກັດກັ່ນຈາກເມັດພືດດັ່ງກ່າວແມ່ນບໍ່ປະປົນທາດພິດທຸກຊະນິດ ແລະ ບໍ່ມີທາດທີ່ເປັນໄພຕໍ່ສຸຂະພາບ,ສາມາດໃຊ້ກັບເຄື່ອງບໍລິໂພກ,ເຄື່ອງຮັກສາສຸຂະພາບ,ເຄື່ອງສຳອາງ ແລະ ເຄື່ອງໃຊ້ອື່ນໆ. ມີຜົນດີຢ່າງຈະແຈ້ງໃນການໃຊ້ຮັກສາຄວາມສົມດຸນຂອງໄຂມັນໃນເລືອດ,ສະກັດກັ້ນການເປັນໂລກເສັ້ນເລືອດຫົວໃຈ,ຮັກສາຄວາມສົດຊື່ນຂອງຜິວ,ຖືກຂະໜານນາມວ່າເປັນ "ນ້ຳມັນປາທີ່ໄດ້ມາຈາກການສະກັດຈາກປາທະເລນ້ຳເລິກ".ໝາກອິນດາໄດ້ຮັບລາງວັນຫຼຽນຄຳຄຸນນະພາບໃນງານວາງສະແດງນ້ຳມັນເພື່ອບໍລິໂພກສາກົນຢູ່ນະຄອນຫຼວງປາຣີໃນປີ 2004,ປີ 2006 ແລະ ປີ 2010.ນັບຕັ້ງແຕ່ປີ 2002 ເປັນຕົ້ນມາ,ຖານເຂດຜະລິດດັ້ງເດີມທີ່ຢູ່ປະເທດເປຣູໄດ້ສົ່ງເສີມໂຄສະນາການປູກຝັງ ແລະ ການຄົ້ນຄວ້າໝາກອິນດາຢ່າງກວ້າງຂວາງ,ເຊິ່ງໄດ້ຮັບຜົນສຳເລັດທາງດ້ານປະສິດທິພາບທາງເສດຖະກິດ ແລະ ສັງຄົມເປັນຢ່າງດີ.

ໃນປີ 2006,ໄດ້ປະສົບຜົນສຳເລັດໃນການນຳແນວພັນມາປູກຢູ່ ສປ ຈີນ ແລະ ປະຈຸບັນທາງບໍລິສັດຄົ້ນຄວ້າຊັບພະຍາກອນຊີວະວິທະຍາພືດອິນດາສິບສອງພັນນາຈຳກັດໄດ້ມີການປູກພືດດັ່ງກ່າວຈຳນວນຫຼາຍເນື້ອທີ່ຢູ່ເມືອງຊຽງຮຸ່ງ.

### ສອງ,ຈຸດພິເສດທາງຊີວະພາບຂອງໝາກອິນດາ

ຕົ້ນໝາກອິນດາເປັນພືດປະເພດເຄືອທີ່ມີລຳຕົ້ນຍົດງໍ ແລະ ຂຽວຕະຫຼອດປີ,ສໍ່ດອກຈະເກີດຕາມກ້ອງກິ່ງໃບຫຼື ທາງຂ້າງຂອງໃບ,ດອກຜູ້ ແລະ ດອກແມ່ຈະອອກໃນສໍ່ດຽວກັນ,ດອກຜູ້ນ້ອຍສີຂາວ ແລະ ຈະອອກຢູ່ໃຈກາງຂອງສໍ່ດອກ,ສ່ວນດອກແມ່ຈະອອກຢູ່ໃຈກາງຂອງສໍ່ ແລະ ມີດອກດຽວ.ເມື່ອເວລາໝາກສຸກຈະມີສີຄືສີນ້ຳຊາ,ໂດຍປົກກະຕິຈະມີ 4-7 ຈີມເປືອກ,ແຕ່ລະຈີມເປືອກຈະເກັບ 1 ເມັດພັນ.ໜຶ່ງເມັດພັນຈະໃຊ້ເວລາໜຶ່ງເດືອນໃນການກ້າເປັນເບ້ຍ,ພາຍຫຼັງທີ່ປູກເປັນເວລາ 2-3 ເດືອນແລ້ວຈຶ່ງຈະສາມາດມີດອກ ແລະ ເປັນໝາກໄດ້,ອອກດອກເປັນໝາກທຸກ 4 ລະດູການ,ຍອດມູນຄ່າການຜະລິດສູງ.ໃນໜຶ່ງປີສາມາດເກັບກ່ຽວຜົນຜະລິດໄດ້ 700 ~ 2 000 kg /hm2 ແລະ ສາມາດເກັບກ່ຽວຜົນຜະລິດໄດ້ເຖິງ 10 ປີຂຶ້ນໄປ.ໝາກອິນດາສາມາດປູກ ແລະ ເກັບກ່ຽວຜົນໄດ້ໃນປີດຽວກັນ,2-3 ປີກໍສາມາດກ້າວເຂົ້າສູ່ປີແຫ່ງການເກັບກ່ຽວຜົນຜະລິດໄດ້ດີ.ບ່ອນຜະລິດດັ້ງເດີມທີ່ຢູ່ປະເທດເປຣູແມ່ນສາມາດຜະລິດໄດ້ 250kg ຂຶ້ນໄປຕໍ່ເນື້ອທີ່ 1 ມູ.

ໝາກອິນດາເປັນພືດທີ່ເຕີບໂຕໄວ,ເປັນພືດທີ່ຈັດຢູ່ໃນພືດທີ່ຕ້ອງການແສງແດດຫຼາຍ.ຄວາມໄວໃນການສັງເຄາະແສງອາທິດຂອງໃບຕົ້ນອິນດາແມ່ນສູງຫຼາຍ ( > 20mol/(m2•s),ເຊິ່ງໃກ້ຄຽງກັບການສັງເຄາະແສງ



ຂອງພືດຢູ່ທະເລຊາຍ,ພື້ນຜິວຂອງຕົ້ນອິນຄາຖືກແສງແດດສ່ອງຫຼາຍເທົ່າໃດຍິ່ງເປັນຜົນດີໃຫ້ແກ່ການອອກດອກ ແລະ ເປັນໝາກ ແລະ ຈຳນວນຂອງງ່າອ່ອນ,ດອກ ແລະ ໝາກກໍຈະຍິ່ງຫຼາຍ.ໃນເວລາທີ່ແສງແດດອ່ອນ,ຕົ້ນອິນຄາຈະຕ້ອງການຮອບວຽນເວລາໃນການເຕີບໂຕຈະເລີນພັນດົນກວ່າ; ໃນເວລາທີ່ບໍ່ມີແສງແດດ,ຈຳນວນຂອງດອກຈະຫຼຸດລົງຫຼາຍ,ຄຽງຄູ່ກັບຍອດຜະລິດຕະພັນກໍຈະຫຼຸດລົງຢ່າງວ່ອງໄວ.

ເມັດພືດອິນຄາຕົ້ນຕໍປະກອບດ້ວຍທາດອົງຄະທາດຊີວະວິທະຍາຫຼາຍຊະນິດເຊັ່ນ: ໄຂມັນ, ໂປຼຕີນ,ວິຕາມິນ, ໂຄເຣດສະໂຕຣອນ ແລະ ອື່ນໆ.ນອກນັ້ນຍັງປະກອບດ້ວຍຈຳພວກທາດຊ່ວຍໃນການສ້າງ ແລະ ສະລາຍເຊັ່ນ: ທາດອັດຄາລອຍ,ທາດຊາໂປນິສຊາ,ທາດຄູມາຣິນ ແລະ ອື່ນໆ.ໃນຊຸມປີ 80 ຂອງສັດຕະວັດທີ 20,ນັກວິທະຍາສາດໄດ້ເລີ່ມຕົ້ນການຄົ້ນຄວ້າອົງປະກອບທາງເຄມີຂອງເມັດພືດອິນຄາ ແລະ ປະສິດທິຜົນທາງຊີວະວິທະຍາ,ເມັດພືດອິນຄາມີປະລິມານຂອງນ້ຳມັນປະມານ 30%-60%,ເຊິ່ງສ່ວນໃຫຍ່ແມ່ນທາດໄຂມັນທີ່ບໍ່ອີ່ມຕົວ,ມີປະລິມານສູງ 90%, ເຫັນໄດ້ແຈ້ງແມ່ນສູງກວ່າພືດກະເສດທີ່ໃຫ້ນ້ຳມັນຊະນິດອື່ນ.ທາດໄຂມັນທີ່ບໍ່ອີ່ມຕົວນີ້,ສ່ວນໃຫຍ່ແມ່ນຈຳພວກທາດ $\omega$ ແລະ ມີປະລິມານສູງກວ່າປະເພດຖົ່ວດິນ,ຜັກກາດກວ້າງຕຸ້ງ,ໝາກງາ ແລະ ປະເພດພືດໃຫ້ນ້ຳມັນຊະນິດອື່ນໆ.ໃນນັ້ນ,($\omega$-3) ມີປະລິມານ 45.2%-52.51%,ເຊິ່ງສູງກວ່າກົດໄລໂນເລນິດ-$\alpha$ ທີ່ຢູ່ໃນນ້ຳມັນວໍນັສ ແລະ ນ້ຳມັນໂອລິຟ.ກົດໄລໂນເລນິດ-$\alpha$ ສາມາດລຶດການແຂງຕົວຂອງທາດໂຄເຣສໂຕຣອນ,ເພີ່ມຄວາມຫົດຍືດຂອງຫຼອດເລືອດ,ເຮັດໃຫ້ການໝູນວຽນຂອງຫຼອດເລືອດໃນຫົວໃຈໂລ່ງດີ,ຮັກສາຄວາມສົມດູນຂອງຈຸລັງເສັ້ນເລືອດຝອຍ, ຊຸກຍູ້ການມໝູນວຽນຂອງເລືອດ,ເພີ່ມພູມຕ້ານທານຂອງຄົນເຮົາ,ແກ້ໄຂບັນຫາສຸຂະພາບບໍ່ແຂງແຮງເນື່ອງຈາກລະບົບຊີວະວິທະຍາ, ໂດຍສະເພາະແມ່ນສະກັດກັ້ນໂລກຄວາມຕຸ້ຍ, ໂລກຫົວໃຈເສັ້ນເລືອດ, ໄຂມັນຫຸ້ມຕັບ ແລະ ອື່ນໆ,ເຊິ່ງມີຄວາມສຳຄັນຕໍ່ປະສິດທິພາບຂອງຊີວະວິທະຍາ.

ຮ່າງກາຍຂອງຄົນເຮົາແມ່ນບໍລິໂພກນ້ຳມັນຖົ່ວເຫລືອງ,ນ້ຳມັນຖົ່ວດິນ,ເຮັດໃຫ້ໄດ້ຮັບທາດໄລໂນເລນິນບໍ່ພຽງພໍ,ໝາກອິນຄາສາມາດທົດແທນຄວາມຕ້ອງການຂອງການບໍລິໂພກທາດໄລໂນເລນິດ-$\alpha$ ປະຈຳວັນໄດ້. ໂດຍສົມທຽບກັບພືດທີ່ໃຫ້ນ້ຳມັນໂດຍທົ່ວໄປ (ນ້ຳມັນຖົ່ວເຫລືອງ ແລະ ອື່ນໆ) ແລ້ວ,ໝາກອິນຄາເຫັນໄດ້ແຈ້ງແມ່ນສາມາດຫຼຸດອັດຕາສ່ວນຂອງທາດໄຕຼກຼີເຊີໄຣດ໌ຢູ່ໃນເລືອດໝູ ແລະ ການກໍ່ຕົວຂອງໂຄເຣດສະໂຕຣອນ, ເພີ່ມປະລິມານ ແລະ ອັນຕາສ່ວນຂອງທາດກົດອີໂຄຊະເພນຕະອີໂນອິກ(EPA) ແລະ ທາດກົດໂດໂຄຊະເຮກຊະອີກໂນອິກ (DHA).ພາຍຫຼັງທີ່ກິນນ້ຳມັນອິນຄາແລ້ວສາມາດຫຼຸດຜ່ອນທາດໄຕຼກຼີເຊີໄຣ໌ດຢູ່ໃນຮ່າງກາຍຂອງຄົນຜູ້ໃຫຍ່ພາຍຫຼັງທີ່ກິນອາຫານແລ້ວ.ເຫັນຜົນໄດ້ຢ່າງຈະແຈ້ງໃນການສະກັດກັ້ນໂລກຫຼອດເລືອດ.ໃນຄຳວິຈານຕໍ່ບົດທົດລອງຄົ້ນຄວ້າກ່ຽວກັບຂະບວນຕ້ານອອກຊີເຈນຂອງເລືອດ ແລະ ທາດ 8-ໄຮດຼອກຊີ-2-ດີໂອຊີໂກໂນຊິນ (8 – OHdG)ຢູ່ໃນນ້ຳຢ່ຽວໄດ້ຊີ້ໃຫ້ເຫັນວ່ານ້ຳມັນຂອງໝາກອິນຄາແມ່ນມີຄວາມລ້ຳເລີດສູງໃນຂະບວນການຕ້ານອອກຊີເຈນ ແລະ ຕ້ານການຖືກທຳລາຍຂອງ DNA.



# 云南鼎顺货运代理有限公司

鼎顺货运
DINGSHUN LOGISTICS

## Yunnan Dingshun Freight Transport Agency Co.,Ltd

云南鼎顺货运代理有限公司响应“国家桥头堡战略”，服务“中国—东盟自由贸易区”，经云南省工商局、中国海关、国家外经贸部、商务部正式批准成立的一级国际货运代理专业公司。

为更好的服务客户，在中国昆明、云南边境口岸、老挝万象、泰国曼谷、缅甸仰光、越南河内、柬埔寨金边都设有办事处，能及时为客户补货，人员、车辆和设备提供过境转关服务。

Yunnan Dingshun Logistics Ltd. answered national development strategy service for “China ASEAN free trade zone” .Yun Nan Industrial and Commercial Bureau , China Customs, the State Trade and Economic Cooperation and Department of Commerce approved a freight forwarding business. In order to better serve customers, our company have branch office in frontier ports, Vientiane of Laos, Bangkok Thailand, Burma Yangon, Hanoi in Vietnam, Kampuchea Phnom Penh, replenishment cargo for custom in time. Provide the customs transit for personnel , vehicle and equipment in frontier ports.

**中国昆明、老挝、泰国、缅甸、越南、柬埔寨 货运专线　大型项目配套物流**

**海运、陆运、空运、国际运输、物资采购　保险代理、单证缮制、代理报关、外汇结算，提供门到门服务**

**Freight line of China Kunming, Laos, Thailand, Burma, Vietnam, Kampuchea, Large projects logistics.**
**Transportation by sea, road transport, air transport, international transport, supplies purchasing, insurance agency, fill in the documents, customs declaration, foreign exchange settlement and door-to-door service**









Http: www.dingshun88.com　E-MAIL: 168606284@QQ.COM
Customer QQ: 1459997464、168606284　TEL: 0086-871-68381415
ADD:No.11C Entrance2 Building 7th Xichunyuan
Century Town Kunming Province Yunnan China

网站：www.dingshun88.com　E-MAIL：168606284@QQ.COM
商务QQ：1459997464、168606284　电话：0086-871-68381415
总部地址：云南省昆明市世纪城惜春苑7幢二单元11C



# ບໍລິສັດຢວນດາຂາອອກຂາເຂົ້າສິບສອງພັນນາຈຳກັດ

# 西双版纳远大进出口有限公司

ບໍລິສັດຢວນດາຂາອອກຂາເຂົ້າສິບສອງພັນນາຈຳກັດແມ່ນບໍລິສັດຈໍລະຈອນສິນຄ້າສັງລວມບໍລິສັດໜຶ່ງ,ກິດຈະການຕົ້ນຕໍຄື: ຮັບສົ່ງສິນຄ້າລະຫວ່າງຊາດຈີນ,ລາວ,ໄທ,ບໍລິການມີສາງໃຫ້ເຊົ່າ,ສິນຄ້າຂາອອກຂາເຂົ້າແຈ້ງ ພາສີແລະແຈ້ງດ່ານກວດໂລກພະຍາດແລະໄລ່ລຽງເງິນຕາຕ່າງປະເທດແລະອື່ນໆ. ສໍານັກງານໃຫຍ່ຕັ້ງຢູ່ເຂດພັດທະນາເສດຖະກິດບໍ່ຫານສິບສອງພັນນາ. ຍັງມີສໍານັກງານຕັ້ງຢູ່ຄຸນໝິງຈີນ,ບາງກອກໄທ,ນະຄອນຫຼວງວຽງຈັນລາວແລະນາເຕີຍ,ບໍລິສັດມີສາງແລະທີມງານລົດຂົນສົ່ງເອງ.

ບໍລິສັດໄດ້ສ້າງສາຍພົວພັນດ້ານກິດຈະການກັບພາກສ່ວນທີ່ກ່ຽວຂ້ອງເປັນຢ່າງດີ, ຄື: ສະຖານທູດລາວ,ໄທ,ກໍາປູເຈຍແລະດ່ານພາສີ,ດ່ານກວດກາຊາຍແດນແລະອື່ນໆ.ເພື່ອຍົກປະສິດທິພາບການຂົນສົ່ງແລະການສົ່ງເຖິງສິນຄ້າຢ່າງປອດໄພແລະວ່ອງໄວໃຫ້ສູງຂຶ້ນ.

ບໍລິສັດໄດ້ສະໜອງບໍລິການຄົບວົງຈອນແຕ່ກົກສຸດປາຍ,ເພື່ອສະໜອງບໍລິການ “ໂດຍໄວ, ມີຄວາມປອດໄພ,ມີຄວາມສະດວກແລະມີປະສິດທິພາບສູງ” ໃຫ້ແກ່ລູກຄ້າເປັນວັດຖຸປະສົງຖາວອນຂອງບໍລິສັດຕະຫລອດມາ.

西双版纳远大进出口有限公司是一家主要从事中、老、泰国际运输、仓储、进出口报关报检、结汇等综合性物流公司，总部设在西双版纳磨憨经济开发区，在中国昆明、泰国曼谷、老挝万象和那堆设有办事处，自有仓库和车队。

公司在工作中与相关单位（老挝、泰国、柬埔寨等大使馆及海关边防检查站等）都建立了良好的业务关系，从而提高了货物安全、迅速送达的效率。

公司提供一票到底的全程服务，为客户提供“快速、安全、便捷、高效”的服务一直是公司永恒的宗旨。







总经理：张惠平先生
ທ່ານ ຈາງຮຸ້ຍຜິງ

**主营业务**

★国际货代、货物进出口
★中国—老挝—泰国　专线往返海路、陆路运输
★中国、老挝、泰国代理报关

★ເປັນຕົວແທນຂົນສົ່ງສິນຄ້າລະຫວ່າງຊາດແລະສິນຄ້າຂາອອກຂາເຂົ້າ
★ການຂົນສົ່ງສະເພາະໄປກັບທາງທະເລ,ທາງບົກຂອງຈີນ-ລາວ-ໄທ
★ເປັນຕົວແທນແຈ້ງພາສີຈີນ-ລາວ-ໄທ

公司总部地址：云南省西双版纳州磨憨经济开发区小商品市场45-46号（紫薇路19-21号）
ສໍານັກງານໃຫຍ່ບໍລິສັດຕັ້ງຢູ່: ຖະໜົນຈືເວີຍເລກທີ 19-21 ເບີເຮືອນ45-46 ຕະຫຼາດສິນຄ້ານ້ອຍເຂດພັດທະນາບໍ່ຫານສິບສອງພັນນາ
电话TEL：0691-8811237、8811437 、13518799245(张惠平)　E-MAIL: 168606284@qq.com
传真FAX：0691-8811237　客服QQ：783667765
网站：www.ydjck.com　E-mail: 783667765@qq.com
老挝万象办公室地址（OFFICE LAO）：万象市T2路（中国茅台酒专卖店对面）
ສໍານັກງານວຽງຈັນລາວ: ຖະໜົນ T2 ນະຄອນຫຼວງວຽງຈັນ ຕໍ່ໜ້າຮ້ານຂາຍເຫຼົ້າ ເມົາໄຕຈີນ
电话：00856-20-22992286、22564918　电话/传真：00856-21-214071
泰国曼谷办公室地址（OFFICE THAI）：41/54-55 M.7 T.Klongsong A.klongluang Pathumthani 12120
Tel:+66-838247785, +66-906364278 , 021-534852
Email: 168606284@QQ.com

文 / 杨晓梅 蓝 天

## 一、日常用语 ຄຳເວົ້າທີ່ໃຊ້ປະຈຳວັນ

情景会话：聊聊电视剧《水浒传》

ບົດສົນທະນາ:ລົມກັນກ່ຽວກັບລະຄອນໂທລະພາບ《ນິທານສ້ອງກັ້ງ》

情景会话：聊聊电视剧《水浒传》主题曲“好汉歌”

ບົດສົນທະນາ:ລົມກັນກ່ຽວກັບບົດເພງຫຼັກ“ເພງລູກຜູ້ຊາຍ”ຂອງລະຄອນໂທລະພາບ《ນິທານສ້ອງກັ້ງ》.

gē shǒu liú huān yǎn chàng de diàn shì
A. 歌手刘欢演唱的电视
jù shuǐ hǔ zhuàn de zhǔ ti qǔ hǎo hàn
剧《水浒传》的主题曲“好汉
gē chuán biàn zhōng guó de měi yí gè
歌”传遍中国的每一个
jiǎo luò yě shǐ hěn duō wài guó péng yǒu
角落，也使很多外国朋友
gǎn shòu dào shuǐ hǔ zhuàn de mèi lì
感受到《水浒传》的魅力。

A.ບົດເພງຫຼັກ“ເພງລູກຜູ້ຊາຍ”ຂອງລະຄອນໂທລະພາບ《ນິທານສ້ອງກັ້ງ》ທີ່ນັກຮ້ອງຫລີວຮ່ວນເປັນຜູ້ຮ້ອງນັ້ນໄດ້ເຜີຍແຜ່ທົ່ວທຸກມຸມທຸກແຈຂອງແຜ່ນດິນຈີນ,ທັງເຮັດໃຫ້ເພື່ອນມິດຕ່າງປະເທດເປັນຈຳນວນຫຼວງຫຼາຍໄດ້ຮັບຮູ້ສະເໜ່ຂອງ《ນິທານສ້ອງກັ້ງ》.

shì de tōng guò liú huān de yǎn chàng
B. 是的。通过刘欢的演唱，
dà jiā kě yǐ zhēn zhì dì tǐ huì dào
大家可以真挚地体会到
shuǐ hǔ zhuàn lǐ zhū duō yīng xióng rén
《水浒传》里诸多英雄人
wù háo shuǎng de xìng gé hé chú bào ān
物豪爽的性格和除暴安
liáng gǎn yú fǎn kàng cháo tìng hēi àn
良，敢于反抗朝廷黑暗
de yīng xiong qì gài liú huān de yǎn
的英雄气概，刘欢的演
chàng kān chēng shì wán měi zhī zuò
唱堪称是完美之作。

B.ແມ່ນແທ້,ໂດຍຜ່ານການຮ້ອງສະແດງຂອງຫລີວຮ່ວນ,ເຮັດໃຫ້ຄົນທັງຫຼາຍມີຄວາມຮັບຮູ້ອຸປະນິໄສກ້າໄດ້ກ້າເສຍຂອງວິລະບຸລຸດເປັນຈຳນວນຫຼວງຫຼາຍຂອງ《ນິທານສ້ອງກັ້ງ》ແລະ ອຸປະນິໄສວິລະຊົນທີ່ກຳຈັດຄວາມຮຸນແຮງປົກປ້ອງປະຊາຊົນ,ກ້າຕ້ານທານການປົກຄອງທີ່ມືດມົວຂອງລາຊະວົງ.ການຮ້ອງສະແດງຂອງຫລີວຮ່ວນສົມຊື່ເປັນບົດປະພັນທີ່ຈົບງາມສົມບູນ.

dà hé xiàng dōng liú wā tiān shàng de
A. “大河向东流哇，天上的
xīng xing cān běi dǒu wā shuō zǒu zán
星星参北斗哇，说走咱
jiù zǒu nǐ yǒu wǒ yǒu quán dōu yǒu zhè
就走你有我有全都有。”这
jǐ jù gē cí suī rán hěn duǎn dàn tōng
几句歌词虽然很短，但通
guò liú huān de yǎn chàng ràng dà jiā
过刘欢的演唱，让大家
xiǎng dào le hǎo hàn men guò zháo dà wǎn
想到了好汉们过着大碗
hē jiǔ dà koǔ chī ròu wú jū wú shù de
喝酒，大口吃肉，无拘无束的
kuài lè shēng huó yě néng gǎn shòu dào
快乐生活，也能感受到
tā men xiàng wǎng zì yóu píng děng hé
他们向往自由、平等、和
xié de shēng huó huán jìng zài tā men
谐的生活环境，在他们
de lǐ xiǎng tiān dì li méi yǒu qí shì
的理想天地里没有歧视、
méi yǒu yā pò nán gēng nǚ zhī jiā jia
没有压迫，男耕女织，家家
dōu guò zháo xìng fú kuài lè de rì zǐ
都过着幸福快乐的日子。

A.ແມ່ນ້ຳໄຫລສູ່ທິດຕາເວັນອອກ,ໝູ່ດາວກັບດາວເໜືອເທິງຟ້າ,ເວົ້າໄປຂ້ອຍກໍໄປໂລດ,ເຈົ້າມີຂ້ອຍມີໝົດທຸກຄົນກໍມີ,ຄຳສັບເພງຕອນນີ້ເຖິງວ່າແມ່ນສັ້ນໂພດ,ແຕ່ວ່າໂດຍການຮ້ອງສະແດງຂອງຫລີວຮ່ວນ,ເຮັດໃຫ້ຄົນທັງຫຼາຍຄິດເຖິງພວກລູກຜູ້ຊາຍດຳລົງຊີວິດເບີກບານມ່ວນຊື່ນແບບທ່າທາງທີ່ດື່ມເຫຼົ້າຖ້ວຍໃຫຍ່,ກິນຊີ້ນຖ້ວຍໃຫຍ່,ກໍສາມາດຮັບຮູ້ພວກເຂົາເຈົ້າຄອຍຫາສະພາບແວດລ້ອມທີ່ດຳລົງຊີວິດມີຄວາມເສລີ,ມີຄວາມສະເໝີພາບ ແລະ ຄວາມກົມກຽວກັນ.ຢູ່ໃນແຖນຟ້າອຸດົມຄະຕິຂອງເຂົາເຈົ້າບໍ່ມີການດູຖູກ,ບໍ່ມີກົດຂີ່,ຊາຍໄຖນາຍິງຕ່ຳແຜ່ນ,ທຸກໆຄອບຄົວຜ່ານຊີວິດເບີກບານມ່ວນຊື່ນອີ່ມໜຳສຳລານ.

hái yǒu lù jiàn bù píng yì shēng hǒu wā
B. 还有“路见不平一声吼哇，
gāi chū shǒu shí jiù chū shǒu wā fēng
该出手时就出手哇，风
fēng huǒ huǒ chuǎng jiǔ zhōu wā zhè jǐ
风火火闯九州哇。”这几
jù gē cí hé xuán lǜ fǎn yìng le liáng
句歌词和旋律反映了梁
shān hǎo hàn men chéng zhì tān guān wū
山好汉们惩治贪官污
lì hé dì zhǔ è bà de zhuī qiú
吏和地主恶霸的追求。

B.ຍັງມີ“ເມື່ອເຫັນຄວາມບໍ່ທ່ຽງທຳກໍຮ້ອງຄຳລາມບາດໜຶ່ງ,ເຫັນຄວນຕີກັນກໍຕີໂລດ,ທຳມາຫາກິນຜ່ານຜ່າຟ້າຝົນລົມແດງ”.ຄຳສັບເພງປະໂຫຍກນີ້ໄດ້ສ່ອງແສງການສະແຫວງຫາຂອງພວກລູກຜູ້ຊາຍພູລຽງຊານເພື່ອລົງໂທດເຈົ້າຂຸນມູນນາຍເຈົ້ານາຍສໍ້ລາດບັງຫຼວງ ແລະ ເຈົ້າທີ່ດິນຜູ້ທີ່ເປັນອັນທະພານ.

shì de dāng shí yǐ gāo qiú wéi shǒu de
A. 是的。当时以高俅为首的
fǔ bài jí tuán cán hài zhōng liáng qī
腐败集团，残害忠良，欺
yā liáng shàn pò shǐ hěn duō cháo tíng
压良善，迫使很多朝廷
zhōng liáng yě tóu bèn liáng shān lái
忠良也投奔梁山。来
zì gè jiē céng de hǎo hàn men dǎ chū tì
自各阶层的好汉们打出“替
tiān xíng dào de qí hào shì tú jiàn lì
天行道”的旗号，试图建立
yí gè gōng píng zhèng yì méi yǒu yā pò
一个公平正义，没有压迫
de hǎo wáng cháo
的好王朝。

A.ແມ່ນແລ້ວ.ສະໄໝນັ້ນແມ່ນກຸ່ມສໍ້ລາດບັງຫຼວງໂດຍແມ່ນກາວຊຽວເປັນຫົວໂປ້ນັ້ນທຳລາຍວັງຫານຂຸນນາງທີ່ຈົ່ງຮັກພັກດີ,ກົດຂີ່ປະຊາຊົນ,ບັງຄັບຂຸນນາງທີ່ຈົ່ງຮັກພັກດີໃນລາຊະວົງເປັນຈຳນວນຫຼວງຫຼາຍກໍໄດ້ຂຶ້ນສູ່ພູລຽງຊານ,ບັນດາລູກຜູ້ຊາຍທີ່ມາຈາກທຸກຊັ້ນວັນນະໄດ້ຊູຄັນທຸງ“ຕາງຟ້າສ້າງກຸສົນ”,ຫວັງຢາກສ້າງຕັ້ງລາຊະວົງທີ່ດີທີ່ມີຄວາມເປັນທຳ ແລະ ບໍ່ມີການກົດຂີ່ລາຊະວົງໜຶ່ງຂຶ້ນ.

duì de shēng sǐ zhī jiāo yī wǎn jiǔ wā
B. 对的。“生死之交一碗酒哇”，
bù fēn guì jiàn yì wǎn jiǔ wā de gē cí
“不分贵贱一碗酒哇”的歌词
jiù chōng fèn biǎo xiàn le nà shì jī xù
就充分表现了纳士，积蓄
lì liang de hào zhào lì tā men xī wàng
力量的号召力，他们希望
yǒu yì tiān néng gòu jiàn lì rén ren
有一天能够建立人人
píng děng de lǐ xiǎng shè huì
平等的理想社会。

B.ແມ່ນຖືກຕ້ອງແທ້,ສັບເພງ“ສ່ຽວຮ່ວມເປັນຮ່ວມຕາຍເຫຼົ້າຖ້ວຍໜຶ່ງ”,“ບໍ່ຈຳແນກຖານະສູງຫຼືຖານະຕ່ຳເຫຼົ້າຖ້ວຍໜຶ່ງ”ກໍໄດ້ສະແດງໃຫ້ເຫັນກຳລັງປຸກລະດົມຮັບຄົນເກັ່ງທ້ອນໂຮມກຳລັງຂອງພວກລູກຜູ້ຊາຍລຽງຊານ,ພວກເຂົາເຈົ້າປາຖະໜາມີມື້ໜຶ່ງສາມາດສ້າງຕັ້ງສັງຄົມອຸດົມຄະຕິທີ່ທຸກໆຄົນມີຄວາມສະເໝີພາບ.

## 二、词汇积累 ທ້ອນໂຮມໄວ້ຄຳສັບເທື່ອລະໜ້ອຍ

hù shi
**护士** ພະຍາບານ

hù shi zài zhōng guó bèi zūn chēng wéi
护士在中国被尊称为
bái yī tiān shǐ
“白衣天使”。

ນາງພະຍາບານຢູ່ຈີນຮຽກວ່າ“ທູດສະຫວັນເສື້ອສີຂາວ”(ນາງຟ້າເສື້ອສີຂາວ).

hù xiāng
**互相** ເຊິ່ງກັນ ແລະ ກັນ

hù xiāng bāng zhù
互相帮助。

ຊ່ວຍເຫຼືອເຊິ່ງກັນ ແລະ ກັນ.

huái yí
**怀疑** ສົງໃສ

wǒ huái yí tiān qì yù bào de zhǔn què
我怀疑天气预报的准确
xìng
性。

ຂ້ອຍສົງໃສຄວາມຖືກຕ້ອງແມ່ນຢຳຂອງພະຍາກອນອາກາດ.

huí yì
**回忆** ຫວນຄິດເຖິງ

zhōng guó yóu kè yǒu xǔ duō guān yú lǎo
中国游客有许多关于老
wō de měi hǎo huí yì
挝的美好回忆。

ແຂກທ່ອງທ່ຽວຈີນຫວນຄິດເຖິງສິ່ງທີ່ດີງາມຂອງເມືອງລາວ.

huó dòng
**活动** ການເຄື່ອນໄຫວ

lǎo wō wàn xiàng dì èr jiè hàn yǔ gē qǔ
老挝万象“第二届汉语歌曲
bǐ sài huó dòng yuán mǎn jié shù
比赛”活动圆满结束

ການເຄື່ອນໄຫວແຂ່ງຂັນເພງຈີນຄັ້ງທີ 2 ໄດ້ສິ້ນສຸດຢ່າງງົດງາມທີ່ວຽງຈັນລາວ.

## 三、汉语知识 ຄວາມຮູ້ພາສາຈີນ

中国古典名著《水浒传》 作者：施耐庵（公元1296－1372年）

《ນິທານສ້ອງກັ້ງ》ບົດປະພັນທີ່ມີຊື່ສຽງໂດ່ງດັງໃນສະໄໝບູຮານຂອງຈີນແຕ່ງໂດຍ: ຊືນາຍອານ (shi nai an) (ປີ ຄ.ສ 1296-1372).

故事梗概与人物介绍（2）：

晁盖等人上梁山后，派遣绰号“赤发鬼”的刘唐给宋江送来书信及黄金百两酬谢，宋江只象征性地留下一块黄金和书信。不料，此信落入其妾阎婆惜之手。阎婆惜本有外遇，得知宋江与梁山泊“强盗”有来往，便百般要挟。宋江一怒之下，杀了阎婆惜，逃奔绰号“小旋风”的好友柴进，并得以结识因打死人也在柴进府上避祸的武松。

武松后来得知被打之人并没有死，就回阳谷县探兄。深夜经过一个虎狼出没的荒山景阳冈时，用拳头打死了吃人猛虎，一时名声大噪，被聘为阳谷县都头。武松在阳谷县街头巧遇失散多年的胞兄武大。武大已娶潘金莲为妻，风情万种的潘金莲见武松人材出众，百般勾引，为武松拒绝。后乘武松外出公干，潘金莲私通西门庆，毒死了武大。武松归后察知其情，杀了西门庆和潘金莲，给兄长报仇。事后他主动去县衙自首，被发配到孟州。在孟州结识了开酒店的施恩，为友报仇痛打欺行霸市的蒋门神，后遭蒋门神买通官员张都监等暗害，再度发配。蒋门神和张都监仍不放过武松，派来杀手追踪他。武松杀了蒋、张派来的杀手，并返回张府，在鸳鸯楼刀劈了正在喝酒作乐的几个仇人。后来在张青、孙二娘帮助下易装行者（云游的和尚就叫“行者”），行走江湖。

宋江告别柴进，投靠清风寨寨主花荣后，又被人陷害，发配江州。经好友戴宗介绍，结识了“黑旋风”李逵、“浪里白条”张顺等好汉，每日与大家喝酒聊天。一日酒醉后在长江之滨的浔阳楼题诗发泄心中怨言，不料被人告发后判为死罪，幸得梁山众英雄法场相救。宋江得救后执意要回家探父，又迭遭危险，在走投无路的情况下终于上了梁山。

（未完待续）

## ເນື້ອໃນຫຍໍ້ຂອງນິທານ ແລະ ການແນະນຳບຸກຄົນ (2)

ຫລັງຈາກຊາວໄກ ແລະ ຜູ້ອື່ນໆຂຶ້ນສູ່ພູລຽງຊານແລ້ວ, ໄດ້ແຕ່ງຕັ້ງລິວຖາງຜີຜົມແດງສົ່ງຈົດໝາຍໃຫ້ສ້ອງກັ້ງ ແລະ ສົ່ງຄຳໃຫ້ 100 ສະລຶງເປັນຄ່າຕອບແທນ, ສ້ອງກັ້ງພຽງແຕ່ຮັບເອົາຈົດໝາຍ ແລະ ຄຳກ້ອນໜຶ່ງເພື່ອເປັນສັນຍາລັກ, ໂດຍບໍ່ນຶກເຖິງຈົດໝາຍນີ້ຕົກຢູ່ໃນກຳມືເມຍນ້ອຍຢຽນໂພສີຂອງລາວ, ແທນທີ່ວ່າ, ຢຽນໂພສີມີລ່ານສວນນອກບ້ານ, ໄດ້ຮູ້ສ້ອງກັ້ງມີການພົວພັນກັນກັບ"ໂຈນ"ຂອງພູລຽງຊານ, ເລີຍບີບບັງຄັບສ້ອງກັ້ງຢ່າງຮຸນແຮງ, ສ້ອງກັ້ງ ໂມໂຫຢ່າງໃຫຍ່ກໍຂ້າຢຽນໂພສີຕາຍ, ໜີໄປຫາເພື່ອນໄຊຈິນທີ່ມີສາຍານາມຊຽວຊວານຟົງ, ແລະ ໄດ້ຮູ້ກັນກັບວູຊົມຍ້ອນຕີຄົນຕາຍມາລີ້ໄພຢູ່ເຮືອນໄຊຈິນ.

ຕໍ່ມາ, ວູຊົມໄດ້ຮູ້ຜູ້ຖືກຕີບໍ່ໄດ້ຕາຍ, ກໍກັບເມືອເມືອງຢາງງູເພື່ອຢ້ຽມອ້າຍ, ມື້ນື່ງໜຶ່ງທ່ຽງຄືນໄດ້ຜ່ານຈິງຢາງກັ້ງພູຮົກຮ້າງທີ່ມີເສືອໝາໄນອອກມານັ້ນ, ວູຊົມຕີໂຕເສືອທີ່ກິນຄົນນັ້ນຕາຍດ້ວຍກຳປັ້ນ, ບາດດຽວ, ຊື່ສຽງຂອງວູຊົມກ້ອງກັງວານ, ຖືກຮັບສະໝັກເປັນຫົວໜ້າທະຫານນະຄອນບ້ານເມືອງຢາງງູ. ວູຊົມໄດ້ພົບກັນກັບວູດາອ້າຍຄີງຂອງລາວທີ່ໄດ້ຫ່າງຈາກກັນຫຼາຍປີຢ່າງບັງເອີນຢູ່ຖະໜົນເມືອງຢາງງູ, ວູດາໄດ້ເອົາພັນຈິນລຽນເປັນເມຍແລ້ວ, ພັນຈິນລຽນທີ່ເປັນຄົນເຈົ້າຊູ້ໄດ້ເຫັນວູຊົມເປັນຄົນຫຼໍ່ກວ່າໝູ່, ຊັກນຳຫຼາຍຮູບຫຼາຍແບບ, ຖືກວູຊົມປະຕິເສດ. ຕໍ່ມາ, ວູຊົມອອກໄປເຮັດວຽກລັດຖະການ, ພັນຈິນລຽນລັບລອບເປັນຊູ້ກັນກັບຊີເມີນຊິນ, ໃຊ້ຢາເບື່ອໃສ່ໃຫ້ວູດາຕາຍ, ວູຊົມກັບມາສຳຫລວດຄະດີໃຫ້ຄັກແນ່ແລ້ວ, ຂ້າຊີເມີນຊິນ ແລະ ພັນຈິນລຽນຕາຍເພື່ອລ້າງແຄນໃຫ້ອ້າຍ. ພາຍຫລັງກໍລະນີ, ວູຊົມໄປສາລາວ່າການເມືອງສະເໜີຕົວເອງ, ຖືກລົງໂທດເຂົ້າຄຸກຢູ່ເມືອງໂຈວ. ຢູ່ເມືອງໂຈວໄດ້ຮູ້ຈັກກັນກັບຊີເອີນທີ່ເຮັດຮ້ານຂາຍເຫຼົ້າ, ເພື່ອລ້າງແຄນໃຫ້ອ້າຍ, ໄດ້ຕີຈຽງເມີນເຊີນທີ່ຂົ່ມເຫັງບັງບຽດຄົນອື່ນເກີນໄປຢ່າງເຈັບແສບ. ພາຍຫລັງຖືກຈຽງເມີນເຊີນຊື້ຈ້າງເຈົ້ານາຍຈາງຕູຈຽນ ແລະ ຜູ້ອື່ນໆລອບໃສ່ຮ້າຍກໍຖືກໂທດອີກ, ຈຽງເມີນເຊີນ ແລະ ຈາງຕູຈຽນຍັງຄົງບໍ່ປ່ອຍໃຫ້ວູຊົມ, ສົ່ງອັນທະພານໄລ່ຕີວູຊົມ, ວູຊົມຂ້າອັນທະພານຕາຍທີ່ຈຽງເມີນເຊີນ ແລະ ຈາງຕູຈຽນແຕ່ງຕັ້ງມານັ້ນ, ແລ້ວກັບເມືອສູ່ທຳນຽບຈາງຕູຈຽນ, ຂ້າຄູ່ອາຄາດທີ່ກຳລັງດື່ມເຫຼົ້າຫຼາຍຄົນຕາຍດ້ວຍດາບຢູ່ຕຶກຢວນຢາງ. ໃຕ້ການຊ່ວຍເຫຼືອຈາກຈາງຊິນ ແລະ ຊຸນເອີນຽມແຕ່ງຕົວເປັນນັກບວດເດີນທາງທ່ອງໄປທົ່ວທຸກມູມໂລກ.

ສ້ອງກັ້ງລ່າອອກຈາກໄຊຈິນບາກໜ້າໄປຂໍອາໄສຢູ່ນຳຮວາຢົງທີ່ເປັນເຈົ້າຄ້າຍຊິນຟົງໄຈ້, ແລະ ຖືກຄົນໃສ່ຮ້າຍອີກ, ລົງໂທດສົ່ງໄປເມືອງຈຽງໂຈວເຂົ້າຄຸກອີກ, ໂດຍຜ່ານເພື່ອນໄຈຈົງແນະນຳໄດ້ຮູ້ກັນກັບ"ເຫີຊວານຟົງ"ລີຄຸ້ຍ, "ລັງລີໄປຫຼຽວ"ຈາງຊຸນ ແລະ ລູກຜູ້ຊາຍຜູ້ອື່ນໆ, ທຸກມື້ດື່ມເຫຼົ້າລົມກັນກັບພວກເຂົາເຈົ້າ. ມື້ນື່ງໜຶ່ງ, ຫລັງຈາກເມົາເຫຼົ້າແລ້ວ, ໄດ້ຂຽນກາບກອນລະບາຍຄວາມເວົ້າທີ່ແຄ້ນໃຈຂອງຕົນໃນຕຶກຊຸນຢາງທີ່ແຄມແມ່ນ້ຳຢາງຊີກຽງ, ບໍ່ນຶກເຖິງວ່າຈະຖືກຄົນກ່າວຫາຖືກລົງໂທດປະຫານຊີວິດ. ເປັນແຕ່ຈົ່ງບຸນ, ໄດ້ຮັບການກູ້ເອົາຊີວິດຈາກບັນດາວິລະຊົນພູລຽງຊານທີ່ສະໜາມຂ້າຄົນ. ຫລັງຈາກສ້ອງກັ້ງໄດ້ຮັບການກູ້ເອົາຊີວິດແລ້ວ, ຕັ້ງໃຈຢາກກັບບ້ານຢ້ຽມພໍ່, ກໍໄດ້ພົບອັນຕະລາຍອີກ, ໃຕ້ສະພາບການບໍ່ມີທາງອອກຈົນເຖິງອັດຕະຄັດຂັດສົນແລ້ວ, ສຸດທ້າຍຈຶ່ງຂຶ້ນໄປສູ່ພູລຽງຊານ.

(ອ່ານຕໍ່ສະບັບໜ້າ)

听语音请登陆 ຟັງສຽງອັດ ເຊີນຂຶ້ນເວັບໄຊ :http://la.rivermk.com





# 云南阳光道桥股份有限公司

## YUNNAN SUNNY ROAD & BRIDGE CO.,LTD

## ບໍລິສັດຂົວທາງຫຸ້ນສ່ວນຢາງກ່ວາງຢຸນນານຈຳກັດ




具有五十多年历史的云南阳光道桥股份有限公司,拥有公路工程施工总承包一级资质及对外经济合作业务经营权。累计完成施工里程5000多公里，其中高等级公路1800多公里，获鲁班奖、中国首届诚信企业等多种奖项。通过了ISO9001质量管理体系、ISO14001环境管理体系和OHSAS18001职业安全卫生管理体系国际认证。所承建的工程遍布云南省各地州、中国众多省份和亚非许多国家。我们愿与世界各国、特别是东南亚各国的经济组织、高等院校、科研单位、政府机构等携手开展多层次、宽领域的合作，优势互补，共赢发展。

地址：中国 昆明市官南大道1588号
电话：0871-67017107　67017108
网址：WWW.YNROAD.COM

ບໍລິສັດຂົວທາງຫຸ້ນສ່ວນຢາງກ່ວາງຢຸນນານຈຳກັດທີ່ມີປະຫວັດການມາໄດ້ 50 ກວ່າປີ ມີຄຸນວຸດທີຊັ້ນ 1 ໃນການຮັບເໝົາລວມວິສະວະກຳສ້າງທາງ ແລະ ມີສິດດຳເນີນທຸລະກິດໃນການຮ່ວມມືດ້ານເສດຖະກິດກັບຕ່າງປະເທດ.ລວມທັງໝົດໄດ້ສ້າງທາງສຳເລັດໄດ້ 5,000 ກວ່າຫຼັກກິໂລແມັດ,ໃນນັ້ນ,ທາງຫຼວງລະດັບຊັ້ນສູງ1,800 ກວ່າກິໂລແມັດ,ໄດ້ຮັບລາງວັນຫຼາຍປະເພດເຊັ່ນ:ລາງວັນລູປານ,ລາງວັນວິສາຫະກິດທີ່ເຊື່ອໃຈໄດ້ຄັ້ງທຳອິດຂອງຈີນ.ໄດ້ຜ່ານການຮັບຮອງຈາກລະບົບຄຸ້ມຄອງຄຸນນະພາບ ISO9001,ລະບົບຄຸ້ມຄອງສະພາບແວດລ້ອມ ແລະ ລະບົບສາກົນຄວາມປອດໄພ ແລະ ອານາໄມວິຊາຊີບ.ໂຄງການທີ່ຮັບເໝົານັ້ນແມ່ນຢູ່ບັນດາກິ່ງແຂວງ ແລະ ນະຄອນທົ່ວແຂວງຢຸນນານ,ບັນດາຫຼາຍແຂວງຂອງຈີນ ແລະ ຫຼາຍປະເທດໃນອາຊີແລະອາຟຼິກກາ.

ພວກເຮົາມີຄວາມຍິນດີຮ່ວມກັນກັບບັນດາອົງການຈັດຕັ້ງເສດຖະກິດ,ມະຫາວິທະຍາໄລ ແລະ ໂຮງຮຽນຊັ້ນສູງ,ອົງການຄົ້ນຄວ້າວິທະຍາສາດ,ອົງການປົກຄອງຂອງໂລກ ແລະ ຂອງບັນດາປະເທດອາຊີອາຄະເນຈັບມືກັນເປີດການຮ່ວມມືຫຼາຍຊັ້ນລະດັບ ແລະ ຂົງເຂດຢ່າງກວ້າງຂວາງ,ມີທ່າແຮງທົດແທນກັນ,ພັດທະນາຮ່ວມກັນໄດ້ຮັບຜົນປະໂຫຍດພ້ອມກັນ.

ສະຖານທີ່:ຖະໜົນກວນນານເລກທີ່ 1588 ນະຄອນຄຸນມິງ ສປ ຈີນ
ເບີໂທ: 0086-871-67017107　67017108
ເວັບໄຊ: WWW.YNROAD.COM

**做人守德　感恩做人　　做事守道　负责做事**

ເປັນຄົນຕ້ອງມີຄຸນສົມບັດ　ຮູ້ຕອບບຸນແທນຄຸນ　ເຮັດວຽກປະຕິບັດຕາມຫຼັກການ　ກ້າແບກຫາບໜ້າທີ່ຮັບຜິດຊອບ

万象中心 ວຽງຈັນເຊັນເຕີ

# 开启新的时代

## ເປີດໂລກແຫ່ງຍຸກສະໄໝໃໝ່

首个一站式购物中心，24小时繁华，永不落幕；
ສູນລວມສິນຄ້າແບຼນເນມແຫ່ງທຳອິດ.ຄຶກຄື້ນຕະຫຼອດເວລາ. ບໍ່ມີທີ່ສິ້ນສຸດ

## 万象中心盛大招商进行中

ວຽງຈັນເຊັນເຕີພວມດຳເນີນການພົວພັນຫາລູກຄ້າຢ່າງເປັນທາງການ

品牌大商抢先入驻，邀您共赢财富盛宴
ທຸລະກິດການຄ້າຂະໜາດໃຫ່ຍຍາດແຍ່ງກັນເຂົ້າມາລົງທຶນ.
ເຊີນທ່ານຮ່ວມກັນເຂົ້າມາຊື່ນຊົມກັບຄວາມທັນສະໄໝຂອງສູນການຄ້າລະດັບສາກົນ

## 铂金级写字楼，即将隆重揭幕

ໂຮງຮູບເງົາ PLATINUM ແລະ
ຕຶກສຳນັກງານຫ້ອງການ ກໍ່ໃກ້ຈະເປີດໂຕຢ່າງອະລັງການ

首席国际品质商务中心 · 企业形象的平台 · 企业成长的平台
ເປັນສູນກາງຜູ້ນຳສິນຄ້າແບຼນເນມລະດັບສາກົນ.
ສູນລວມພາບລັກແລະເປັນເວທີການເຕີບໃຫ່ຍຂະຫຍາຍຕົວຂອງສຳນັກງານວິສາຫະກິດ

· 马来西亚铂金影院　PLATINUM Cinema
· 泰国最大零售代理商CMG集团　Central Marketing Group ( CMG )
· 泰国服装品牌代理龙头ICC集团　International Public Company ( ICC )

SHISEIDO　CLINIQUE　OMEGA　Dior　GUCCI　MAC　Lee
LANCÔME　ESTÉE LAUDER　ROLEX　RADO　Guy Laroche　benefit

VIENTIANE CENTER
萬象中心



Hotline/+856 021-
217666 212333

投资商：云南建工集团有限公司暨云南省海外投资有限公司
ຜູ້ລົງທຶນໂຄງການ: ບໍລິສັດວິສະວະກຳກໍ່ສ້າງຢູນນານກຸຣບຈຳກັດ-ບໍລິສັດລົງທຶນຕ່າງປະເທດແຂວງຢູນນານຈຳກັດ
INVESTORS: YUNNAN CONSTRUCTION ENGINEERING GROUP CO.,LTD. AND YUNNAN PROVINCIAL OVERSEAS INVESTMENT CO.,LTD.

吉达蓬集团公司
ບໍລິສັດກິຣຕະພົງກຸຣບຈຳກັດ
KRITTAPHONG GROUP CO.,LTD.

整合推广：[my feel 麦飞广告]

开发商：北隆赞湖综合发展有限公司
ຜູ້ພັດທະນາໂຄງການ: ບໍລິສັດພັດທະນາສູນເສດທະກິດການຄ້າຄົບວົງຈອນໜອງຈັນຕອນເໜືອຈຳກັດ
DEVELOPER: NORTH NONGCHAN COMPLEX DEVELOPMENT CO.,LTD.

项目地址：老挝万象市库央路
ທີ່ຢູ່ໂຄງການ: ຖະໜົນຄູວຽງ-ນະຄອນຫຼວງວຽງຈັນ
PROJECT ADDRESS:KHOU VIENG ROAD, VIENTIANE, LAOS


ການບິນລາວ
Lao Airlines
Lao Airlines
ດານັງ (峴港)
DANANG
4/12/2012
ກວາງເຈົາ (廣州)
GUANGZHOU
29/11/2012
ບູຊານ (釜山)
BUSAN
30/12/2012
ເຊອຸນ (首尔)
SEOUL
21/12/ 2012
www.laoairlines.com
Tel:856-21 212051-4